| ໝວດວິທີສອນ | ສາຍສ້າງຄູປະຖົມ |
|---|---|

# ເອກະສານປະກອບການສອນ

# ການສອນວິທະຍາສາດ ແລະ ສິ່ງແວດລ້ອມ 2












| ລະບົບ 4 ປີ | ປີທີ 3 |
|---|---|

ວິທະຍາໄລຄູສາລະວັນ

ໝວດວິທີສອນ

# ການສອນວິທະຍາສາດ ແລະ ສິ່ງແວດລ້ອມ 2

ສາຍສ້າງຄູປະຖົມ

| ລະບົບ 4 ປີ | ປີທີ 3 |
|---|---|

ຮຽບຮຽງໂດຍ:

ຊອ ປທ ນ ສີງອຳໄພ ພິມພາພອນ

ກວດແກ້ໂດຍ:

ຊອ ປທ ມອນໄຊ ຂັນທະຈັກ

ຊອ ນ ອິນປອນ ເພັງສຸວັນ

ເພັດສະໝອນ ແກ້ວບຸບຜາໄລ

ວິທະຍາໄລຄູສາລະວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ.....82.....ສພ.ວລ

ລົງວັນທີ...?.?.JAN......2022

# ເອກະສານຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽບຮຽງປຶ້ມໃນລາຍວິຊາການສອນວິທະຍາສາດ ແລະ ສິ່ງແວດລ້ອມ2ສໍາລັບນັກສຶກສາລະບົບ 12+4 ສາຍປະຖົມປີທີ 3

- ອີງຕາມ: ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກໍາສະພາວິທະຍາສາດຂອງໂຮງຮຽນວິທະຍາໄລຄູສາລະວັນປະຈໍາສົກຮຽນ 2020-2021.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກໍາມະການ ເຫັນວ່າ ປຶ້ມຮຽບຮຽງປຶ້ມມີຄວາມຖືກຕ້ອງຕາມຕາມເນື້ອໃນຫຼັກສູດທີ່ໄດ້ກໍາ. ສະນັ້ນ, ສະພາວິທະຍາສາດຈິ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນໍາໃຊ້ເຂົ້າໃນກິດຈະກໍາການຮຽນ - ການສອນໃນໂຮງຮຽນວິທະຍາໄລຄູສາລະວັນ.

| ຄະນະກໍາມະການກວດສອບ | ລາຍເຊັນ |
|---|---|
| 1. ອຈ ນ ສົມປອງ ແສນທະວີສຸກ | [signature] |
| 2. ຊອ ປທ ສົມບຸນ ຊາມຸນຕີ | [signature] |
| 3. ອຈ ນ. ລິດສະໄໝ ສິດທິຈັກ | [signature] |

ປະທານສະພາວິທະຍາສາດ

[signature]

ສົມບຸນ ສີວິສົງຄາມ

CS ສແກນດ້ວຍ CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ຫ້ອງການວິທະຍາສາດສັງຄົມ

ເລກທີ...355......ຫກ.ຂປ

ລົງວັນທີ...06 JAN 2022

## ເອກະສານຮັບຮອງ

### ອະນຸມັດຜ່ານການຮັບຮອງການຮຽບຮຽງປື້ມການສອນວິທະຍາສາດ ແລະ ສິ່ງແວດລ້ອມ2

### ສໍາລັບນັກສຶກສາລະບົບ 12+4 ສາຍປະຖົມປີທີ 3

| ລໍາດັບ | ຊື່ຫົວຂໍ້ | ຫ້ອງການ | ຜູ້ຄົ້ນຄວ້າວິໄຈ | ຜູ້ກວດແກ້ |
|---|---|---|---|---|
| 1 | ການສອນວິທະຍາສາດ ແລະ ສິ່ງແວດລ້ອມ2 | ປະຖົມ-ອະນຸບານ | ຊອ ປທ ນ.ສີງອໍາໄພ ພົມພາພອນ | ປທ ມອນໄຊ ຂັນທະຈັກ<br>ນ. ເພັດສະໝອນ ແກ້ວບຸບຜາໄລ<br>ນ. ອິນປອນ ເພັງສຸວັນ |

| ຄະນະກໍາມະການກວດສອບ | ລາຍເຊັນ |
|---|---|
| 1. ຊອ ປທ ມອນໄຊ ຂັນທະຈັກ | |
| 2. ທ່ານ ນ ເພັດສະໝອນ ແກ້ວບຸບຜາໄລ | |
| 3. ທ່ານ ນ. ອິນປອນ ເພັງສຸວັນ | |

ຮ **ຫົວໜ້າຫ້ອງການອະນຸບານ-ປະຖົມ**

ແສນສັກ ບຸນມີ

...nhac.. BOUNMY

CS Scanned with CamScanner

# ຄຳນຳ

ວິຊາການສອນວິທະຍາສາດ ແລະ ສິ່ງແວດລ້ອມ 2 ແມ່ນໜຶ່ງໃນຈຳນວນລາຍວິຊາທີ່ຈັດເຂົ້າໃນຫຼັກສູດການຮຽນ-ການສອນສຳລັບການສ້າງຄູລະບົບ 12+4 ສາຍປະຖົມ ປີທີ 3 ທີ່ກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາໄດ້ວາງອອກ.

ການສອນວິທະຍາສາດ ແລະ ສິ່ງແວດລ້ອມ 2 ແມ່ນວິຊາໜຶ່ງທີ່ເຮັດໜ້າທີ່ໄດ້ການສຶກສາຄົ້ນຄວ້າກ່ຽວກັບຄວາມໝາຍຄວາມສຳຄັນ, ວິທີການສອນກ່ຽວກັບໂລກອ້ອມຕົວສັງຄົມ ຫຼື ວິທະຍາສາດສັງຄົມ ທີ່ປະກອບມີວິຊາພູມສາດ, ປະຫວັດສາດ, ວິທະຍາສາດການເມືອງ, ຄຸນສົມບັດ ແລະ ວັດທະນະທຳ. ຄຽງຄູ່ກັນນັ້ນການສອນວິທະຍາສາດ ແລະ ສິ່ງແວດລ້ອມ2 ຍັງໄດ້ສຶກສາລົງເລິກກ່ຽວກັບການແຕ່ງບົດສອນ, ກາວິເຄາະບົດສອນ (ວິເຄາະຫຼັກສູດ), ການທົດລອງສອນ ແລະ ການຖອດຖອນບົດຮຽນພາຍຫຼັງດຳເນີນການທົດລອງສອນ. ເນື້ອໃນບົດຮຽນທັງໝົດແບ່ງອອກເປັນ 6 ບົດ ໃຊ້ເວລາສອນທັງໝົດ 48 ຊົ່ວໂມງ.

ຄະນະຜູ້ຮຽບຮຽງຫວັງຢ່າງຍິ່ງວ່າການຮຽບຮຽງຄັ້ງນີ້ຈະເປັນປະໂຫຍດແກ່ຜູ້ທີ່ມີຄວາມສົນໃຈກ່ຽວກັບການຄົ້ນຄວ້າເລື່ອງການສອນສຳລັບວິທະຍາສາດສັງຄົມ, ແລະ ເພື່ອເຮັດໃຫ້ການຮຽນຮຽງສົມບູນຍິ່ງຂຶ້ນພວກເຮົາຍິນດີຢ່າງຍິ່ງທີ່ຈະຮັບເອົາຄຳຕຳນິຕິມຊົມຈາກບັນດາທ່ານ.

# ສາລະບານ


ຄຳນຳ ------------------------------------------------------------------------------------------ -----a

ສາລະບານ -------------------------------------------------------------------------------------- -----b

ບົດທີ 1 ການສອນວິຊາໂລກອ້ອມຕົວສັງຄົມຊັ້ນປະຖົມສຶກສາ ------------------------------------- ----- 1

1. ຄວາມໝາຍຂອງການສອນໂລກອ້ອມຕົວສັງຄົມ.------------------------------------- ----- 1
2. ຫຼັກການສອນໂລກອ້ອມຕົວສັງຄົມ ------------------------------------------------- -----2
3. ການນຳໃຊ້ວິທີສອນເຂົ້າໃນການສອນໂລກອ້ອມຕົວສັງຄົມ---------------------------- -----6
4. ສື່ການສອນໂລກອ້ອມຕົວສັງຄົມ--------------------------------------------------- ----17
5. ກິດຈະກຳ-ການຮຽນການສອນໂລກອ້ອມຕົວສັງຄົມ----------------------------------- --- 20
6. ການວັດ ແລະ ປະເມີນຜົນວິຊາໂລກອ້ອມຕົວສັງຄົມ --------------------------------- --- 20

ບົດທີ 2 ການສອນພູມສາດ ---------------------------------------------------------------------- --- 22

1. ການສອນກ່ຽວກັບແຜນທີ່ປະເທດລາວ ປ4 -------------------------------------- --- 23
2. ການສອນກ່ຽວກັບພູມສັນຖານປະເທດລາວ ປ 5----------------------------------- --- 29
3. ການສອນກ່ຽວກັບແມ່ນ້ຳລຳເຊ ປ5 ----------------------------------------------- --- 35
4. ສອນທົດລອງ ແລະ ຖອດຖອນບົດຮຽນ -------------------------------------------- --- 40
5. ການສອນກ່ຽວກັບການປົກປັກຮັກສາປ່າໄມ້ ແລະ ສັດປ່າ ປ4 --------------------- --- 40
6. ການສອນກ່ຽວກັບການຄ້າ ແລະ ການບໍລິການ ປ5 --------------------------------- --- 45
7. ສອນທົດລອງ ແລະ ຖອດຖອນບົດຮຽນ -------------------------------------------- ----51

ບົດທີ 3 ການສອນກ່ຽວກັບປະເທດລາວ ---------------------------------------------------------- --- 52

1. ການສອນກ່ຽວກັບວັດທະນະທຳ ແລະ ຮີດຄອງປະເພນີ ປ 4------------------------ --- 52
2. ການສອນກ່ຽວກັບເມືອງລາວບູຮານ ປ 4 ------------------------------------------ --- 59
3. ສອນທົດລອງ ແລະ ຖອດຖອນບົດຮຽນ-------------------------------------------- --- 64
4. ການສອນກ່ຽວກັບການທ້ອນໂຮມແຜ່ນດິນລາວພາຍໃຕ້ການນຳພາຂອງເຈົ້າຟ້າງຸ່ມ ປ4 --- 64
5. ສອນທົດລອງ ແລະ ຖອດຖອນບົດຮຽນ-------------------------------------------- --- 69

ບົດທີ 4 ການສອນກ່ຽວກັບມໍລະດົກ ແລະ ວັດທະນະທຳ--------------------------------------- --- 70

1. ການສອນກ່ຽວກັບມໍລະດົກ ແລະ ວັດທະນະທຳສອນທົດລອງ ແລະ ຖອດຖອນບົດຮຽນ70
2. ສອນທົດລອງ ແລະ ຖອດຖອນບົດຮຽນ ----------------------------------------- --- 76

ບົດທີ 5 ການສອນກ່ຽວກັບການຈັດລະບົບການປົກຄອງໃນລາວ------------------------------------ --- 77

1. ການສອນກ່ຽວກັບການຈັດລະບົບການປົກຄອງໃນລາວ ປ 5 ------------------------ --- 77
2. ສອນທົດລອງ ແລະ ຖອດຖອນບົດຮຽນ-------------------------------------------- --- 83

ບົດທີ 6 ການສອນກ່ຽວກັບສິດ ແລະ ພັນທະຂອງພົນລະເມືອງ ----------------------------------- --- 84

1. ການສອນກ່ຽວກັບສິດ ແລະ ພັນທະຂອງພົນລະເມືອງ ------------------------------ --- 84

2. ສອນທົດລອງ ແລະ ຖອດຖອນບົດຮຽນ---------------------------------------------- ----91
ເອກະສານອ້າງອີງ ------------------------------------------------------------------------------------ --- 93

# ບົດທີ 1
# ການສອນວິຊາໂລກອ້ອມຕົວສັງຄົມຊັ້ນປະຖົມສຶກສາ

## ຈຸດປະສົງ Object

ເພື່ອໃຫ້ນັກສຶກສາສາມາດ

- ອະທິບາຍຄວາມໝາຍຂອງການສອນໂລກອ້ອມຕົວທາງສັງຄົມໄດ້
- ບອກຫຼັກການສອນໂລກອ້ອມຕົວໄດ້
- ບອກວິທີສອນຕ່າງໆ ແລະ ອະທິບາຍນຳໃຊ້ວິທີສອນຕ່າງໆເຂົ້າໃນການສອນໂລກອ້ອມຕົວທາງສັງຄົມໄດ້ຢ່າງຖືກຕ້ອງ.
- ບອກສື່ ແລະ ນຳໃຊ້ສື່ເຂົ້າໃນການສອນໂລກອ້ມຕົວທາງສັງຄົມໄດ້
- ບອກກິດຈະກຳໃນການຈັດການຮຽນ-ການສອນ ແລະ ບອກວິທີການໃນການວັດ ແລະ ປະເມີນຜົນໃນການຮຽນວິຊາໂລກອ້ອມຕົວທາງສັງຄົມໄດ້

## 1. ຄວາມໝາຍຂອງການສອນໂລກອ້ອມຕົວສັງຄົມ.

ວິຊາໂລກອ້ອມຕົວສັງຄົມເປັນວິຊາທີ່ມີເນື້ອໃນກວ້າງຂວາງ ແລະ ເລິກເຊິ່ງ ກວມເອົາຄວາມຮູ້ວິຊາພູມສາດ, ປະຫວັດສາດ, ວັດທະນາທຳ-ສັງຄົມ ແລະ ວິຊາອື່ນໆ. ດ້ວຍເຫດນັ້ນໃນການຈັດການຮຽນ-ການສອນວິຊາໂລກອ້ອມຕົວສັງຄົມໃຫ້ມີປະສິດທິພາບ ຄູຜູ້ສອນຕ້ອງສາມາດເລືອກໃຊ້ວິທີສອນ ແລະ ເຕັກນິກການສອນທີ່ເຫມາະສົມເພາະວ່າວິທີສອນມີຫຼາຍວິທີໃນການດຳເນີນການສອນ ເຊັ່ນ: ວິທີສອນແບບບັນລະຍາຍ, ແບບສາທິດ, ແບບທົດລອງ, ແບບສືບສວນ-ສອບສວນ, ແບບຫນ່ວຍ, ແບບຂຶ້ນໂຄງການ ແລະ ອື່ນໆ. ແຕ່ຈະເລືອກໃຊ້ວິທີໃດນັ້ນກໍ່ຂຶ້ນຢູ່ກັບເນື້ອໃນ, ລະດັບຂອງນັກຮຽນ ແລະ ຕົວຄູເອງໂດຍທົ່ວໄປແລ້ວຄູຈະໃຊ້ເຕັກນິກການສອນຄວບຄູ່ກັບວິທີສອນເພື່ອເຮັດໃຫ້ນັກ ຮຽນເກີດມີການຮຽນຮູ້ຫຼາຍຂຶ້ນ ແລະ ເຮັດໃຫ້ການສອນມີປະສິດທິພາບ.

ການສອນແມ່ນຂະບວນການໜຶ່ງທີ່ເຮັດໃຫ້ການຮຽນ-ການສອນເກີດໝາກຜົນຕາມຈຸດປະສົງ ແລະ ເປົ້າໝາຍທີ່ຕັ້ງໄວ້. ການສອນເປັນຂະບວນການທາງວິທະຍາການທີ່ມີບົດບາດ ແລະ ມີຄວາມສຳຄັນຢ່າງຍິ່ງໃນການສຶກສາໃຫ້ແກ່ນັກຮຽນ. ຄວາມຈິງແລ້ວການສອນຄືການຈັດການຮຽນໃຫ້ນັກຮຽນໄດ້ຮຽນຮູ້ປະສົບການທີ່ມີຄຸນຄ່າ, ມີຄວາມຖືກຕ້ອງ, ເໝາະສົມ ແລະ ສາມາດນຳໄປໃຊ້ໃຫ້ເກີດປະໂຫຍດໃນການດຳລົງຊີວິດໃນສັງຄົມໄດ້. ດັ່ງນັ້ນ, ຜູ້ທີ່ມີໜ້າທີ່ໃຫ້ການສຶກສາໃນສັງຄົມ ໂດຍສະເພາະຄູອາຈານຜູ້ສອນຈຳເປັນຕ້ອງມີຄວາມຮູ້, ຄວາມເຂົ້າໃຈໃນຫຼັກການ ແລະ ເຕັກນິກກ່ຽວກັບການສອນຢ່າງແທ້ຈິງ. ແຕ່ວ່າການທີ່ຮູ້ຈັກເລືອກມານຳໃຊ້ໄດ້ດີພຽງໃດນັ້ນມັນຂຶ້ນຢູ່ກັບຄຸນສົມບັດຂອງຜູ້ສອນໄດ້ແກ່: ການມີຄວາມຮູ້, ການມີທັກສະ ແລະ ການມີຄວາມສາມາດໃນຂະບວນການຮຽນ-ການສອນທີ່ຄູເປັນຜູ້ວາງແຜນການໂດຍອາໄສຫຼັກການ, ກົດເກນ ແລະ ທິດສະດີຕ່າງໆ ເພື່ອນຳໄປໃຊ້ໃນການດຳເນີນການສອນຈຶ່ງຈະບັນລຸຕາມເປົ້າໝາຍຈຸດປະສົງຂອງການສຶກສາໃນລະດັບຕ່າງໆຂອງຫຼັກສູດ.

ການສອນໂລກອ້ອມຕົວສັງຄົມ ຫຼື ການສອນວິທະຍາສາດສັງຄົມແມ່ນແນໃສ່ໃຫ້ຜູ້ຮຽນມີຄວາມຮູ້ຕໍ່ກັບຄວາມເປັນຈິງຕ່າງໆທາງສັງຄົມມະນຸດ, ບອກໄດ້ຄວາມສໍາພັນລະຫວ່າງທໍາມະຊາດກັບສິ່ງທີ່ມະນຸດສ້າງຂຶ້ນນັ້ນແມ່ນວິວັດທະນາການ ແລະ ຄວາມຈໍາເປັນໃນການດໍາລົງຊີວິດຂອງມະນຸດ, ແນໃສ່ໃຫ້ຜູ້ສອນ ແລະ ຜູ້ຮຽນໄດ້ປະສົບການດ້ານຄວາມຮູ້, ຄວາມສາມາດໃນການຄົ້ນຄິດ, ຕັດສິນເຫດການຕ່າງໆຢ່າງມີເຫດຜົນ, ມີຄຸນນະທໍາ, ສ້າງຄວາມສາມາດໃນການສະແຫວງຫາຄວາມຮູ້, ການວິເຄາະຂໍ້ມູນ ແລະ ອຸດົມການທີ່ສັງຄົມຕ້ອງການ, ພ້ອມທັງເປັນການສຶກສາຮຽນຮູ້ທາງດ້ານພູມສາດ-ປະຫວັດສາດ-ການເມືອງ ແລະ ວັດທະນະທໍາທີ່ຈະນໍາໄປສອນໃຫ້ນັກຮຽນຕາມໂຄງຮ່າງຫຼັກສູດຊັ້ນປະຖົມສຶກສາ ແລະ ຝຶກການຈິນຕະນາການໃນການຮຽນຮູ້ວິທີການຖ່າຍທອດຄວາມຮູ້ຢ່າງຖືກຕ້ອງ, ຊັດເຈນ ແລະ ຊ່ວຍໃຫ້ໄລຍະເວລາໃນການຮຽນຮູ້ສັ້ນແຕ່ມີປະສິດທິພາບສູງ. ພ້ອມທັງແນະນໍາໃຫ້ຜູ້ຮຽນຮູ້ຈັກການນໍາໃຊ້ສື່ການຮຽນ-ການສອນ, ການຈັດກິດຈະກໍາການຮຽນ-ການສອນໃຫ້ເໝາະສົມກັບເນື້ອໃນທາງດ້ານໂລກອ້ອມຕົວສັງຄົມຢ່າງມີຫົວຄິດປະດິດສ້າງ ແລະ ສາມາດເລືອກວິທີສອນໄປນໍາໃຊ້ໃຫ້ເກີດປະໂຫຍດສູງສຸດ.

## 2. ຫຼັກການສອນໂລກອ້ອມຕົວສັງຄົມ

### 2.1. ຫຼັກການສອນພູມສາດ

ໃນການສອນໂລກອ້ອມຕົວສັງຄົມຜູ້ສອນຈຶ່ງຄວນຢຶດຖືວັດຖຸປະສົງຂອງຫຼັກສູດ, ເລືອກວິທີສອນ, ອຸປະກອນການສອນ ແລະ ກະກຽມການສອນໂດຍຄໍານຶງເຖິງຫຼັກການຕ່າງໆ.

ເພື່ອປະຕິບັດໃຫ້ໄດ້ຕາມບົດບາດ ແລະ ໜ້າທີ່ຂອງວິຊາໂລກອ້ອມຕົວ ຢູ່ຊັ້ນປະຖົມສຶກສາ ແລະ ຈຸດມຸ່ງໝາຍຂອງ ການຮຽນ - ການສອນ ແລະ ທັງເປັນການຮັບປະກັນຜົນສໍາເລັດໜ້າທີ່ອັນສູງສຸດນັ້ນ, ການສິດສອນຂອງຄູຕ້ອງປະຕິບັດຕາມບັນດາຫຼັກການທີ່ແນ່ນອນ ເພາະວ່າຫຼັກການນັ້ນແມ່ນຂໍ້ກໍານົດເບື້ອງຕົ້ນ ທີ່ມີລັກສະນະເປັນກົດເກນເພື່ອຊີ້ນໍາໃນການປະຕິບັດຫຼັກການໃດໜຶ່ງໃຫ້ໄດ້ຮັບຜົນດີໃນເວລາອັນແນ່ນອນ. ສະນັ້ນ, ຫຼັກການສອນວິຊາພູມສາດກໍ່ແມ່ນຂໍ້ກໍານົດເລີ່ມຕົ້ນທີ່ມີລັກສະນະເປັນກົດເກນ ເພື່ອຊີ້ນໍາການສອນຂອງຄູ ແລະ ການຮຽນຂອງນັກຮຽນ ເພື່ອຮັບປະກັນການສິດສອນ ແລະ ການຮຽນວິຊາພູມສາດໃຫ້ໄດ້ຮັບຜົນດີຕ້ອງຄໍານຶງເຖິງຫຼັກການຕໍ່ໄປນີ້:

- ວິຊາພູມສາດເປັນວິຊາທີ່ມີເນື້ອໃນກວ້າງຂວາງ ແລະ ເລິກເຊິ່ງ ຄູຜູ້ສອນຈະຕ້ອງຮູ້ຈັກ ຂອບເຂດ: ຂອງເນື້ອໃນ, ເຂົ້າໃຈຄວາມຄິດລວມຍອດ ແລະ ເນື້ອໃນສໍາຄັນໃຫ້ຊັດເຈນກ່ອນທີ່ຈະສອນ.
- ການສິດສອນຄວນເລີ່ມຈາກບ່ອນທີ່ຢູ່ໃກ້ຕົວ ແລ້ວຈຶ່ງຂະຫຍາຍກວ້າງຫ່າງອອກໄປຈາກສິ່ງທີ່ຄຸ້ນເຄີຍ ແລະ ຈາກປະສົບການທີ່ມີຢູ່ໃນທໍາມະຊາດທີ່ຢູ່ອ້ອມຕົວນັກຮຽນ.
- ເລີ່ມສອນຈາກສິ່ງທີ່ເປັນຮູບປະທໍາ (ສິ່ງທີ່ມີຕົວຕົນ) ໄປຫາສິ່ງທີ່ເປັນນາມມະທໍາ (ສິ່ງທີ່ບໍ່ມີຕົນຕົວ).
- ເລືອກວິທີສອນ ທີ່ເຫມາະສົມກັບໄວຂອງຜູ້ຮຽນ, ເຫມາະສົມກັບເນື້ອໃນທີ່ຈະສອນ ແລະ ເລືອກອຸປະກອນທີ່ຈະເຮັດໃຫ້ຜູ້ຮຽນເຂົ້າໃຈໄດ້ດີ.

- ຈະສິດສອນແນວໃດ ຈຶ່ງຈະເຮັດໃຫ້ຜູ້ຮຽນເກີດຄວາມສົນໃຈ, ເຂົ້າໃຈ ແລະ ຮູ້ຈັກຄິດດ້ວຍຕົນເອງ ຫຼາຍກວ່າທີ່ຈະສັ່ງເສີມໃຫ້ຈື່ຈຳ.
- ຈະສິດສອນແບບໃດຈຶ່ງຈະເຮັດໃຫ້ຜູ້ຮຽນມີໂອກາດຝຶກ ເພື່ອພັດທະນາຄວາມຊຳນານໃນດ້ານຕ່າງໆ ໄດ້ດີ.
- ເຮົາຈະໃຊ້ວິທີການສອນແບບຜູ້ໃຫມ່ ມາໃຊ້ສອນກັບນັກຮຽນຂອງເຮົາໄດ້ຫນ້ອຍຫຼາຍເທົ່າໃດ ຈຶ່ງຈະໄດ້ຮັບຜົນ ເຊັ່ນ: ການຄົ້ນຄວ້າໃນຫ້ອງສະໝຸດ, ວິທະຍຸ, ໂທລະທັດ, ຫນັງສືພິມ. ການອະທິບາຍ, ການລາຍງານດ້ວຍປາກເປົ່າໃນຫ້ອງຮຽນ.
- ເຮົາຈະໃຊ້ອຸປະກອນແບບໃດຈຶ່ງຈະເຫມາະສົມກັບວິທີສອນເນື້ອໃນ ແລະ ໄວອາຍຸຂອງຜູ້ຮຽນ ຫຼື ເຫມາະສົມກັບແຕ່ລະບຸກຄົນເພື່ອໃຫ້ໄດ້ຜົນຕາມເປົ້າຫມາຍຂອງວິຊາທີ່ຄູສອນ.
- ກະກຽມອຸປະກອນຈາກສິ່ງທີ່ຫາໄດ້ ຈາກສະພາບແວດລ້ອມທຳມະຊາດໃນໂຮງຮຽນ ແລະ ໃນທ້ອງຖິ່ນໃກ້ຄຽງ.
- ການສອນດ້ວຍການປຽບທຽບໃຫ້ສຳພັນກັນຈາກສິ່ງທີ່ໃກ້ຕົວ, ຄຸ້ນຕາໄປຍັງບ່ອນທີ່ຢູ່ຫ່າງໄກອອກໄປ.
- ການສອນຕ້ອງໃຫ້ດຶງດູດຄວາມສົນໃຈຂອງນັກຮຽນ ໂດຍນຳເອົາເຫດການປະຈຸບັນທີ່ເກີດ ຂຶ້ນເຂົ້າໄປກ່ຽວຂ້ອງ ແລະ ການນຳສິ່ງທີ່ນັກຮຽນໄດ້ສຶກສາມາປະຕິບັດ ຫຼື ຄິດດ້ວຍຕົນເອງໃຫ້ຫຼາຍທີ່ສຸດ.

**1) ຫຼັກການເລືອກເນື້ອໃນ**

ດັ່ງທີ່ພວກເຮົາຮູ້ແລ້ວວ່າ ເນື້ອໃນການສອນວິຊາສັງຄົມນັ້ນ ແມ່ນມີເນື້ອໃນກວ້າງຂວາງ ຫຼາຍ ຜູ້ສອນຈະຕ້ອງໄດ້ນຳເອົາເນື້ອໃນຂອງວິຊາມາພິຈາລະນາ ຈະເນັ້ນຫນັກຈຸດໃດຫຼາຍກວ່າຫມູ່ນັ້ນ ຕ້ອງອາໄສຫຼັກການໃນການເລືອກເນື້ອໃນດັ່ງຕໍ່ໄປນີ້:

ກ. ເນື້ອໃນທີ່ເລືອກຕ້ອງຖືກຕ້ອງ ແລະ ມີຄວາມສຳຄັນພຽງພໍ

ຂ. ຕ້ອງສອດຄ່ອງກັບກາລະເວລາອັນແທ້ຈິງຂອງສັງຄົມ

ຄ. ຈະຕ້ອງມີລັກສະນະກວມລວມ ແລະ ເລິກເຊິ່ງ

ງ. ເນື້ອໃນ ແລະ ປະສົບການທີ່ຈັດຂຶ້ນຄວນສະຫນອງຄວາມມຸ່ງຫມາຍຂອງຫຼັກສູດ

ຈ. ຕ້ອງເຫມາະສົມກັບຄວາມສາມາດຂອງຜູ້ຮຽນ.

ສ. ຕ້ອງເຫມາະສົມກັບຄວາມຕ້ອງການ ແລະ ຄວາມສົນໃຈຂອງຜູ້ຮຽນ

**2) ການຈັດລຳດັບເນື້ອໃນ**

ອີງຕາມເນື້ອໃນທີ່ເລືອກມາໄດ້ນັ້ນ, ຄວນມາຈັດລຳດັບເນື້ອໃນ ດັ່ງນີ້:

1. ຕັ້ງຕົ້ນຈາກສິ່ງທີ່ງ່າຍໄປຫາສິ່ງທີ່ຍາກຕາມລຳດັບ

2. ຕັ້ງຕົ້ນຈາກສ່ວນລວມໄປຫາສ່ວນຍ່ອຍ

3. ຕັ້ງຕົ້ນຈາກສິ່ງທີ່ມີກິດເກນເບື້ອງຕົ້ນໄປສູ່ກົດເກນຂັ້ນຕໍ່ໄປ

4. ຕັ້ງຕົ້ນຈາກອະດີດມາຫາປະຈຸບັນ

**3) ວິທີສອນທີ່ຄວນນຳໃຊ້ສອນວິຊາພູມສາດໃນຊັ້ນປະຖົມສຶກສາ**

ວິທີສອນມີຫຼາຍວິທີ ແຕ່ວິທີທີ່ສະເໜີຕໍ່ໄປນີ້ເປັນພຽງຕົວຢ່າງ ເຊິ່ງຄູຜູ້ສອນອາດຈະມີວິທີ ການສອນທີ່ໃໝ່ອອກໄປຈາກວິທີທີ່ໄດ້ສະເໜີນີ້ ເພາະວ່າວິທີສອນຂອງຄູ ຍ່ອມມີການພັດທະນາ ຫາແນວທາງໃໝ່ໆ ເພື່ອທີ່ຈະໃຫ້ຜູ້ຮຽນໄດ້ບັນລຸເຖິງຈຸດໝາຍຂອງການສຶກສາໂດຍວິທີການຕ່າງກັນ.

**ກ. ວິທີສອນແບບສາທິດ ແລະ ທົດລອງ**

ແມ່ນວິທີສອນທີ່ເຮັດໃຫ້ຜູ້ຮຽນມີໂອກາດ ເຝິກທັກສະຂະບວນການວິທະຍາສາດຄື ການ ສັງເກດ ແລະ ການພິຈາລະນາຢ່າງງ່າຍດາຍ ເຊັ່ນ ການສາທິດກ່ຽວກັບການເກີດກາງເວັນ - ກາງ ຄືນ, ການທົດປືດຂອງນ , ການເຮັດນາ ແລະ ອື່ນໆ. ຫຼື ການທົດລອງກ່ຽວກັບ ການປູກພືດຫມູນວຽນ, ການເຮັດນ້ຳອົນ, ການເກີດກະແສນ້ຳ ແລະ ອື່ນໆ.

**ຂ. ວິທີສອນແບບເລົ່າເລື່ອງ (ນິທານ)**

ຍົກຕົວຢ່າງ ການເລົ່າເລື່ອງ ເປັນຫຍັງຄົນເຮົາຈິ່ງຮ້ອງຊື່ວ່າ ທົ່ງໄຫຫີນ; ເລົ່າປະຫວັດການສ້າງພະທາດຫຼວງວຽງຈັນ; ເລົ່າເລື່ອງຂອງປະເທດຕ່າງໆທີ່ຄູຮູ້ ແລະ ເລົ່າເລື່ອງອື່ນໆທີ່ຄູຊອກມາໄດ້.

**ຄ. ວິທີສອນແບບອະທິບາຍ**

ສ່ວນຫຼາຍເປັນການອະທິບາຍບາງເນື້ອໃນ ແລະ ບາງຄຳສັບທີ່ຜູ້ຮຽນບໍ່ເຂົ້າໃຈ ເຊັ່ນ ຄຳສັບ ທາງພູມສາດ : ພູເຂົາແມ່ນຫຍັງ?, ອ່າວແມ່ນຫຍັງ?, ທະເລ, ແຫຼມ....

**ງ. ແບບໃຊ້ອຸປະກອນຊ່ວຍໃນການສິດສອນ**

ນຳໃຊ້ ແຜນທີ່, ຮູບພາບ, ຫຸ່ນຈຳລອງ, ເສັ້ນສະແດງ, ຊຸດການສອນຕ່າງໆ ເປັນຕົ້ນການໄປສຶກສາສະຖານທີ່ ເຊັ່ນ: ການໄປທ່ຽວຊົມພູມມີປະເທດ, ແມ່ນ້ຳ, ເຂື່ອນ, ສະຖານທີ່ເກົ່າແກ່ບູຮານ...

**ຈ. ແບບເຝິກສ້າງງ່າຍ**

ເຊັ່ນ: ການສ້າງຫຸ່ນ, ສ້າງເຮືອນແບບລາວລຸ່ມ, ລເຮືອນແບບລາວເທີງ, ເຮືອນແບບລາວສູງ, ຝາຍກັ້ນນ້ຳ ໂດຍມີຮູບແບບໃຫ້ນັກຮຽນເບິ່ງປະກອບການເຝິກສ້າງ.

**ສ. ແບບໜ່ວຍການຮຽນ**

ຄູຄວນນຳໃຊ້ວິທີການສອນນີ້ເຂົ້າໃນການສອນ ຄົມມະນາຄົມ ອາດຈະແບ່ງນັກຮຽນອອກເປັນ 3 ໜ່ວຍຄື: ໜ່ວຍທາງບົກ, ໜ່ວຍທາງນ້ຳ ແລະ ໜ່ວຍທາງອາກາດ. ໂດຍແບ່ງນັກຮຽນເປັນ 3 ກຸ່ມແຕ້ມຮູບພາຫະນະຕາມປະເພດຂອງການຄົມມະນາຄົມ ຫຼື ອາດໃຫ້ນັກຮຽນອະທິບາຍວ່າພາຫະນະການຄົມມະນາຄົມແຕ່ລະປະເພດມີຫຍັງແດ່?, ໃຜເຄີຍໄປໃສ?, ໄປດ້ວຍພາຫະນະຊະນິດໃດ? ແລະ ໃຊ້ແລ້ວເປັນແນວໃດ.

**ຊ. ວິທີສອນແບບສືບສວນສອບສວນ**

ໃຊ້ວິທີການນີ້ເຂົ້າໃນການສອນເລື່ອງ: ການປົກປັກຮັກສາປ່າໄມ້, ມົນລະພິດ, ສະພາບແວດລ້ອມຕ່າງໆເພື່ອໃຫ້ຜູ້ຮຽນໄດ້ຮຽນຮູ້ດ້ວຍການຊອກຂໍ້ມູນເຊິ່ງເລີ່ມຈາກບັນຫາໃດໜຶ່ງດ້ວຍການຊອກຫາສາເຫດທີ່ໃຫ້ເກີດບັນຫາດັ່ງກ່າວ.

**ຍ. ວິທີສອນແບບບັນລະຍາຍ**

ວິທີການສອນແບບນີ້ແມ່ນຄູເປັນເຈົ້າການ, ສ່ວນນັກຮຽນມີການປະກອບສ່ວນບໍ່ຫຼາຍ, ຄູຄວນໃຊ້ເຕັກນິກໃນການບັນລະຍາຍໃຫ້ດີ ເພື່ອດຶງດູດຄວາມສົນໃຈຂອງຜູ້ຮຽນ ແລະ ບໍ່ໃຫ້ນັກຮຽນເບື່ອໜ່າຍຕໍ່ກັບການສອນຂອງຄູວິທີການນີ້ເໝາະສໍາລັບການສອນວິຊາວິທະຍາສາດສັງຄົມທີ່ມີເນື້ອໃນຫຼາຍ.

**2.2. ຫຼັກການສອນປະຫວັດສາດ**

ກ່ອນຄູຈະດໍາເນີນການສອນເນື້ອໃນບົດຮຽນໃດໜຶ່ງໄດ້ຕ້ອງປະຕິບັດດັ່ງລຸ່ມນີ້:

1) **ການວາງແຜນການສອນ**

ແຜນການສອນເປັນສິ່ງສໍາຄັນສໍາລັບຄູ ເພື່ອເປັນບ່ອນອີງໃນການສອນ ເຮັດໃຫ້ການສອນເປັນລະບົບຕໍ່ເນື່ອງ ແລະ ບັນລຸຕາມຈຸດປະສົງ. ສະນັ້ນ, ຄູສອນຈະຕ້ອງມີການວາງແຜນໃນການຈັດການຮຽນ-ການສອນ, ສິ່ງທີ່ຄູຕ້ອງຕອບຄໍາຖາມໃນການວາງແຜນການສອນມີດັ່ງລຸ່ມນີ້:

**ກ. ຈະສອນຫຍັງ?**

ໝາຍເຖິງການກໍານົດເປົ້າໝາຍການສອນນັ້ນເອງ, ເປົ້າໝາຍການສອນປະກອບດ້ວຍອົງປະກອບສໍາຄັນ 2 ຢ່າງຄື:

- ອົງປະກອບທີ່ເປັນພຶດຕິກໍາທີ່ຕ້ອງການໃຫ້ໃນການຈັດການຮຽນເກີດຂຶ້ນໃນການຈັດການຮຽນ-ການສອນ ພຶດຕິກໍານີ້ສຶກສາໄດ້ຈາກຈຸດມຸ່ງໝາຍຂອງຫຼັກສູດ, ຈຸດປະສົງຂອງກຸ່ມວິຊາ, ແລະ ຈຸດປະສົງຂອງລາຍວິຊາ.
- ອົງປະກອບທີ່ເປັນການສັງລວມຄວາມຮູ້ທີ່ຈະຕ້ອງໃຫ້ນັກຮຽນໄດ້ຮຽນຮູ້ຂອບເຂດ, ຕໍາແໜ່ງ ເຊິ່ງສຶກສາໄດ້ມາຈາກຄໍາອະທິບາຍຂອງລາຍວິຊາຕ່າງໆ.

**ຂ. ຈະສອນແນວໃດ**

ແມ່ນການຈັດກິດຈະກໍາການຮຽນ-ການສອນ, ນັບທັງຂະບວນການການຮຽນ-ການສອນ ເພື່ອເຮັດໃຫ້ການຮຽນຮູ້ຂອງນັກຮຽນບັນລຸຕາມຈຸດປະສົງທີ່ວາງໄວ້. ຄູທຸກຄົນຮູດີຢູ່ແລ້ວວ່າພຶດຕິກໍາຕ່າງໆ ຈັດເຂົ້າສະມັດຖະພາບໄດ້ ແລະ ແຕ່ລະສະມັດຖະພາບກໍ່ມີຮູບພາບການສິດສອນແຕກຕ່າງກັນ. ໃນການສ້າງແຜນການສອນຄູຈິ່ງຕ້ອງດໍາເນີນໄປຕາມລໍາດັບດັ່ງນີ້:

- ວິເຄາະຈຸດປະສົງ ແລະ ສະມັດຖະພາບຂອງການຮຽນຮູ້.

- ວິເຄາະຈຸດປະສົງ ແລະ ສະມັດຖະພາບນີ້ຕ້ອງມີພຶດຕິກຳພື້ນຖານ ແລະ ເນື້ອໃນຄວາມຮູ້ໃນຈຸດປະສົງຂອງສະມັດຖະພາບນັ້ນໂດຍອາໄສພຶດຕິກຳ ແລະ ຄວາມຮູ້ພື້ນຖານຂອງນັກຮຽນເພື່ອຜົນຂະຫຍາຍໃຫ້ເກີດຄວາມຮູ້ໃໝ່ຂຶ້ນຕາມລຳດັບ.

**ຄ. ຈະຮູ້ໄດ້ແນວໃດວ່າສິດສອນໄປແລ້ວໄດ້ຜົນ ຫລື ບໍ່?**

ກໍ່ຄືການວັດ ແລະ ການປະເມີນຜົນການຮຽນ-ການສອນນັ້ນເອງ. ການສອນທຸກຄັ້ງຕ້ອງມີການປະເມີນໄປພ້ອມກັບການຮ່ຳຮຽນ ເພື່ອວັດລະດັບຄວາມຮູ້-ຄວາມສາມາດຂອງນັກຮຽນທີ່ໄດ້ຮັບຈາກຄູຜູ້ສອນ ແລະ ເພື່ອໃຫ້ຮູ້ວ່າການສິດສອນຂອງຄູໄປຕາມລະດັບຄາດໝາຍ ຫລື ບໍ່? ການວັດ ແລະ ການປະເມີນແມ່ນອີງຕາມວິທີ ຫລື ຄວາມຊຳນານຂອງໃຜລາວ ເພາະຄູສອນບາງຄົນອາດຈະປະເມີນເປັນໄລຍະຂອງການສອນ ແລະ ບາງຄົນກໍ່ຈະປະເມີນທ້າຍຂອງບົດຮຽນ.

## 3. ການນຳໃຊ້ວິທີສອນເຂົ້າໃນການສອນໂລກອ້ອມຕົວສັງຄົມ

### 3.1. ວິທີສອນແບບສືບສວນສອບສວນ

**1) ຄວາມໝາຍ ແລະ ຄວາມສຳຄັນຂອງການສອນ**

ການສອນແບບສືບສວນສອບສວນແມ່ນການສອນທີ່ມຸ່ງໃຫ້ນັກຮຽນຮຽນຮູ້ຈາດການຊອກຄົ້ນຫາຂໍ້ມູນ ເຊິ່ງເລີ່ມຈາກບັນຫາໃດໜຶ່ງ ໂດຍການຊອກຫາສາເຫດທີ່ພາໃຫ້ເກີດບັນຫາດັ່ງກ່າວ ດ້ວຍວິທີການຕັ້ງສົມມຸດຖານຂຶ້ນ ຈາກນັ້ນຈິ່ງເອົາສິ່ງທີ່ລວບລວມໄດ້ ຫຼື ຂໍ້ມູນມາທົດລອງເພື່ອພິສູດສົມມຸດຖານທີ່ຕັ້ງຂຶ້ນຈົນສາມາດເຫັນໄດ້ວ່າ ອັນໃດເປັນສາເຫດທີ່ແທ້ຈິງຂອງບັນຫາໃນການສືບສວນຫາຂໍ້ມູນນີ້ ຜູ້ສອນຕ້ອງໃຊ້ຄຳຖາມເປັນເຄື່ອງມືເພື່ອໃຫ້ນັກຮຽນສັງເກດ ແລະ ຫາຂໍ້ມູນມາຢັ້ງຢືນຄວາມເປັນຈິງ.

**2) ຂັ້ນຕອນຂອງການສອນ**

ການສອນແບບສືບສວນ-ສອບສວນລວມມີ 5 ຂັ້ນຕອນຄື:




**ກ. ຂັ້ນກະກຽມ**

- ເຮັດໃຫ້ນັກຮຽນສົນໃຈຈະຮຽນ
- ປູພື້ນຖານທີ່ຈຳເປັນສຳລັບການຮຽນຮູ້ເນື້ອໃນໃໝ່.

**ຂ. ຂັ້ນສັງເກດ**

- ຍົກເລື່ອງທີ່ເປັນບັນຫາຂຶ້ນໃຫ້ນັກຮຽນສັງເກດ ແລະ ສຶກສາສິ່ງທີ່ພາໃຫ້ເກີດບັນຫາ

- ຄູຕັ້ງບັນຫາໃຫ້ນັກຮຽນສັງເກດ

**ຄ. ຂັ້ນອະທິບາຍ**

ຄູຕັ້ງຄຳຖາມ "ເປັນຫຍັງ" ເພື່ອໃຫ້ນັກຮຽນ

- ໃຊ້ເຫດຜົນມາອະທິບາຍເຖິງສາເຫດຂອງບັນຫາ
- ໃຊ້ຄວາມຄິດແບບມີເຫດຜົນ
- ວິເຄາະຈາກຜົນໄປຫາເຫດ ຫຼື ຈາກບັນຫາໄປຫາສາເຫດ
- ໃຊ້ຄວາມສາມາດໃນການສ້າງທິດສະດີມາອະທິບາຍປະກົດການຕ່າງໆ

**ງ. ຂັ້ນທົດລອງຜົນ ແລະ ພິສູດສົມມຸດຖານ**

ຄູຕັ້ງສົມມຸດຖານດ້ວຍການໃຊ້ຄຳຖາມ

ຕົວຢ່າງ: ຖ້າບໍ່ມີອາກາດຄົນເຮົາຈະມີຊີວິດຢູ່ໄດ້ ຫຼື ບໍ່ ເພື່ອໃຫ້ນັກຮຽນຊອກຫາຂໍ້ມູນເພື່ອມາອະທິບາຍສົມມຸດຖານ ເພື່ອຈະໄດ້ຮູ້ວ່າມັນຖືກ ຫຼື ມັຣຜິດ.

**ຈ. ຂັ້ນນຳໄປໃຊ້**

ນຳເອົາຜົຂອງການແກ້ໄຂບັນຫາມານຳໃຊ້ໃນຊີວິດປະຈຳວັນ

**3) ຄຸນປະໂຫຍດຂອງການສອນແບບສືບສວນສອບສວນ**

- ເປັນການຝຶກໃຫ້ນັກຮຽນຮູ້ຈັກຄິດຢ່າງມີເຫດຜົນ, ເຝິກການວິເຄາະຢ່າງມີວິທະຍາສາດເປັນລະບົບ.
- ເປັນການເຝິກໃຫ້ນັກຮຽນເປັນຄົນລະອຽດຖີ່ຖ້ວນ, ຮູ້ສັງເກດ, ມີເຫດຜົນ, ບໍ່ເຊື່ອໂດຍງ່າຍຖ້າບໍ່ໄດ້ຮັບການກວດສອບເສຍກ່ອນ.
- ເຝິກ ໃຫ້ນັກຮຽນມີຄວາມເຊື່ອໝັ້ນໃນຕົນເອງ, ກ້າຄິດ ແລະ ກ້າສະແດງອອກ.
- ເຝິກໃຫ້ນັກຮຽນຮູ້ຈັກເຮັດວຽກເປັນໝູ່ຄະນະ.
- ເຝິກໃຫ້ນັກຮຽນຮູ້ຈັກຊອກຫາຄຳຕອບ ຫຼື ສະແຫວງຫາຄວາມຮູ້ດ້ວຍຕົນເອງເພື່ອນຳໄປແກ້ໄຂບັນຫາຕ່າງໆ

ສະຫຼຸບ: ວິທີສອນແບບສືບສວນສອບສວນແມ່ນການເຝິກໃຫ້ນັກຮຽນຮູ້ຈັກຄິດ, ແກ້ໄຂບັນຫາໃນພາກທິດສະດີ ແລະ ການປະຕິບັດຕົວຈິງ ທີ່ເນັ້ນໃສ່ການຕັ້ງຄຳຖາມ ເພື່ອໃຫ້ນັກຮຽນໄດ້ສັງເກດ, ອະທິບາຍ, ລວບລວມຂໍ້ມູນເພື່ອທົດສອບສົມມຸດຖານແລ້ວຈິ່ງນຳເອົາຄວາມຮູ້ໄປນຳໃຊ້ໃນຊີວິດປະຈຳວັນ.

ຂໍ້ຄວນເອົາໃຈໃສ່ໃນນການນຳໃຊ້ວິທີສອນແບບສືບສວນສອບສວນ:

- ນຳໃຊ້ເວລາຫຼາຍ
- ອາດຂາດເຂີນຂໍ້ມູນ ຫຼື ຂໍ້ມູນບໍ່ພຽງພໍ

ຕົວຢ່າງ ການໃຊ້ວິທີສອນ ແບບສືບສວນສອບສວນເລື່ອງ ການປົກປັກຮັກສາປ່າໄມ້ ເວລາ 50 ນາທີວິຊາໂລກອ້ອມຕົວຊັ້ນປະຖົມ ປີທີ 5

**ຈຸດປະສົງ ໃຫ້ນັກຮຽນສາມາດ:**

- ຊີ້ແຈງບອກສາເຫດຂອງການເກີດຄວາມແຫ້ງແລ້ງໄດ້.
- ອະທິບາຍໄດ້ບອກຄວາມເດືອດຮ້ອນທີ່ເກີດຈາກຄວາມແຫ້ງແລ້ງໄດ້.
- ໃຊ້ວິທີການແກ້ບັນຫາຈາກຄວາມແຫ້ງແລ້ງໄດ້.

**ເນື້ອໃນ**

1) ຄຸນປະໂຫຍດຂອງປ່າໄມ້.
2) ການປົກປັກຮັກສາປ່າໄມ້.
3) ຜົນຮ້າຍຂອງການທຳລາຍປ່າ.

**ອຸປະກອນ**

- ຮູບປ່າໄມ້ອຸດົມສົມບູນ ແລະ ປ່າໄມ້ທີ່ຖືກທຳລາຍ ແລະ ຂ່າວເລື່ອງໄພແຫ້ງແລ້ງ.

**ກິດຈະກຳການຮຽນ - ການສອນ**

ຂັ້ນທີ 1: ສ້າງຄວາມກຽມພ້ອມ

1. ໃຫ້ນັກຮຽນສັງເກດເບິ່ງຮູບປ່າໄມ້ທີ່ຂຽວອຸ່ມທຸ່ມ, ມີແມ່ນ້ຳລຳທານ ແລະ ມີນ້ຳຕົກຕາດຈາກນັ້ນຄູນຳພານັກຮຽນສົນທະນາເຖິງຄວາມອຸດົມສົມບູນຂອງປະເທດລາວ.
2. ໃຫ້ນັກຮຽນສັງເກດເບິ່ງຮູບປ່າໄມ້ທີ່ຖືກທຳລາຍ ຫຼື ຮູບພາບຄວາມແຫ້ງແລ້ງ ດິນແຕກແຫ່ງແລ້ວຮ່ວມກັນສົນທະນາເຖິງສະພາບຄວາມແຫ້ງແລ້ງທີ່ໄດ້ເຫັນຢູ່ໃນຮູບ
3. ຄູອ່ານຂ່າວເລື່ອງໄພແຫ້ງແລ້ງ ໃຫ້ນັກຮຽນຟັງ ຫຼື ຄູເອົາຂ່າວນັ້ນໃຫ້ນັກຮຽນ ອ່ານແລ້ວສົນທະນາເຖິງຂ່າວທີ່ນັກຮຽນໄດ້ຟັງ.
4. ຄູແລະ ນັກຮຽນສົນທະນາກັນກ່ຽວກັບຄວາມແຫ້ງແລ້ງໃນປະເທດລາວເປັນຄືແນວໃດ?

ຂັ້ນທີ2: ຕັ້ງສົມມຸດຖານ

1) ຄູອະທິບາຍແລ້ວຕັ້ງຄຳຖາມ ຫຼື ເວົ້າ ໃຫ້ນັກຮຽນຄິດ ແລະ ເກີດຄຳຖາມ

**ຕົວຢ່າງ**

ນັກຮຽນສັງເກດຮູບປ່າໄມ້ທີ່ຖືກທຳລາຍ, ຮູບຄວາມແຫ້ງແລ້ງ ແລະ ໄດ້ຮູ້ຂ່າວເລື່ອງ ໄແຫ້ງແລ້ງແລ້ວນັກຮຽນຄິດວ່າຄວາມແຫ້ງແລ້ງນັ້ນໄດ້ສ້າງບັນຫາໃຫ້ໃດແດ່?

2) ນັກຮຽນຊ່ວຍກັນຄິດ ແລະ ບອກເຖິງສະພາບຂອງບັນຫາຕ່າງໆທີ່ເກີດຂຶ້ນ . ສະຫຼຸບໄດ້ເປັນຂໍ້ໆດັ່ງນີ້:

- ອາກາດຮ້ອນ
- ຝົນບໍ່ຕົກຕາມລະດູການ
- ຂາດນ້ຳ (ບາງທ້ອງຖິ່ນຂາດນ້ຳດື່ມ, ນ້ຳໃຊ້)

- ພືດຜົນການກະເສດຖືກເສຍຫາຍ
- ຊາວນາເຮັດນາແຊງບໍ່ໄດ້ເພາະວ່າຊາດນໍ້າ.

**ຂັ້ນທີ 3. ຂັ້ນອະທິບາຍ**

1) " ຄູແບ່ງນັກຮຽນອອກເປັນກຸ່ມ ໃຫ້ແຕ່ລະກຸ່ມອະທິບາຍວ່າສະພາບຄວາມຫຍຸ້ງຍາກທີ່ເກີດຈາກຄວາມແຫ້ງແລ້ງນີ້ ມີສາເຫດຈາກອັນໃດແດ່? ເປັນຫຍັງປະເທດລາວທີ່ເຄີຍມີຄວາມອຸດົມບູນຈຶ່ງຕ້ອງປະສົບປັນຫາກັບໄພແຫ້ງແລ້ງ?

ຄໍາຕອບທີ່ຈະໄດ້ມາ:

- ຍ້ອນທໍາລາຍປ່າໄມ້
- ແມ່ນລໍາເຊເຫືອດແຫ້ງ. ເປື້ອນເປິເພາະວ່າຕັດໄມ້ຢູ່ຍອດຫ້ວຍທີ່ເປັນແຫຼ່ງນໍ້າ ແລະ ຖິ້ມຂີ່ເຫຍື້ອທີ່ບູດເນົ່າລົງໃສ່ແມ່ນໍ້າ.
- ໂຮງງານອຸດສະຫະກປ່ອຍນໍ້າເປື້ອນລົງໃສ່ ແມ່ນໍ້າ.

2) ຕົວແທນກຸ່ມລາຍງານຜົນການອະທິບາຍ, ຄູ ແລະ ນັກຮຽນໃນກຸ່ມອື່ນທີ່ນັ່ງຟັງ ຮ່ວມກັນຖາມ ແລະ ພ້ອມກັນຕີລາຄາກັນດ້ວຍ
3) ນັກຮຽນຊ່ວຍກັນສະຫຼຸບສາເຫດທັງຫມົດ.

**ຂັ້ນທີ 4 ຂັ້ນຄາດຄະເນ**

ເມື່ອນັກຮຽນສະເໜີສາເຫດໄດ້ແລ້ວໃຫ້ຮ່ວມກັນອະທິບາຍວ່າ:

- ຖ້າບໍ່ແກ້ບັນຫານີ້ຜົນສະທ້ອນຕໍ່ໄປຈະເປັນຢ່າງໃດ?
- ຖ້າແກ້ບັນຫານີ້ໄດ້ແລ້ວຈະເກີດຜົນດີຢ່າງໃດແດ່?

ຂັ້ນທີ 5. ຂັ້ນນໍາໄປໃຊ້

1) ແບ່ງນັກຮຽນອອກເປັນກຸ່ມແລ້ວໃຫ້ແຕ່ລະກຸ່ມອະທິບາຍວ່າ ພວກເຮົາຈະແກ້ໄຂບັນຫາສະເພາະຫນ້າ ແລະ ຍາວນານແນວໃດ?
2) ພາຍຫັງອະທິບາຍແກ້ບັນຫາ ສະເພາະຫນ້າ ແລະ ຍາວນານແລ້ວ ແລະ ລາຍງານຜົນ
3) ນັກຮຽນທັງຫມົດຊ່ວຍກັນສະຫຼຸບວິທີແກ້ບັນຫາທັງສະເພາະຫນ້າ ແລະ ຍາວນານເຊິ່ງຈະສາມາດສັງລວມໄດ້ດັ່ງນີ້:

    - ການແກ້ໄຂບັນຫາສະເພາະຫນ້າ

    - ລັດຖະບານຊຸດນສ້າງໃຫ້ປະຊາຊົນທີ່ພົບຄວາມເດືອດຮ້ອນ. - ທຸກຄົນຊ່ວຍກັນປະຢັດນ

    - ເຮັດເຫມືອງຝາຍ ແລະ ຊົນລະປະທານ. • ການແກ້ບັນຫາໄລຍະຍາວ

    - ຊ່ວຍກັນຮັກສາປ່າໄມ້ - ຊ່ວຍກັນປູກ ແລະ ຮັກສາຕົ້ນໄມ້

    - ຊ່ວຍກັນຮັກສາແຫຼ່ງນ ໃຫ້ສະອາດ.

4) ຄູສະເໜີໃຫ້ນັກຮຽນທຸກຄົນປະຕິບັດຕາມວິທີແກ້ໄຂບັນຫາເທົ່າທີ່ນັກຮຽນຈະເຮັດໄດ້ເຊັ່ນ: ປະຢັດນໍ້າ , ປູກຕົ້ນໄມ້, ຮັກສາຕົ້ນໄມ້ ແລະ ບໍ່ຖິ້ມຂີ້ເຫຍື້ອ ຫຼື ສິ່ງບູດເນົ່າລົງໃສ່ ແມ່ນໍ້າລໍາເຊ.

- ຄູພານັກຮຽນຫຼິ້ນເກມປີ່ນເຂັມໂດຍໃຫ້ນັກຮຽນແຕ່ລະກຸ່ມປ່ຽນກັນປີ່ນ ຖ້າປາຍເຂັມໄປຢຸດທີ່ເຄື່ອງຄໍາຖາມໃດ ໃຫ້ຕອບຄໍາຖາມນັ້ນ ຖ້າກຸ່ມໃດຕອບຄໍາຖາມໄດ້ຫຼາຍ ກຸ່ມນັ້ນຊະນະ
- ຄໍາຖາມໃນບົດຮຽນທີ່ຮຽນມາມີທັງໝົດ 14ຂໍ້.

### 3.2. ວິທີສອນແບບໂຄງການ

ການສອນແບບໂຄງການແມ່ນການສອນທີ່ໃຫ້ນັກຮຽນໄດ້ເລືອກເຮັດໃນສິ່ງທີ່ຕົນສົນໃຈ ແລະ ເປັນຜູ້ວາງແຜນໃນການເຮັດວຽກງານເອງ ໂດຍມີຄູເປັນຜູ້ປຶກສາໃຫ້ຂໍ້ຊີ້ນໍາໃນການເຮັດວຽກງານນັ້ນເອງເຊິ່ງມີລໍາດັບຂັ້ນຕອນຕໍ່ໄປນີ້:




### ກ. ຂັ້ນສະເໜີບັນຫາ

ເປັນຂັ້ນທີ່ຄູນໍາສະເໜີສະຖານະການ ຫຼື ກໍລະນີຕົວຢ່າງໃຫ້ນັກຮຽນເກີດບັນຫາ ແລະ ມີຄວາມຕ້ອງການຈະຊ່ວຍແກ້ໄຂບັນຫາໃດໜຶ່ງໃຫ້ລຸລ່ວງໄປດ້ວຍດີ.

### ຂ. ຂັ້ນກໍານົດຈຸດປະສົງ

ເປັນຂັ້ນທີ່ນັກຮຽນເປັນຜູ້ເລືອກບັນຫາ ແລະ ຈຸດມຸ່ງໝາຍໃນການຮຽນ ວ່າຈະສຶກສາໃນເລື່ອງໃດ, ສຶກສາເພື່ອຫຍັງ? ນັກຮຽນຈະເປັນຜູ້ກໍານົດເອງ ແລະ ເຮັດວຽກງານເປັນກຸ່ມ.

### ຄ. ຂັ້ນວາງແຜນ

ເປັນຂັ້ນທີ່ນັກຮຽນຊ່ວຍກັນວາງແຜນວ່າຈະດໍາເນີນການແນວໃດ? ຈຶ່ງຈະສາມາດບັນລຸຈຸດມຸ່ງໝາຍທີ່ວາງໄວ້ ການວາງແຜນປະກອບດ້ວຍ: ຊື່ໂຄງການ, ທີ່ປຶກສາໂຄງການ, ສະຖານທີ່ປະຕິບັດວຽກງານຂອງໂຄງການ, ວັນເວລາ, ງົບປະມານ, ວິທີການສຶກສາຄົ້ນຄວ້າ, ເຄື່ອງມືທີ່ໃຊ້ ແລະ ຜົນທີ່ຄາດວ່າຈະໄດ້ຮັບ.

### ງ. ຂັ້ນດໍາເນີນແຜນການ

ເປັນຂັ້ນທີ່ນັກຮຽນແຕ່ລະກຸ່ມ ລົງມືປະຕິບັດວຽກງານທີ່ວາງໄວ້ຕາມແຜນການ.

### ຈ. ຂັ້ນປະເມີນຜົນ

ເປັນຂັ້ນທີ່ນັກຮຽນຈະໄດ້ລາຍງານການປະຕິບັດໂຄງການ, ການປະເມີນຜົນໂຄງການວ່າ: ໂຄງການທີ່ໄດ້ປະຕິບັດນັ້ນບັນລຸຈຸດມຸ່ງໝາຍ ຫຼື ບໍ່? ບັນລຸໜ້ອຍຫຼາຍປານໃດ? ມີບັນຫາຫຍັງ? ແລະ ຜ່ານການປະຕິບັດໂຄງການນັກຮຽນໄດ້ຮັບປະໂຫຍດດ້ານໃດແດ່?.

ວິທີສອນແບບໂຄງການ ເປັນການສອນທີ່ຈັດນັກຮຽນເປັນກຸ່ມ ຫຼື ແຕ່ລະຄົນໄດ້ວາງ ໂຄງການ ໂດຍດຳເນີນງານໃຫ້ສຳເລັດຕາມໂຄງການນັ້ນ ນັບວ່າເປັນການສອນທີ່ສອດຄ່ອງກັບສະພາບຕົວຈິງ ໂດຍນັກຮຽນຈະຕັ້ງບັນຫາດຳເນີນການແກ້ໄຂບັນຫາໃນການລົງມືປະຕິບັດເຊັ່ນ: ໂຄງການອະນາໄມໃນຫ້ອງຮຽນ,ໃນຫ້ອງຮຽນ ແລະ ໂຄງການອື່ນໆພາຍໃນໂຮງຮຽນ

**ຂໍ້ດີຂອງການສອນແບບໂຄງການ**

- ນັກຮຽນຈະມີຄວາມສົນໃຈເພາະວ່າໄດ້ລົງມືປະຕິບັດຕົວຈິງ
- ສົ່ງເສີມຄວາມຄິດສ້າງສັນ, ການທາງານມີແຜນ
- ຊ່ວຍໃຫ້ເກີດການຮຽນຮູ້ຕາມວິທີທາງທຳມະຊາດ ແລະ ໃຫ້ປະສົບການເຮັດວຽກງານ ຮ່ວມກັບຜູ້ອື່ນ
- ເຝິກນັກຮຽນໃຫ້ຮູ້ຈັກແກ້ບັນຫາ ເພື່ອກຽມພ້ອມທີ່ຈະປະເຊີນກັບສະພາບສັງຄົມທີ່ແທ້ຈິງ,

**3.3. ວິທີສອນເລົ່າເລື່ອງ**

ການເລົ່າເລື່ອງໝາຍເຖິງການທີ່ເອົາເລື່ອງຕ່າງໆ ເຊັ່ນ ນິທານ, ເລື່ອງປະຫວັດສາດ, ເຫດເລື່ອງຈິງ, ເລື່ອງແຕ່ງ ແລະ ເລື່ອງອື່ນໆ ມາເລົ່າໃຫ້ນັກຮຽນຟັງຕາມຈຸດປະສົງທີ່ຕ້ອງການໃຫ້ວິເຄາະ, ປະເມີນຜົນ, ໃຫ້ຄະຕິນັກຮຽນຈະເກີດຄວາມຊາບຊຶ້ມ ແລະ ເພີດເພີນ.

ກ່ອນຄູຈະນຳເອົາເລື້ອງໃດໜຶ່ງມາເລົ່າ ຄູຈະຕ້ອງມີຄວາມພ້ອມ ດັ່ງນີ້:

**ກ. ກະກຽມການເລົ່າເລື່ອງ**

- ເລືອກເອົາເລື່ອງທີ່ຈະເລົ່າ, ອ່ານໃຫ້ສຸດ, ຈັບຈຸດສຳຄັນຂອງເລື່ອງໃຫ້ໄດ້ ຈັດລຳດັບເນື້ອເລື່ອງໂດຍຫຍໍ້ ຕັ້ງແຕ່ຕົ້ນຈົນຈົບ ແລະ ພະຍາຍາມຫາຂໍ້ປີກຍ່ອຍມາຕື່ມ ເພື່ອໃຫ້ເຂົ້າໃຈຫຼາຍຂຶ້ນ.
- ຄວນເຂົ້າໃຈກ່ຽວກັບສານວນ, ຄຳສັບ, ຄວາມກ້າຫານ ໃນການກ້າສະແດງອອກ ກ່ອນຈະເລົ່າເລື່ອງ.
- ກຽມອຸປະກອນໃຫ້ເຫມາະສົມກັບເລື່ອງທີ່ນຳມາເລົ່າ
- ຖ້າເປັນເລື່ອງທີ່ແຕ່ງຂຶ້ນເອງຄວນໃຊ້ພາສາທີ່ເຂົ້າໃຈງ່າຍ, ເນື້ອເລື່ອງບໍ່ສັບສົນ ແລະ ຄວນໃຫ້ຄວາມຮູ້, ຂໍ້ຄິດ, ຄະຕິສອດແຊກໃນເລື່ອງທີ່ແຕ່ງຂຶ້ນ.

ຂ. ວິທີການເລົ່າເລື່ອງ

ການເລົ່າເລື່ອງພາໃຫ້ເກີດຜົນດີ ໃນການຮຽນ - ການສອນ ເພື່ອຈະຈູງໃຈໃຫ້ຜູ້ຟັງເກີດຄວາມສົນໃຈ, ຕ້ອງອາໄສອົງປະກອບທີ່ສຳຄັນດັ່ງນີ້:

- ໃຊ້ທ່າທາງປະກອບການເລົ່າເລື່ອງເຊັ່ນ ການໃຊ້ມື, ແຂນ, ສື່ຄວາມໝາຍ, ການເຄື່ອນໄຫວຂອງຕົວລະຄອນ, ສະແດງທ່າທີໄປຕາມເລື່ອງ ແລະ ຄວາມຮູ້ສຶກຂອງຕົວລະຄອນ ເຊັ່ນ ຄວາມຮັກ, ຄວາມຊັງ , ຄວາມພໍໃຈ, ຄວາມຮ້າຍ, ຄວາມໂສກເສົ້າ ແລະ ອື່ນໆ
- ການໃຊ້ພາສາຕ້ອງໃຫ້ເໝາະສົມກັບລະດັບຂອງຜູ້ຟັງ, ພາສາຂອງຜູ້ເລົ່າ, ພາສາຂອງຕົວລະຄອນໃນເລື່ອງ, ນໍ້າສຽງຕ້ອງມີລັກສະນະສູງ-ຕໍ່າ, ໜັກ, ເບົາຕາມເນື້ອເລື່ອງຂອງຕົວລະຄອນ.
- ການສະແດງອອກທາງສີໜ້າ ແລະ ອາລົມເຊັ່ນ: ການແກວ່ງຫົວ, ການຍິ້ມ, ໜ້າເຄັ່ງຂຶມ, ງຶກຫົວ ສິ່ງດັ່ງກ່າວຄວນນໍາໄປໃຊ້ໃນຂະນະທີ່ເລົ່າເລື່ອງຢູ່, ສາຍຕາຕ້ອງຕິດຕາມໄປທົ່ວຫ້ອງຮຽນ ແລະ ປະສານກັບຜູ້ຟັງເປັນບາງຄັ້ງຕາມຄວາມເໝາະສົມ.
- ການໃຊ້ອຸປະກອນປະກອບການເລົ່າເລື່ອງ ເຊັ່ນ: ແຜ່ນພາບ, ແຜນທີ່, ຫຸ່ນ ແລະ ອື່ນໆ ເພື່ອ ຊ່ວຍໃຫ້ຜູ້ຟັງເຂົ້າໃຈ, ສົນໃຈ ແຕ່ຕ້ອງເລືອກໃຊ້ ໃຫ້ເໝາະສົມກັບເລື່ອງ, ຈັງຫວະ ແລະ ເວລາໃຫ້ເໝາະສົມ.
- ການເລົ່າເລື່ອງຕ້ອງເຮັດໃຫ້ຜູ້ຟັງມີການຄົ້ນຄິດ ແລະ ຈິນຕະນາການກໍ່ຄືເລື່ອງທີ່ເລົ່າໃຫ້ຟັງແລ້ວໃຫ້ນັກຮຽນແຕ່ງຕໍ່ ແລະ ຊ່ວຍກັນຕັ້ງຊື່ເລື່ອງ ຫຼື ອາດໃຫ້ນັກຮຽນເລົ່າຄືນເລື່ອງພາຍຫຼັງທີ່ຟັງຈົບແລ້ວ.

## 3.4. ວິທີສອນແບບບັນລະຍາຍ

### ກ. ຄວາມໝາຍ ແລະ ຄວາມສໍາຄັນຂອງການບັນລະຍາຍ

ວິທີສອນແບບບັນລະຍາຍແມ່ນວິທີການສອນທີ່ໃຊ້ຄູເປັນເຈົ້າການ ສ່ວນນັກຮຽນແມ່ນມີສ່ວນຮ່ວມບໍ່ຫຼາຍ, ຈຸດປະສົງຕົ້ນຕໍຂອງການສອນແບບນີ້ກໍ່ເພື່ອປ້ອນຄວາມຮູ້ທີ່ເປັນພື້ນຖານໃຫ້ນັກຮຽນ ເຊິ່ງເຂົາເຈົ້າເປັນຜູ້ຮັບຂໍ້ມູນຄວາມຮູ້. ການບັນລະຍາຍສ່ວນຫຼາຍໃຊ້ເຂົ້າໃນການສອນວິຊາວິທະຍາສາດສັງຄົມທີ່ມີເນື້ອໃນຫຼາຍ.

### ຂ. ບັນຫາໃນການບັນລະຍາຍ

- ຜູ້ບັນລະຍາຍສ່ວນຫຼາຍມັກຈະໃຊ້ເວລາດົນໂພດ, ອະທິບາຍບໍ່ເຂົ້າກັບເນື້ອໃນ ແລະ ບໍ່ດຶງດູດຄວາມສົນໃຈຂອງຜູ້ຟັງ.
- ຜູ້ບັນລະຍາຍບໍ່ຄໍານຶງເຖິງຄວາມແຕກຕ່າງທາງດ້ານຄວາມຮບຮູ້ຂອງນັກຮຽນ.

ຈາກບັນຫາທີ່ກ່າວມານັ້ນການບັນລະຍາຍບາງຄັ້ງ ເຮັດໃຫ້ຜູ້ຮຽນເກີດຄວາມເບື່ອໜ່າຍ, ເພື່ອຫຼີກເວັ້ນບັນຫາທີ່ກ່າວມານີ້ເວລາບັນລະຍາຍຄູຄວນເຮັດໃຫ້ນັກຮຽນມີສ່ວນຮ່ວມໂດຍການປະສົມປະສານລະຫວ່າງການບັນລະຍາຍ ແລະ ການສົນທະນາກັບນັກຮຽນ ຫຼື ເປີດໂອກາດໃຫ້ນັກຮຽນໄດ້ຊັກຖາມໃນແຕ່ລະໄລຍະຂອງການບັນລະຍາຍ ໃນການບັນລະຍາຍຄູຕ້ອງໄດ້ນໍາໃຊ້ເຕັກນິກຕ່າງໆເຂົ້າໃນການບັນລະຍາຍ ເພື່ອເຮັດໃຫ້ການບັນຍາຍທີ່ໄດ້ຮັບຜົນດີ.

ມີເຕັກນິກງ່າຍດາຍຫຼາຍຢ່າງ ເຊິ່ງບັນຍາຍທີ່ມີຄວາມຊໍານານມັກນໍາໃຊ້ເຂົ້າໃນການບັນຍາຍເພື່ອຖ່າຍທອດຄວາມຮູ້ ໂດຍທົ່ວໄປແລ້ວເຕັກນິກເຫຼົ່ານັ້ນໄດ້ແບ່ງອອກເປັນແຕ່ລະຫົວຂໍ້.

### ຄ. ການຂັ້ນຕົ້ນ ແລະ ລົງທ້າຍ

ວິທີສະເໜີຫຍໍ້ໃນເບື້ອງຕົ້ນເພື່ອໃຫ້ນັກຮຽນຮູ້ວ່າ ການບັນຍາຍຄັ້ງນີ້ ຈະກວມເອົາເລື່ອງໃດແດ່. ການສະເໜີດັ່ງກ່າວຈະສ້າງພາບໃຫ້ນັກຮຽນເຫັນວ່າການບັນຍາຍຈະເປັນໄປແນວ ແລະ ມີຈຸດປະສົງການຮຽນຮູ້ທີ່ຄາດໝາຍໄວ້ແນວໃດ ເພື່ອໃຫ້ເຂົາເຈົ້າຈະຮູ້ວ່າຈະຕ້ອງເອົາໃຈໃສ່ສິ່ງໃດ ແລະ ເພື່ອຫຍັງ.

- ຢຸດການບັນລະຍາຍ 10 ນາທີ ກ່ອນສິ້ນສຸດການບັນລະຍາຍ ເພື່ອສະຫຼຸບ ແລະ ທົບທວນຄືນບັນຫາຕົ້ນຕໍສຳຄັນ, ກ່ຽວກັບຈຸດປະສົງຂອງການບັນລະຍາຍ ຫຼື ເຊື່ອມຕໍ່ຄວາມຮູ້ທີ່ໄດ້ຮຽນມາກັບສິ່ງທີ່ນຳສະເໜີໃນບົດບັນຍາຍຄັ້ງຕໍ່ໄປ ຕ້ອງຈື່ໄວ້ວ່າບໍ່ມີໂອກາດບັນຍາຍເປັນຄັ້ງທີສອງ ໃນການສ້າງຄວາມປະທັບໃຈກ່ອນຈົບການບັນລະຍາຍ.
- ອົງປະກອບສຳຄັນທີ່ດີ ແມ່ນການວາງແຜນ “ເສັ້ນທາງເດີນ” ຂອງການບັນລະຍາຍແມ່ນການອະທິບາຍກ່ຽວກັບສິ່ງທີ່ຜູ້ຮຽນຈະໄດ້ຮັບຟັງ ເມື່ອຮູ້ຈຸດປະສົງຂອງການບັນລະຍາຍແລ້ວຜູ້ຮຽນກໍ່ສາມາດເຂົ້າໃຈເນື້ອເລື່ອງໄດ້ດີດັ່ງຄູໃຊເວລາໜ້ອຍໜຶ່ງເພື່ອສະຫຼຸບຄືນຈຸສຳຄັນຂອງການບັນລະຍາຍໃນຕອນທ້າຍຈະຊ່ວຍໃຫ້ຜູ້ຮຽນຮູ້ວ່າຈຸດໃດຄວນຈົດບັນທຶກແລະ ຈຸດໃດຄວນຮຽນຮູ້ເອົາ.

**ງ. ທັກສະໃນການປາກເວົ້າ**

- ຫາຍໃຈເລິກໆ, ຢືນຕົວຊື່ ແລະ ສົ່ງສຽງອອກໄປ ກໍລະນີນີ້ແມ່ນໃຫ້ຜູ້ບັນລະຍາຍຮຽນຮູ້ວິທີສົ່ງສຽງທີ່ຈະເວົ້າແຮງໆ ບໍ່ຄວນເວົ້າສຽງດັງເກີນໄປ ແຕ່ຕ້ອງຫາຍໃຈໃຫ້ເລິກກວ່າເວລາທຳມະດາ ແລະ ເປັ່ງສຽງໄປໃຫ້ໄກ ແລ້ວລະດັບຄວາມດັງຂອງສຽງຈະດັງກວ່າປົກກະຕິ ໂດຍບໍ່ຈຳເັນຕ້ອງເປັ່ງສຽງໃຫ້ດັງກວ່າເດີມກໍ່ໄດ້
- ເວົ້າໃຫ້ຊ້າ ແລະ ອອກສຽງໃຫ້ຈະແຈ້ງກວ່າປົກກະຕິ.
- ຄວນວາດສາຍຕາໃຫ້ທົ່ວເຖິງ ເວລາບັນຍາຍຕ້ອງໃຊ້ສາຍຕາແນມເບິ່ງນັກຮຽນໃນຫ້ອງໃຫ້ທົ່ວເຖິງເພາະວ່າຄູຫຼາຍຄົນເບິ່ງແຕ່ພຽງສ່ວນໜຶ່ງຂອງຫ້ອງຮຽນເທົ່ານັ້ນ ດັ່ງນັ້ນ, ຜູ້ບັນລະຍາຍຄວນເອົາໃຈໃສ່ສົ່ງສາຍຕາໃຫ່ທົ່ວທຸກຈຸດໃນຫ້ອງຮຽນ.

**ຈ. ກ່ອນ ແລະ ຫຼັງການບັນລະຍາຍ**

ກ່ອນການບັນລະຍາຍຜູ້ບັນຍາຍສາມາດເຮັດຫຍັງໄດ້ແນ່? ໂດຍທົ່ວໄປກ່ອນການບັນລະຍາຍຜູ້ບັນລະຍາຍຄວນປະຕິບັດຕົວດັ່ງລຸ່ມນີ້:

- ວາງແຜນ ແລະ ກະກຽມເອກະສານປະກອບການບັນຍາຍ ເຊັ່ນ:ປຶ້ມຕຳລາ, ປຶ້ມຈາກຫ້ອງສະໝຸດ ແລະ ອື່ນໆ.
- ຄົ້ນຄວ້າວ່າການບັນຍາຍຄັ້ງນີ້ຈະມີຈຸດເລີ່ມຢູ່ບ່ອນໃດ ແລະ ການເລີ່ມຕົ້ນຕ້ອງຄານຶງວ່ານັກຮຽນບາງຄົນຈະຂຶ້ນຫ້ອງຊ້າ ແລະ ຄຳນຶງເຖິງຄວາມຮູ້ສຶກຂອງນັກຮຽນຕ້ອງໄດ້ລໍຖ້າ.
- ຈະມີວິທີເຊື່ອມຕໍ່ບົດບັນຍາຍຄັ້ງນີ້ກັບຄັ້ງກ່ອນແນວໃດ ແລະ ປັບຄວາມຄິດຂອງນັກຮຽນໄປຫາການບັນຍາຍຄັ້ງກ່ອນ ວ່າໃນຕອນທ້າຍພວກເຮົາຢາກໃຫ້ເຂົາເຈົ້າສືບຕໍ່ເຮັດຫຍັງ ແລະ ເຊື່ອມຕໍ່ເຂົ້າຫາການບັນຍາຍໃນຄັ້ງນີ້.

- ຜູ້ບັນຍາຍຕ້ອງຕັດສິນໃຈວ່າຄວາມຮູ້ທີ່ນັກຮຽນຕ້ອງຮັບເອົາຈາກການບັນຍາຍໃນຄັ້ງນີ້ແມ່ນອັນໃດ ແລະ ຄາດຫມາຍຂອງນັກຮຽນທີ່ຕັ້ງໄວ້ແມ່ນຫຍັງ?
- ແບ່ງເວລາແຕ່ສຳລັບການບັນຍາຍ ເຊັ່ນ ເວລາສຳລັບຜູ້ບັນຍາຍ, ເວລານັກຮຽນເພື່ອຈະໄດ້ມີເວລາເຫຼືອສຳລັບການແກ້ໄຂ ຂໍ້ຂ້ອງໃຈ ຫຼື ອະທິບາຍບາງຢ່າງພິ່ມເຕີມຈາກການ ຕອບຖາມຂອງນັກຮຽນ ແລະ ອື່ນໆ.
- ຄົ້ນຄວ້າວິທີການທີ່ດີທີ່ສຸດ ການໃຊ້ສຳນຽງເພື່ອເນັ້ນຫນັກສິ່ງທີ່ສຳຄັນການ, ເຝິກຊ້ອມການໃຊ້ທ່າທາງ ແລະ ການສະແດງອອກທາງສີໜ້າ.
- ຄົ້ນຄວ້າວ່າຈະສາມາດປະຕິບັດຕາມສິ່ງຕໍ່ໄປໃນເວລາດຽວກັນໄດ້ແນວໃດຕໍ່ນັກຮຽນທີ່ຮູ້ເນື້ອໃນຂອງການບັນຍາຍແລ້ວ ນັກຮຽນທີ່ເຫັນວ່າ ການບັນຍາບັນເປັນເລື່ອງທີ່ຍາວ ແລະ ຮັກສາຄວາມສົນໃຈຂອງນັກຮຽນໃນລະດັບປານກາງທົ່ວໄປ.
- ວາງແຜນເພື່ອຈະຮັບມືກັບຄຳຖາມທີ່ບໍ່ຄາດຫວັງອາດຈະເກີດຂຶ້ນ.

## ສ. ສິ່ງທີ່ຕ້ອງປະຕິບັດຫຼັງການບັນຍາຍ

- ທຸກໆຄັ້ງຂອງການບັນຍາຍທີ່ຜ່ານໄປຜູ້ບັນຍາຍຕ້ອງໃຊ້ເວລາຫນ້ອຍໜຶ່ງ ເພື່ອສະທ້ອນຄືນວ່າການບັນລະຍາຍຂອງຕົນດຳເນີນໄປແນວໃດ ໂດຍໃຊ້ວິທີການປະເມີນຜົນ ການບັນລະຍາຍດ້ວຍຮູບແບບຕ່າງໆທີ່ຊຳນານເຫັນວ່າເໝາະສົມ ແລະ ບັນທຶກໄວ້ວ່າສິ່ງໃດທີ່ໄດ້ຮັບຜົນດີ ແລະ ສິ່ງໃດບໍ່ໄດ້ຮັບຜົນດີ ແລະ ເປັນການດີທີ່ສຸດທີ່ຈະຕ້ອງຂຽນຄຳຄິດເຫັນຕ່າງໆ ແລະ ຂຽນຄຳອະທິບາຍຕື່ມໃສ່ໃຫ້ລະອຽດ ເພື່ອເວລາທົບທວນຄືນຈະເຂົ້າໃຈງ່າຍຂຶ້ນ.
- ການຈັດມ້ຽນເອກະສານໃຫ້ດີ ເພື່ອເປັນປະໂຫຍດໃຫ້ແກ່ຜູ້ບັນລະຍາຍໃນຄັ້ງຕໍ່ໄປ ແລະ ເປັນປະໂຫຍດແກ່ຄົນອື່ນນຳອີກ.
- ການຄິດສະທ້ອນຄືນຕໍ່ກັບສິ່ງທີ່ໄດ້ປະຕິບັດມາເຊັ່ນ: ບົດຮຽນປະກອບການສອນ, ເອກະສານທີ່ນຳໄປຢາຍ, ບັນທຶກສິ່ງໃດທີ່ປະຕິບັດໄດ້ດີທີ່ສຸດໃນລະຫວ່າງການບັນລະຍາຍ, ສິ່ງໃດທີ່ຕ້ອງພະຍາຍາມຫຼີກລ້ຽງ, ສິ່ງໃດທີ່ເຮັດໃຫ້ປະຫຼາດໃຈ, ໃນການບັນຍາຍອັນໃດເວົ້າຫຼາຍເກີນໄປ ແລະ ອັນໃດເວົ້າໜ້ອຍເກີນໄປ ຫຼື ພໍດີແລ້ວ.

## ຊ. ສິ່ງທີ່ຄວນປະຕິບັດໃນເວລາດຳເນີນການບັນຍາຍ

❖ ການຄັດເລືອກຄຳເວົ້າ

ການໃຊ້ຄຳເວົ້າເຂົ້າໃນການບັນຍາຍກໍ່ເປັນບັນຫາສຳຄັນທີ່ຜູ້ບັນຍາຍຕ້ອງໄດ້ຄັດເລືອກບນຫາທີ່ຈະນຳມາສະເໜີເພື່ອໃຫ້ຜູ້ຟັງມີຄວາມເຂົ້າໃຈ ການໃຊ້ຄຳເວົ້າລວມມີດັ່ງນີ້:

- ອ່ານຈາກບົດບັນທຶກຂອງຕົນ.
- ອ່ານເອກະສານຕ່າງໆ.
- ທ່ອງຈາກຄວາມຊົງຈຳຂອງຕົນ.
- ເວົ້າແບບຂຽນທວາຍເພື່ອໃຫ້ຜູ້ຟັງບັນທຶກຄວາມເວົ້າເຫຼົ່ານັ້ນ.

- ເວົ້າໂດຍບໍ່ໄດ້ທ່ອງຈາກປຶ້ມ, ແຕ່ເວົ້າອອກມາຈາກສະຕິປັນຍາຂອງຕົນ.
- ອະທິບາຍສິ່ງຕ່າງໆໃຫ້ນັກຮຽນຟັງ.
- ອະທິບາຍແຈ້ງເພື່ອໃຫ້ເຂົ້າໃຈຈຸດສຳຄັນ ຫຼື ອ່ານຈາກບົດບັນທຶກທີ່ຂຽນໄວ້.
- ຕັ້ງຄຳຖາມ.
- ຕອບຄຳຖາມທີ່ຕົນຖາມຂຶ້ນເອງ.
- ມີຄຳເຫັນເພື່ອອະທິບາຍຄຳຕອບຂອງນັກຮຽນກັບຄຳຖາມທີ່ຕົນຕັ້ງຂຶ້ນ.
- ອະທິບາຍຕື່ມເມື່ອນັກຮຽນສະແດງສີໜ້າບໍ່ເຂົ້າໃຈ.
- ລວບລວມເອົາຈຸດສຳຄັນຈາກຄຳຕອບຂອງນັກຮຽນເພື່ອສະຫຼຸບ.
- ມີຄຳເຫັນຕໍ່ນັກຮຽນຈາກສິ່ງທີ່ຕົນໄດ້ອະທິບາຍວ່າເຂົ້າໃຈ ຫຼຫ ວ່າແນວໃດ.
- ອະທິບາຍໃຫ້ນັກຮຽນ ແລ້ວສົນທະນາກັນຖ້າຄຳຕອບມີສອງຕົວເລືອກ ຈະເອົາຈຸດໃດທີ່ດີທີ່ສຸດ ແລະ ໃຫ້ເຂົາເຈົ້າຮູ້ຍ້ອນເຫດຜົນໃດ?
- ເລົ່າເລື່ອງໃດໜຶ່ງເພື່ອສ້າງຈິນຕະນາການໃຫ້ແກ່ຜູ້ຮຽນ.

❖ ການອ່ານໃຫ້ຈົດ

ວິທີນີ້ກໍ່ແມ່ນວິທີໜຶ່ງທີ່ຝຊ້ປະສົມປະສານກັບການບັນລະຍາຍ ເພື່ອໃຫ້ນັກຮຽນໄດ້ບັນທຶກເອົາບັນຫາສຳຄັນ ຫຼື ຄຳສັບຕ່າງໆທີ່ຄູໄດ້ສັງລວມມາ. ແຕ່ການອະທິບາຍໃຫ້ນັກຮຽນເຂົ້າໃຈກໍ່ເປັນວິທີທີ່ໄດ້ຮັບຜົນດີທີ່ສຸດໃນເວລາທີ່ນັກຮຽນມີຄຳສບໃດໜຶ່ງ ແລ້ວພວກເຮົາໃຊ້ຄຳສັບອື່ນເພື່ອອະທິບາຍຄວາມໝາຍຂອງຄຳສັບນັ້ນ.

ໃນເວລາດຽວກັນຜູ້ບັນຍາຍກໍ່ຕ້ອງໃຊ້ຄວາມສາມາດ ໃນການດັດລະດັບສຽງເນັ້ນໜັກຈຸດໃດໜຶ່ງ, ການໃຊ້ພາສາມື ແລະ ການສະແດງອອກໃນດ້ານຕ່າງໆ ບາງຄັ້ງການບັນຍາຍຍັງຕ້ອງໄດ້ໃຊ້ອຸປະກອນເຂົ້າປະກອບບົດບັນຍາຍ ເພື່ອໃຫ້ນັກຮຽນມີຄວາມເຂົ້າໃຈ, ສົນໃຈ, ຊ່ວຍໃຫ້ນັກຮຽນສາມາດບັນທຶກບົດຮຽນດ້ວຍຄວາມເຂົ້າໃຈ ບໍ່ແມ່ນຈະຈົດກ່າຍບົດຮຽນຊື່ໆ.

❖ ການຕັ້ງຄຳຖາມ

ການຕັ້ງຄຳຖາມເປັນວິທີທີ່ດີທີ່ສຸດໃນການຊຸກຍູ້ໃຫ້ນັກຮຽນຊອກຮູ້ກ່ຽວກັບບັນຫາໃດໜຶ່ງມີຫຼາຍວິທີພື້ນຖານທີ່ໃຊ້ທົ່ວໄປໃນການຕັ້ງຄຳຖາມເຊັ່ນ: ຜູ້ໃດ?, ແມ່ນຫຍັງ?, ເວລາໃດ?, ຢູ່ໃສ?.

ນອກຈາກນີ້ຍັງມີຄຳຖາມເຈາະຈົ້ມບາງອັນເຊິ່ງເປັນສິ່ງສຳຄັນ ແລະ ສາມາດໃຊ້ໃນການຖາມນັກຮຽນໃຫ້ອະທິບາຍວ່າເປັນຫຍັງຈິ່ງມີຄວາມຄິດແບບນີ້ເຊັ່ນ:

- ຍ້ອນສາເຫດໃດ?
- ເປັນຫຍັງຈິ່ງເປັນແບບນີ້?
- ດ້ວຍວິທີໃດ?
- ດ້ວຍວິທີໃດອີກ?
- ດ້ວຍພາຫະນະອັນໃດ?
- ກັບໃຜ?

- ຈາກບ່ອນໃດ?
- ອັນໃດແມ່ນຄວາມແຕກຕ່າງລະຫວ່າງ... ແລະ ...

ໃນການຕັ້ງຄຳຖາມຖ້າຜູ້ບັນລະຍາຍຫາກຕັ້ງຄຳຖາມສຳຄັນ ແລະ ຕອບຄຳຖາມເຫຼົ່ານັ້ນເປັນໄລຍະ ຂະນະນັ້ນຄວາມສົນໃຈ ແລະ ຄວາມເອົາໃຈໃສ່ຂອງນັກຮຽນຍິ່ງມີຫຼາຍກວ່າເກົ່າ.

ບັນດາເຕັກນິກທີ່ຊ່ວຍໃຫ້ຜູ້ຟັງການບັນລະຍາຍມີຊີວິດຊີວາ

| ບັນດາເຕັກນິກ | ການດຳເນີນກິດຈະກຳ |
|---|---|
| ຢຸດການບັນລະຍາຍເປັນໄລຍະ | ທຸກ 10-15 ນາທີໃດໃຫ້ພັກການບັນຍາຍເທື່ອໜຶ່ງ ແລະ ມອບກິດຈະກຳໃຫ້ນັກຮຽນເຮັດ:<br>- ສະຫຼຸບສິ່ງທີ່ນັກຮຽນໄດ້ຮຽນມາ, ເລືອກເຟັ້ນເອົາສິ່ງທີ່ນັກຮຽນເຂົ້າໃຈ.<br>- ເລືອກເຟັ້ນສິ່ງທີ່ພາໃຫ້ນັກຮຽນສັບສົນ ແລະ ພະຍາຍາມອະທິບາຍໃນສິ່ງທີ່ນັກຮຽນສັບສົນໃຫ້ກະຈ່າງແຈ້ງ. |
| ຜ່ານຄຳຖາມ ແລະ ຕອບຄຳຖາມ | - ຍຸດທະວິທີທີ່ພາໃຫ້ຈື່ຈຳ:ຜ່ານຄຳຖາມ ແລະ ຕອບຄຳຖາມຂອງນັກຮຽນຄືໃຫ້ນັກຮຽນລົ້ມຄືນຄຳຖາມ ແລະ ຄຳຖາມເພື່ອເປັນຂໍ້ມູນໃຫ້ເພື່ອນຮ່ວມຫ້ອງດຽວກັບຜູ້ໜຶ່ງຖາມ ແລະ ຜູ້ໜຶ່ງຕອບຈົນທົ່ວທັງຫ້ອງຮຽນນັກຮຽນໄດ້ມີໂອກາດລົ້ມຄືນຄຳຖາມ ແລະ ຄຳຕອບນັ້ນໆ.<br>- ນັກຮຽນສາມາດແບ່ງອອກເປັນກຸ່ມ ແລະ ແຕ່ລະເທື່ອໃຫ້ກຸ່ມຕ່າງໆໄດ້ເຮັດກິດຈະກຳສະແດງໃຫ້ໝູ່ເບິ່ງ. |
| ເວົ້າ/ຂຽນ | - ສ້າງໂອກາດໃຫ້ນັກຮຽນໄດ້ພັກເພື່ອຂຽນພຶດຕິກຳສ່ວນຕົວ, ສະຫຼຸບສິ່ງທີ່ນັກຮຽນໄດ້ຍິນ, ບັນດາຄຳຖາມ ຫຼື ສິ່ງອື່ນໆ.<br>- ໃຊ້ເວລາຂຽນ ຫຼື ວາດພາບຄວາມຄິດຂອງນັກຮຽນກ່ຽວກັບຜູ້ບັນຍາຍໄດ້ນຳສະເໜີມາໄລຍະໃດໜຶ່ງ. |
| ບົດໄດ້ຮັບຜົນຂອງການສ້າງປະໂຫຍກ | - ຮອດບ່ອນສຳຄັນໃຫ້ເຊົາບັນຍາຍ ແລະ |

| | |
|---|---|
| | ໃຫ້ນັກຮຽນຕື່ມຄຳເວົ້າໃສ່ປະໂຫຍກລຸ່ມນີ້ໃຫ້ສົມບູນ:<br>ຂ້າພະເຈົ້າຮູ້ສຶກແປກປະຫຼາດທີ່ໄດ້ຮຽນຮູ້…..<br>ຂ້າພະເຈົ້າຍັງສັບສົນກ່ຽວກັບ..................<br>ຂ້າພະເຈົ້າຮຽນຮູ້ກັບ................<br>- ໃຫ້ນັກຮຽນໄດ້ອ່ານຄຳຕອບຂອງຕົນເອງອອກມາ. |
| ບັນດາຄຳຖາມ/ທຸກຄົນຂຽນ | ໃຫ້ນັກຮຽນໄດ້ຂຽນຄຳຕອບຢ່າງໄວວາຕໍ່ກັບຄຳຖາມຂອງຄູທີ່ໄດ້ຕັ້ງຂຶ້ນ ຊຸກຍູ້ໃຫ້ນັກຮຽນໄດ່ຄິດຢ່າງໄວໃນການຕອບຄຳຖາມ ແລະ ໃຫ້ນັກຮຽນໄດ໊ໂອກາດໃນການປຽບທຽບຄຕອບສ່ວນຕົວໃສ່ກັບຄຳຕອບທີ່ມີໃຫ້ ແລະ ໃຫ້ໂອກາດນັກຮຽນໄດ້ອ່ານຄຳຕອບຂອງຕົນເອງ. |
| ການຈັດເປັນຜຽນປ່ຽນກັນແລກປ່ຽນບົດຮຽນ | ໃຫ້ຄຳຖາມ ຫຼື ຫົວຂໍ້ໃດໜຶ່ງເພື່ອໃຫ້ນັກ ຮຽນທີ່ນັ່ງຢູ່ໃຫ້ກັນໄດ້ແລກປ່ຽນບົດຮຽນນຳກັນ ໂດຍການສົນທະນາບັນຫາເຫຼົ່ານັ້ນ. |

## 4. ສື່ການສອນໂລກອ້ອມຕົວສັງຄົມ

### 4.1. ຄວາມໝາຍຂອງສື່ການສອນ Instructional Media

ສຸມາລີ ໄຊຈະເລີນ,2545 ໄດ້ໃຫ້ຄວາມໝາຍຂອງສື່ວ່າ: ສື່ Media ເປັນຕົວເຊື່ອມໂຍງ ຫຼື ສື່ກາງໃນການຖ່າຍທອດ ແລະ ສື່ສານເລື່ອງລາວ, ຂໍ້ມູນ, ຂ່າວສານ, ຄວາມຮູ້, ປະສົບການ, ເຫດການ, ແນວຄວາມຄິດທີ່ຜູ້ສົ່ງຕ້ອງການສົ່ງຫາຜູ້ຮັບ.

ກິດານັນ ມະລິທອງ, 2544 ເວົ້າວ່າສື່ການສອນແມ່ນສິ່ງທີ່ບັນຈຸເນື້ອໃນກ່ຽວກັບການຮຽນ-ການສອນເຊິ່ງສ້າງຂຶ້ນມາໃນຮູບແບບຂອງວັດສະດຸ, ອຸປະກອນ, ເຕັກນິກວິທີການເຊັ່ນ: ເອກະສານ, ຕຳລາຮຽນ, ແຜນພູມ, ແຜ່ນທີ່, ຮູບພາບ, ສະໄລ, ເຄື່ອງວີດີໂອ, ເທັບ, ເຄື່ອງຫຼິ້ນຊີດີ, ລຳໂພງ, ໄມໂຄໂພນ, ຄອມພິວເຕີ, ໂປຣແກຣມຄອມພິວເຕີ, ເຄື່ອງສາຍແອວຊີດີ ແລະ ອື່ນໆ.

ຊານໄຊ ຍິມດິດ, 2548, ໜ້າ 417 ໄດ້ອະທິບາຍກ່ຽວກັບຄວາມໝາຍຂອງສື່ການສອນວ່າ ເປັນຕົວກາງເຊື່ອມໂຍງຄວາມຮູ້, ຄວາມເຂົ້າໃຈ ລະຫວ່າງ ຂໍ້ມູນທີ່ຄູສົ່ງໃຫ້ນັກຮຽນ ເພື່ອໃຫ້ນັກຮຽນປ່ຽນແປງພຶດຕິກຳໄປຕາມຈຸດປະສົງທີ່ຄູວາງໄວ້ ໂດຍສື່ທີ່ຄູໃຊ້ເຂົ້ານັ້ນເອີ້ນວ່າ ສື່ການຮຽນ-ການສອນ.

ສິລິພັດ ເຈດຖາວິໂລດ, 2550, ໜ້າ 71 ເວົ້າວ່າ ສື່ການສອນໝາຍເຖິງສິ່ງຕ່າງໆທີ່ເປັນຕົວຊ່ວຍໃນການຖ່າຍທອດຄວາມຮູ້ຈາກຄູສອນໄປສູ່ນັກຮຽນ ເຊິ່ງຈະຊ່ວຍໃຫ້ນັກຮຽນເກີດການຮຽນຮູ້ຢ່າງມີປະສິດທິພາບ.

ໄຊຍົດ ເລືອງສຸວັນ ໃຫ້ຄວາມໝາຍຂອງສື່ການສອນວ່າເປັນວັດສະດຸ, ອຸປະກອນ, ວິທີການທີ່ໃຊ້ເປັນສື່ກາງໃຫ້ຜູ້ສອນສາມາດສົ່ງ ຫຼື ຖ່າຍທອດຄວາມຮູ້, ປະສົບການ, ທັກສະຕ່າງໆໃຫ້ຜູ້ຮຽນໄດ້ຮຽນຮູ້ຢ່າງມີປະສິດທິພາບ.

ເປຣືອງ ກຸມຸດ ກ່າວວ່າ ສື່ການສອນ ແມ່ນ ສິ່ງຕ່າງໆທີ່ໃຊ້ເປັນເຄື່ອງມື ຫຼື ຊ່ອງທາງສຳລັບການສອນສົ່ງໄປເຖິງຜູ້ຮຽນ ເຮັດໃຫ້ຜູ້ຮຽນສາມາດເກີດການຮຽນຮູ້ຕາມຈຸດປະສົງ ຫຼື ຈຸດມຸ້ງໝາຍຂອງການສອນທີ່ຄູກຳນົດໄວ້.

ດັ່ງນັ້ນ, ຈິ່ງສະຫຼຸບໄດ້ວ່າ ສື່ການສອນໝາຍເຖິງສື່ທີ່ເປັນຕົວກາງໃນການຖ່າຍທອດຄວາມຮູ້, ທັກສະ ແລະ ທັດ ສະນະຄະຕິໃຫ້ແກ່ນັກຮຽນເຊິ່ງເຮັດໃຫ້ຜູ້ຮຽນ ຮຽນຮູ້ຕາມວັດຖຸປະສົງ. ມະນຸດໄດ້ຮູ້ຈັກນຳເອົາສິ່ງປະດິດຕ່າງໆ ນຳໃຊ້ເປັນສື່ການຮຽນ-ການສອນມາແລ້ວເຊັ່ນ: ຮູບພາບ, ໜັງສື, ແຜນທີ່ ແລະ ອື່ນໆ. ເມື່ອມີຄວາມຈະເລີນກ້າວໜ້າທາງດ້ານວິທະຍາສາດເຮັດໃຫ້ມີສິ່ງປະດິດໃໝ່ໆ ແລະ ວິທີການແປກໆເພີ່ມຂຶ້ນເຊັ່ນ: ເທັບ, ວິທະຍຸ, ໂທລະທັດ ແລະ ຄອມພິວເຕີ...ກໍ່ໄດ້ຖືກມານຳໄຊ້ເປັນສື່ການຮຽນ-ການສອນຢ່າງກວ້າງຂວາງ. ເຖິງແມ່ນວ່າຈະໄດ້ມີການໃຊ້ສິ່ງປະດິດທາງວິທະຍາສາດໃໝ່ໆ ຫຼື ຄົ້ນຄິດຫາເທັກນິກວິທີການໃໝ່ມາໃຊ້ເປັນສື່ການຮຽນ-ການສອນຢ່າງຫຼວງຫຼາຍກໍ່ຕາມສື່ການຮຽນ-ການສອນທີ່ເຄີຍຖືກໃຊ້ກັນມາກ່ອນແລ້ວກໍ່ຍັງເປັນເຄື່ອງຊ່ວຍໃນການຮຽນ-ການສອນໄດ້ເປັນຢ່າງດີ.

ສື່ການສອນ ຫຼື ເຄື່ອງປະຈັກຕາໝາຍເຖິງສື່ກາງໃນລະບົບການຈັດການຮຽນ-ການສອນລະຫວ່າງຄູສອນກັບຜູ້ຮຽນໄດ້ແກ່: ວັດສະດຸອຸປະກອນ ແລະ ວິທີການຕ່າງໆທີ່ເຮັດໃຫ້ນັກຮຽນສາມາດຮຽນຮູ້ໄດ້ຢ່າງໄວ ແລະ ມີປະສິດທິພາບ. ການສອນແມ່ນການຖ່າທອດຄວາມຮູ້ລະຫວ່າງຄູໄປສູ່ນັກຮຽນ ສະນັ້ນ, ຈິ່ງມີຄວາມຈຳເປັນຢ່າງຍິ່ງທີ່ຈະຕ້ອງມີການນຳໃຊ້ສື່ປະຈັກຕາເພື່ອເປັນສື່ກາງ, ເປັນພາຫະນະເຊື່ອມຕໍ່ຄວາມຮູ້, ທັດສະນະຄະຕິ, ຄ່ານິຍົມ ແລະ ທັກສະຂອງຄູໄປສູ່ນັກຮຽນ.

ສື່ການຮຽນ-ການສອນໝາຍເຖິງວັດຖຸອຸປະກອນ ແລະ ວິທີການຕ່າງໆທີ່ປະກອບໃນການຮຽນ-ການສອນ ເພື່ອໃຊ້ເປັນສື່ກາງໃນການສື່ຄວາມໝາຍທີ່ຜູ້ສອນຕ້ອງການສົ່ງຫາ ຫຼື ຖ່າຍທອດຄວາມຮູ້ ໄດ້ຢ່າງມີປະສິດທິພາບຕາມຈຸດປະສົງທີ່ວາງໄວ້.

## 4.2. ປະເພດຂອງສື່ການສອນ ແລະ ວິທີການນຳໃຊ້

ສື່ການຮຽນ - ການສອນຈະມີຫຼາກຫຼາຍປະເພດ, ຫຼາຍຮູບແບບ ແລະ ຫຼາຍຂະໜາດທີ່ຂຶ້ນກັບລາຍວິຊາທີ່ຈະສອນແຕ່ໃນນີ້ທີມງານຈະນຳມາສະເໜີປະເພດສື່ການຮຽນ - ການສອນທີ່ຂຶ້ນກັບລາຍວິຊາບາງປະເພດເທົ່ານັ້ນ. ການສອນນອກຈາກຈະຮຽນທິດສະດີແລ້ວມັນກໍ່ຕ້ອງໄດ້ລົງເລິກ ແລະ ຕິດແທດການທົດລອງຕົວຈິງ. ໃນຊີວິດປະຈຳວັນສື່ການສອນທີ່ໄດ້ນຳໃຊ້ຫຼາຍປະກອບເຂົ້າໃນການສອນກໍ່ຈະມີແຜນທີ່, ໜ່ວຍໂລກຈຳລອງ, ວິດີໂອ, ຮູບພາບ, ຮູບແຕ້ມ, ໜັງສືພິມ, ວາລະສານ, ຈາກໂທລະທັດ,ອິນຕາເນັດ... ແຕ່ການນຳໃຊ້

ອຸປະກອນການສອນບາງຢ່າງຍັງບໍ່ທັນເລີກເຊີ່ງ, ກ້ວາງຂວາງ, ຖືກວິທີ ແລະ ຫຼັກການ. ສະນັ້ນ, ທາງທີມງານຈຶ່ງໄດ້ຍົກເອົາບາງປະເດັນຂຶ້ນມານຳສະເໜີດັ່ງນີ້:

**1) ສື່ປະເພດສິ່ງພິມ**

ສື່ປະເພດສິ່ງມີແບ່ງເປັນ 2 ລັກສະນະຄືສິ່ງພິມທີ່ສ້າງຂຶ້ນມາເພື່ອຮັບໃຊ້ການຮຽນ-ການສອນໂດຍກົງເຊັ່ນ: ແບບຮຽນ, ຄູ່ມືຄູ, ແຜນການສອນ, ເອກະສານປະກອບການສອນ, ແບບຝຶກຫັດ, ໃບງານ, ໃບຄວາມຮູ້. ແລະ ສິ່ງພິມທົ່ວໄປທີ່ສາມາດນຳມາໃຊ້ເຂົ້າໃນຂະບວນການຈັດການຮຽນ-ການສອນໄດ້ແກ່: ວາລະສານ, ໜັງສືພິມ, ຈົດໝາຍເຫດ, ໂປສເຕີ , ແຜ່ນພັບ ແລະ ອື່ນໆ

**2) ສື່ປະເພດຮູບພາບ ແລະ ກຣາຟຟິກ**

ຮູບພາບເປັນສື່ການສອນປະເພດໜຶ່ງທີ່ຄູນຳໃຊ້ເຂົ້າໃນການສອນເພື່ອປະກອບການອະທິບາຍ, ບັນລະຍາຍກ່ຽວກັບເລື່ອງລາວ, ເຫດການທີ່ສຳຄັນໃດໜຶ່ງ. ເປັນເຄື່ອງປະຈັກຕາທີ່ໃຊ້ປະສາດສຳຜັດດ້ວຍຕາ. ຮູບພາບທີ່ໃຊ້ເຂົ້າໃນການສອນມີ 2 ຮູບແບບຄືຮູບຖ່າຍ ແລະ ຮູບແຕ້ມ.

ຮູບຖ່າຍໝາຍເຖິງຮູບພາບທີ່ໄດ້ຈາກກິດຈະກຳການຖ່າຍຮູບພາບ ຫຼື ການນຳໃຊ້ກ້ອງຖ່າຍຮູບເພື່ອບັນທຶກເຫດການໃນຊ່ວງເວລາໃດໜຶ່ງສະຖານທີ່ໃດໜຶ່ງເພື່ອເປັນຫຼັກຖານອ້າງອີງກ່ຽວກັບການເຄື່ອນໄຫວກິດຈະກຳຂອງບຸກຄົນ ແລະ ປະກົດການທາງທຳມະຊາດ. ຮູບພາບສ່ວນຫຼາຍຈະມີລັກສະນະຄ້າຍຄືກັບວັດຖຸຂອງຈິງທີ່ສຸດເພື່ອຖືກບັນທຶກໃນໃນເວລາທີ່ເຫດການກຳລັງເກີດຂຶ້ນ.

ຮູບແຕ້ມໝາຍເຖິງຮູບພາບທີ່ໄດ້ຈາກຖ່າຍທອດອາລົມ ຫຼື ຈິນຕະນາການຂອງຜູ້ແຕ້ມຜ່ານການແຕ້ມ ຫຼື ວາດຮູບ ລົງໃສ່ແຜ່ນເຈ້ຍ, ແຜ່ນແພ. ບາງຄັ້ງເປັນການແຕ້ມຮູບຈາກການສັງເກດວັດຖຸຂອງຈິງ. ການແຕ້ມຮູບໃຫ້ຄ້າຍຄືວັດຖຸຂອງຈິງນັ້ນຂຶ້ນກັບຝີມື ແລະ ຈິນຕະນາການ ຫຼື ພອນສະຫວັນຂອງຜູ້ແຕ້ມ.

ສື່ປະເພດການສອນປະເພດກຣາຟຟິກຖືກນຳໃຊ້ຫຼາຍ ເພາະໃຊ້ງານງ່າຍ, ບໍ່ຈຳເປັນຕ້ອງໃຊ້ອຸປະກອນ ຫຼື ເຄື່ອງສາຍ, ເຄື່ອງສຽງ ຫຼື ອຸປະກອນເສີມອີກ. ເຮັດໃຫ້ຫຼາຍຄົນເບິ່ງຂ້າມຄວາມສຳຄັນທັງທີ່ວ່າສື່ການສອນປະເພດນີ້ມີຄວາມສຳຄັນຄືກັບສື່ການສອນປະເພດອື່ນ. ສື່ການສອນປະເພດຮູບກຣາຟຟິກປະກອບດ້ວຍ:

- ແຜ່ນພູມ
- ແຜນທີ່
- ແຜນວາດຊ່ວຍຈື່
- ແຜ່ນສະຖິຕິ

**3) ສື່ປະເພດວັດຖຸ-ອຸປະກອນທີ່ຫາມາໄດ້ໃນທ້ອງຖິ່ນ**

ວັດຖຸທີ່ກ່າວມາຂ້າງເທິງເປັນວັດຖຸທີ່ມີຄຸນຄ່າລາຄາແພງ, ໃຊ້ງົບປະມານຫຼາຍສົມຄວນໃນການຈັດຊື້. ນອກຈາກນີ້ຄູສອນຍັງສາມາດນຳໃຊ້ວັດຖຸຂອງຈິງທີ່ຫາໄດ້ງ່ານໃນທ້ອງຖິ່ນມາເປັນສື່ການສອນໄດ້ອີກດ້ວຍເຊັ່ນ: ກ້ອນຫີນ, ໄມ້, ວັດຖຸທີ່ສາມາດສ້າງຂຶ້ນມາເອງ.

**4) ສື່ປະເພດກິດຈະກຳ**

ເປັນກິດຈະກຳ ຫຼື ຂະບວນການທີ່ຈັດຂຶ້ນສິ່ງເສີມການຮຽນ-ການສອນ ແລະ ເສີມສ້າງປະສົບການໃນການຮຽນຮູ້ແກ່ນັກຮຽນເຊັ່ນ: ການສະແດງລະຄອນ, ການສະແດງບົດບາດສົມມຸດ, ການສາທິດ, ການຈຳລອງເຫດການ, ການຈັດງານວາງສະແດງ, ການທັດສະນະສຶກສານອກສະຖານທີ່

## 5. ກິດຈະກຳ-ການຮຽນການສອນໂລກອ້ອມຕົວສັງຄົມ

ກິດຈະກຳຕ່າງໆທີ່ປະກອບໃນການຮຽນ-ການສອນປະຫັວດສາດ ສ່ວນໃຫຍ່ກໍ່ເປັນກິດຈະກຳທີ່ທີ່ແນໃສ່ການຝຶກຝົນທັດສະນະຕ່າງໆເຊັ່ນ: ການອະທິບາຍ, ການສັງເກດການສະຫຼຸບດ ການທຳນາຍ ແລະ ການຄົ້ນຄິດແບບສ້າງສັນ. ກິດຈະກຳປະຫັວດສາດທີ່ປະກອບການຮຽນການສອນນັ້ນມີຫຼາຍຮູບແບບເຊັ່ນ:

- ກິດຈະກຳສົນທະນາຖາມ-ຕອບກ່ຽວກັບປະຫວັດສາດ-ພູມສາດ
- ກິດຈະກຳເຮັດວຽກ ແລະ ຄົ້ນຄວ້າວຽກເປັນກຸ່ມ
- ກິດຈະກຳຄົ້ນຄວ້າບຸກຄົນ.
- ກິດຈະກຳອະທິບາຍປະກອບສື່

## 6. ການວັດ ແລະ ການປະເມີນ

ການວັດ ແລະ ປະເມີນຜົນເປັນຂັ້ນຕອນໜຶ່ງທີ່ສຳຄັນ ແລະ ຂາດບໍ່ໄດ້ໃນຂະບວນການຈັດການຮຽນການສອນ, ຈຸດປະສົງຕົ້ນຕໍຂອງການວັດແລະປະເມີນຜົນແມ່ນເພື່ອຊ່ວຍເຫຼືອນັກຮຽນໃຫ້ມີຜົນການຮຽນ ດີຂຶ້ນ, ສະນັ້ນ ໃນຊົ່ວໂມງສອນໜຶ່ງໆ ຄູຄວນດຳເນີນການວັດຜົນ 3 ໄລຍະ ຄື: ວັດຜົນກອນສອນ, ວັດຜົນ ໃນຂະນະສອນ ແລະ ວັດຜົນຫຼັງສອນ ເຊິ່ງການວັດຜົນແຕ່ລະຄັ້ງມີຈຸດປະສົ່ງແຕກຕ່າງກັນດັ່ງນີ້:

1. **ການວັດຜົນກ່ອນສອນ**

ແມ່ນການວັດຜົນກອນການສອນບົດໃຫມ່ ເພື່ອຢັ່ງເບິ່ງຄວາມພ້ອມຂອງນັກຮຽນວ່າ ມີຄວາມຮູ້ໃນເລື່ອງທີ່ຈະສອນໃນຊົ່ວໂມງນີ້ຫນ້ອຍ. ຫຼາຍປານໃດເພື່ອຄູຈະໄດ້ຫາວິທີສິ່ງຄວາມຮູ້ໃຫ້ຫຼາຍຂຶ້ນ.

2. **ການວັດຜົນລະຫວ່າງສອນ**

ແມ່ນການວັດຜົນຂະນະທີ່ຄູກຳລັງສອນ ຫຼື ພາຍຫຼັງທີ່ນັກຮຽນເລັດການປະຕິບັດກິດຈະກຳໃດຫນຶ່ງເພື່ອກວດເບິ່ງວ່າມີນັກຮຽນຈຳນວນຫນ້ອຍຫຼາຍປານໃດສຳເລັດ ແລະ ບໍ່ສຳເລັດກິດຈະກຳ ຫຼື ບົດເຝິກຫັດທີ່ຄວາງໃຫ້ເພື່ອຈະໄດ້ຊອກຫາວິທີຊ່ວຍເຫຼືອນັກຮຽນຢ່າງຖືກຕ້ອງ ແລະ ທັນການ.

3. **ການດັດຜົນຫຼັງສອນ:**

ແມ່ນການວັດຜົນຫຼັງການຮຽນຈົບບົດຮຽນຫນຶ່ງໆ. ຄູດຳເນີນການວັດ ເພື່ອ ໃຫ້ຮູ້ວ່າໃນຊົ່ວໂມງນີ້ນັກຮຽນບັນລຸຕາມຈຸດປະສົງຂອງບົດຮຽນຫນ້ອຍຫຼາຍປານໃດ, ມີນັກຮຽນ ຈັກຄົນທີ່ ຄວນໃຫ້ການຊ່ວຍເຫຼືອ ແລະ ຊ່ວຍເຫຼືອໃນດ້ານໃດ.

ສຳລັບຂັ້ນຕອນການວັດ ແລະ ປະເມີນຜົນ ທີ່ບັນຈຸໄວ້ໃນການແນະນຳການສອນແຕ່ລະບົດນັ້ນແມ່ນການວັດຜົນຫຼັງການສອນ ເຊິ່ງຄູຈະໄດ້ວັດຜົນການຮຽນຂອງນັກຮຽນທັງສາມດ້ານ: ຄວາມຮູ້, ທັດສະນະ ຄະຕິ ແລະ ທັກສະ ເຊິ່ງສາມາດເຮັດໄດ້ໂດຍການສັງເກດ, ຕັ້ງຄຳຖາມໃຫ້ນັກຮຽນຕອບ ແລະ ການກວດຜົນ ງານ

ປະຕິບັດຂອງນັກຮຽນ. ສ່ວນການບັນທຶກຜົນຂອງການວັດນັ້ນ ຄູຄວນສ້າງຕາຕະລາງ ໂດຍມີລາຍ ຊື່ຂອງນັກຮຽນ ແລະ ຈຸດ ປະສົງການຮຽນຮູ້ທີ່ຕ້ອງການວັດຜົນ.

## ກິດຈະກຳທ້າຍບົດ

1) ຈົ່ງອະທິບາຍຄວາມໝາຍຂອງການສອນໂລກອ້ອມຕົວທາງສັງຄົມ?
2) ຫຼັກການສອນໂລກອ້ອມຕົວສັງຄົມປະກອບມີຫຍັງແດ່, ອະທິບາຍ?
3) ຈົ່ງບອກ ແລະ ທິບາຍກ່ຽວກັບວິທີການສອນຕ່າງໆທີ່ນຳໃຊ້ເຂົ້າໃນການສອນໂລກອ້ອມຕົວທາງສັງຄົມ
4) ສື່ທີ່ນຳໃຊ້ເຂົ້າໃນການສອນໂລກອ້ມຕົວທາງສັງຄົມປະກອບມີຫຍັງແດ່
5) ຈົ່ງບອກ ແລະ ອະທິບາຍຄວາມໝາຍຂອງການວັດ ແລະ ປະເມີນຜົນໃນການຮຽນວິຊາໂລກອ້ອມຕົວທາງສັງຄົມ?

# ບົດທີ 2

# ການສອນພູມສາດ

## ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

ເພື່ອໃຫ້ນັກຮຽນສາມາດ:

- ❖ ບອກ,ອະທິບາຍ, ວິເຄາະ ແລະ ສັງລວມໄດ້ກ່ຽວກັບເນື້ອໃນ
  - ວິຊາໂລກອ້ອມຕົວຊັ້ນ ປ4 ບົດທີ15  ແຜນຜັງ ແລະ ແຜນທີ່
  - ວິຊາໂລກອ້ມຕົວ ຊັ້ນ ປ 5 ບົດທີ 27 ພູມສັນຖານຂອງປະເທດລາວ
  - ວິຊາໂລກອ້ອມຕົວ ຊັ້ນ ປ5 ບົດທີ 29 ແມ່ນ້ຳໃນປະເທດລາວ
  - ວິຊາໂລກອ້ອມຕົວ ປ 4 ບົດທີ 14 ການອະນຸລັກປ່າໄມ້ ແລະ ສັດປ່າ
  - ວິຊາໂລກອ້ອມຕົວ ປ5 ບົດທີ 32 ການຄ້າ ແລະ ການບໍລິການ
- ❖ ແຕ່ງບົດສອນກ່ຽວກັບ
  - ວິຊາໂລກອ້ອມຕົວຊັ້ນ ປ4 ບົດທີ15  ແຜນຜັງ ແລະ ແຜນທີ່
  - ວິຊາໂລກອ້ມຕົວ ຊັ້ນ ປ 5 ບົດທີ 27 ພູມສັນຖານຂອງປະເທດລາວ
  - ວິຊາໂລກອ້ອມຕົວ ຊັ້ນ ປ5 ບົດທີ 29 ແມ່ນ້ຳໃນປະເທດລາວ
  - ວິຊາໂລກອ້ອມຕົວ ປ 4 ບົດທີ 14 ການອະນຸລັກປ່າໄມ້ ແລະ ສັດປ່າ
  - ວິຊາໂລກອ້ອມຕົວ ປ5 ບົດທີ 32 ການຄ້າ ແລະ ການບໍລິການ
- ❖ ວິເຄາະບົດສອນກ່ຽວກັບ
  - ວິຊາໂລກອ້ອມຕົວຊັ້ນ ປ4 ບົດທີ15  ແຜນຜັງ ແລະ ແຜນທີ່
  - ວິຊາໂລກອ້ມຕົວ ຊັ້ນ ປ 5 ບົດທີ 27 ພູມສັນຖານຂອງປະເທດລາວ
  - ວິຊາໂລກອ້ອມຕົວ ຊັ້ນ ປ5 ບົດທີ 29 ແມ່ນ້ຳໃນປະເທດລາວ
  - ວິຊາໂລກອ້ອມຕົວ ປ 4 ບົດທີ 14 ການອະນຸລັກປ່າໄມ້ ແລະ ສັດປ່າ
  - ວິຊາໂລກອ້ອມຕົວ ປ5 ບົດທີ 32 ການຄ້າ ແລະ ການບໍລິການ
- ❖ ດຳເນີນການສອນໃນຫົວຂໍ້
  - ວິຊາໂລກອ້ອມຕົວຊັ້ນ ປ4 ບົດທີ15  ແຜນຜັງ ແລະ ແຜນທີ່
  - ວິຊາໂລກອ້ມຕົວ ຊັ້ນ ປ 5 ບົດທີ 27 ພູມສັນຖານຂອງປະເທດລາວ
  - ວິຊາໂລກອ້ອມຕົວ ຊັ້ນ ປ5 ບົດທີ 29 ແມ່ນ້ຳໃນປະເທດລາວ
  - ວິຊາໂລກອ້ອມຕົວ ປ 4 ບົດທີ 14 ການອະນຸລັກປ່າໄມ້ ແລະ ສັດປ່າ
  - ວິຊາໂລກອ້ອມຕົວ ປ5 ບົດທີ 32 ການຄ້າ ແລະ ການບໍລິການ

## 1. ວິຊາໂລກອ້ອມຕົວ ຊັ້ນ ປ 5 ບົດທີ 29 ແມ່ນ້ຳໃນປະເທດລາວການສອນກ່ຽວກັບແຜນທີ່ປະເທດລາວ ປ 4

### 1.1. ແຕ່ງບົດສອນ

#### 1.1.1. ວິເຄາະຫຼັກສູດກ່ອນການແຕ່ງບົດສອນ

ວິຊາໂລກອ້ອມຕົວຊັ້ນປະຖົມປີທີ 4 ບົດທີ 15 ແຜນຜັງ ແລະ ແຜນທີ່

1) ວິເຄາະຈຸດປະສົງ

ຕາຕະລາງວິເຄາະຈຸດປະສົງ

| ຫົວຂໍ້ | ເວລາສອນ | ຈຸດປະສົງທາງພຶດຕິກຳ | | | | | | | | ລວມ |
|---|---|---|---|---|---|---|---|---|---|---|
| | | ຄວາມຮູ້ | ເຂົ້າໃຈ | ນຳໄປໃຊ້ | ວິເຄາະ | ສັງເຄາະ | ປະເມີນຄ່າ | ທັກສະ | ຈິດພິສ | |
| 1. ແຜນຜັງ | 60 | 5 | 10 | 15 | - | 10 | - | | | 40 |
| 2. ແຜນທີ່ | 90 | 5 | 15 | 20 | 5 | 15 | - | | | 60 |
| ລວມ | 150 | 10 | 25 | 35 | 5 | 25 | - | | | 100 |

❑ ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ❖ ບອກ ແລະ ອະທິບາຍຄວາມໝາຍຂອງແຜນຜັງ ແລະ ແຜນທີ່ໄດ້.
- ❖ ບອກ ສ່ວນປະກອບທີ່ສຳຄັນຂອງແຜນທີ່ໄດ້.
- ❖ ນຳໃຊ້ແຜນຜັງ ແລະ ແຜນທີ່ເຂົ້າໃນການຮຽນໄດ້ຢ່າງຖືກຕ້ອງ.
- ❖ ນຳໃຊ້ມາດຕາສ່ວນເຂົ້າໃນການແຕ້ມແຜນຜັງ.

2) ວິເຄາະເນື້ອໃນ

ເນື້ອໃນຕົ້ນຕໍຂອງບົດມີ 2 ບັນຫາໃຫຍ່ຄື:

1. ແຜນຜັງ
    - ແຜນຜັງແມ່ນຫຍັງ?
    - ວິທີສ້າງແຜນຜັງ
2. ແຜນທີ່
    - ແຜນທີ່ແມ່ນຫຍັງ?
    - ສ່ວນປະກອບຂອງແຜນທີ່
    - ວິທີການນຳໃຊ້ແຜນທີ່

3) ວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

| ເນື້ອໃນ | ຈຸດປະສົງ |
|---|---|
| 1.ແຜນຜັງ<br>• ແຜນຜັງແມ່ນຫຍັງ?<br>• ວິທີສ້າງແຜນຜັງ<br>2.ແຜນທີ່<br>• ແຜນທີ່ແມ່ນຫຍັງ?<br>• ສ່ວນປະກອບຂອງແຜນທີ່<br>• ວິທີການນຳໃຊ້ແຜນທີ່ | ເພື່ອໃຫ້ນັກຮຽນສາມາດ<br>❖ ບອກ ແລະ ອະທິບາຍຄວາມຫມາຍຂອງແຜນຜັງ ແລະ ແຜນທີ່ ແລະ ວິທີການສ້າງແຜນຜັງໄດ້.<br>❖ ບອກສ່ວນປະກອບທີ່ສຳຄັນຂອງແຜນທີ່ໄດ້.<br>❖ ນຳໃຊ້ແຜນຜັງ ແລະ ແຜນທີ່ເຂົ້າໃນການຮຽນໄດ້ຢ່າງຖືກຕ້ອງ.<br>❖ ນຳໃຊ້ມາດຕາສ່ວນເຂົ້າໃນການແຕ້ມແຜນຜັງ. |

### 1.1.2. ແຕ່ງບົດສອນ

ວິຊາໂລກອ້ອມຕົວເຮົາ ຊັ້ນປະຖົມປີທີ 4

ບົດທີ່ 15 ແຜນຜັງ ແລະ ແຜນທີ່ ເວລາ 3 ຊົ່ວໂມງ

1. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ❖ ບອກ ແລະ ອະທິບາຍຄວາມຫມາຍຂອງແຜນຜັງ ແລະ ແຜນທີ່ໄດ້.
- ❖ ບອກ ສ່ວນປະກອບທີ່ສຳຄັນຂອງແຜນທີ່ໄດ້.
- ❖ ນຳໃຊ້ແຜນຜັງ ແລະ ແຜນທີ່ເຂົ້າໃນການຮຽນໄດ້ຢ່າງຖືກຕ້ອງ.
- ❖ ນຳໃຊ້ມາດຕາສ່ວນເຂົ້າໃນການແຕ້ມແຜນຜັງ.

2. ເນື້ອໃນຕົ້ນຕໍ

ແຜນຜັງ ແລະ ແຜນທີ່ມີສ່ວນປະກອບສຳຄັນເຊັ່ນ: ຊື່ຂອງແຜນຜັງ, ແຜນທີ່, ທິດ ແລະ ມາດຕາສ່ວນ, ການນຳໃຊ້ແຜນຜັງ ແລະ ແຜນທີ່ໄດ້ຢ່າງຖືກຕ້ອງຈະເຮັດໃຫ້ເຮົາຊອກເຫັນຂໍ້ມູນທີ່ຢາກຮູ້ ແລະ ສົນໃຈ.

3. ສື່ການຮຽນ-ການສອນ

- ❖ ແຜນຜັງໂຮງຮຽນ.
- ❖ ແຜນທີ່ການປົກຄອງຂອງ ສປປລາວ.
- ❖ ຮູບແຜນຜັງ ແລະ ແຜນທີ່ຕ່າງໆ ທີ່ສາມາດຫາມາໄດ້.

4. ກິດຈະກຳການຮຽນ-ການສອນ

ຂັ້ນນຳເວລາ 10 ນາທີ

- ກວດການຈຳນວນພົນ
- ກວດກາຄວາມເປັນລະບຽບ
- ທວນຄືນບົດເກົ່າ:

  ຈົ່ງບອກວິທີການອະນຸລັກ ແລະ ປົກປັກຮັກສາປ່າໄມ້ ແລະ ສັດປ່າ? (ໃຫ້ນັກຮຽນຕອບ 2-3 ຄົນ, ຄູສະຫຼຸບຄືນບົດຮຽນເກົ່າ).
- ລ້ຽວເຂົ້າສູ່ບົດໃໝ່: ຄູອີາແຜນທີ່ມາຕິດໄດ່ກະດານ ແລ້ວຖາມວ່ານີ້ແມ່ນຫຍັງ?

ຂັ້ນສອນ ເວລາ 115 ນາທີ

ກິດຈະກຳທີ 1 ສຶກສາແຜນຜັງ

- ຄູໃຫ້ນັກຮຽນວາງປຶ້ມ, ບັນທັດ, ສໍ, ຢາງລຶບໄວ້ເທິງໂຕະ ແລ້ວຢືນສັງເກດເບິ່ງ ຈາກນັ້ນແຕ້ມຮູບທີ່ເຫັນນັ້ນ.
- ຄູໃຫ້ນັກຮຽນສຶກສາແຜນຜັງໃນປຶ້ມແບບຮຽນແລ້ວຕັ້ງຄຳຖາມວ່າ: ແຕ່ລະຄົນເຫັນຫຍັງແດ່ ເມື່ອ ໄດ້ຮັບຄຳຕອບຢ່າງຫຼາກຫຼາຍຈາກນັກຮຽນ ແລ້ວຄູນຳພານັກຮຽນສະຫຼຸບວ່າ: ຮູບເຫຼົ່ານັ້ນແມ່ນແຜນຜັງຂອງມັນ.

ກິດຈະກຳທີ 2 ແຕ້ມແຜນຜັງ

ຄູຕັ້ງຄຳຖາມກັບນັກຮຽນດັ່ງນີ້:

- ❖ ເຮົາແຕ້ມຮູບກະດານໃສ່ເຈ້ຍໃຫ້ເທົ່າກັບຂອງຈິ່ງໄດ້ ຫຼື ບໍ່? ດ້ວຍເຫດໃດ?
- ❖ ກະດານເປັນຮູບສີ່ລ່ຽມມີຂ້າງກວ້າງແລະຂ້າງຍາວ, ເຮົາຈະບເຕຍ້າໃດຫນຶ່ງໄດ້ບໍ່?ຍ້ອນຫຍັງ?
- ❖ ຄູນຳພານັກຮຽນແທກກະດານຕົວຈິ່ງມີລວງຍາວ ແລະ ລວງກວ້າງເທົ່າໃດ? ຈາກນັ້ນຄູແນະນຳໃຫ້ນັກຮຽນແຕ້ມ ໂດຍການຫຍໍ້ເຂົ້າ.ສົມມຸດກະດານຍາວຕົວຈິງ 4ແມັດ, ກວ້າງ 2 ແມັດ. ແຕ່ແຕ້ມໃສ່ເຈ້ຍຍາວ 4 ຊັງຕີແມັດ ແລະ ກວ້າງ 2 ຊັງຕີແມັດ.
- ❖ ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ: ສິ່ງທີ່ເຮົາແຕ້ມນັ້ນເປັນແຜນຜັງຂອງກະດານ. ຄວາມຍາວ 4ຊັງຕີແມັດ ແລະ ກວ້າງ 2 ຊັງຕີແມັດ ແມ່ນຈຳນວນເທື່ອທີ່ຫຼຸດລົ່ນກັນລະຫວ່າງຮູບແຕ້ມ ກະດານ ແລະ ກະດານຈິ່ງເອີ້ນວ່າມາດຕາສ່ວນ
- ❖ ຄູແນະນຳແຕ້ມແຜນຜັງຫ້ອງຮຽນ ຫຼື ໂຮງຮຽນຂອງຕົ້ນ
- ❖ ໃຫ້ນັກຮຽມສົນທະນາຮ່ວມກັນເປັນຮູ່ງວກັບຮູບແຜນຜັງແລ້ວແຕ້ມແຜນຜັງຫ້ອງຮຽນ ຫຼື ໂຮງຮຽນທີ່ຕົ້ນກຳລັງຮຽນຢູ່ພ້ອມຍົກທີ່ຕັ້ງຂອງສິ່ງຕ່າງໆ ນັ້ນ.
- ❖ ຄູໃຫ້ນັກຮຽນອາສາສະຫມັກຂຶ້ນສະເຫນີແຜນຜັງທີ່ຕົນແຕ້ມ, ຫຼັງຈາກນັ້ນຄູ ແລະ ນັກຮຽນກຸ່ມອື່ນສັງ ເກດເບິ່ງແຜນຜັງທີ່ສະເຫນີນັ້ນແຕ່ລະຈຸດ ຫຼື ການຈັດວາງ ໂຕະ, ຕັ່ງ, ກະດານ, ຮູບພາບ.. ທີ່ມີໃນຫ້ອງຮຽນ, ໂຮງຮຽນຖືກຕ້ອງແລ້ວບໍ່ ຖ້າບໍ່ທັນຄົບຖ້ວນສົມບູນກໍຊ່ວຍກັນແຕ້ມຕື່ມໃສ່ໃຫ້ສົມບູນ.

ກິດຈະກຳທີ3 ສົນທະນາກ່ຽວກັບແຜນທີ່

- ❖ ຄູເອົາແຜນທີ່ການປົກຄອງຂອງລາວ, ແຜນທີ່ນະຄອນຫຼວງວຽງຈັນ ຫຼື ແຜນທີ່ແຂວງຕ່າງໆຕິດໄວ້ເທິງກະດານ. ຈາກນັ້ນຄູຕັ້ງຄຳຖາມວ່າ:ທັງຫມົດຮູບທຍຸຕິດໄວ້ເຄິ່ງນັ້ນແມ່ນຜາຍັງ? (ແຜນທີ່)
  - ❖ ແຜນທີ່ມີສ່ວນປະກອບທີ່ສຳຄັນຫຍັງແດ່? (ຊື່, ທິດ, ມາດຕາສ່ວນ, ເຄື່ອງຫມາຍຕ່າງໆ).
  - ❖ ແຜນທີ່ເຫຼົ່ານັ້ນແຕກຕ່າງກັນແນວໃດ?
  - ❖ ຄູໃຫ້ນັກຮຽນບອກຄວາມຫມາຍຂອງແຜນທີ່?
- ❖ ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ: ທັງຫມົດຮູບເຫຼົ່ານັ້ນແມ່ນແຜນທີ່ ແຕ່ມີ, ມີ ຂະຫນາດ, ມາດຕາສ່ວນແຕກຕ່າງກັນ (ແຜນທີ່ການປົກຄອງຂອງລາວ, ແຜນທີ່ນະຄອນຫຼວງ - ແຜນທີ່ແມ່ນການແຕ້ມຫຍໍ້ຂອງພື້ນທີ່ໃດນຶ່ງຢູ່ເທິງຫນ້າໂລກຕາມມາດຕາສ່ວນ ອັນແນ່ນອນ

ກິດຈະກຳທີ4 ເຝິກການນຳໃຊ້ແຜນທີ່

- ❖ ຕູແນະນຳໃຫ້ນັກຮຽນສັງເກດແຜນທີ່ການປົກຄອງຂອງລາວ ຫຼື ແຜນທີ່ອື່ນໆ.
- ❖ ຄູຕັ້ງຄຳຖາມວ່າ:
  - ແຜນທີ່ນີ້ມີຊື່ວ່າແນວໃດ?
  - ຈົ່ງຊີ້ບອກທິດຕ່າງໆຂອງແຜນທີ່.
  - ມາດຕາສ່ວນຂອງແຜນທີ່ນີ້ມີຂະຫນາດເທົ່າໃດ?
  - ຈົ່ງຊີ້ບອກທີ່ຕັ້ງຂອງນະຄອນຫຼວງໃນແຜນທີ່.
  - ຈົ່ງຊີ້ບອກສະຫນາມພົ້ນໃນແຜນທີ່....

ຂັ້ນສະຫຼຸບ ເວລາ 10 ນາທີ

- ❖ ຄູຖາມຂໍ້ຂ້ອງໃຈ ແລະ ອະທິບາຍຂໍ້ຂ້ອງໃຈ (ຖ້າມີ)
- ❖ ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຄືນບົດຮຽນສຳຄັນທີ່ໄດ້ຮຽນ
- ❖ ແນະນຳໃຫ້ນັກຮຽນຈົດບົດຮຽນ

ຂັ້ນວັດ ແລະ ປະເມີນຜົນເວລາ 15 ນາທີ

- ❖ ເຮັດບົດທົດສອບ
  1. ແຜນຜັງແມ່ນຫຍັງ?
  2. ແຜນທີ່ແມ່ນຫຍັງ?
  3. ສ່ວນປະກອບທີ່ສຳຄັນຂອງແຜນທີ່ມີຫຍັງແດ່?
  4. ຈົ່ງສັງເກດແຜນທີ່ການປົກຄອງຂອງລາວ ແລ້ວບອກທີ່ຕັ້ງຂອງນະຄອນຫຼວງ, ສະຫນາມບິນບອກແຂວງຂອງຕົນເອງໃນແຜນທີ່.
- ❖ ສຶກສາແນວຄິດ
- ❖ ມອບວຽກບ້ານ

1.2. ວິເຄາະບົດສອນ

**1.2.1.** ດ້ານຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ❖ ບອກຄວາມຫມາຍຂອງແຜນຜັງ ແລະ ແຜນທີ່ໄດ້.
- ❖ ບອກສ່ວນປະກອບທີ່ສຳຄັນຂອງແຜນທີ່ໄດ້.
- ❖ ນຳໃຊ້ແຜນຜັງ ແລະ ແຜນທີ່ເຂົ້າໃນການຮຽນໄດ້ຢ່າງຖືກຕ້ອງ.
- ❖ ນຳໃຊ້ມາດຕາສ່ວນເຂົ້າໃນການແຕ້ມແຜນຜັງ.

1.2.2. ດ້ານເນື້ອໃນ

1. ແຜນຜັງ

1) ແຜນຜັງແມ່ນຫຍັງ?

ແຜນຜັງແມ່ນ ຮູບແຕ້ມຂອງ ສະຖານທີ່ໃດຫນຶ່ງ ເທິງພື້ນພຽງ ທີ່ສະແດງໃຫ້ເຫັນຂະຫນາດ ແລະ ສະຖານທີ່ນັ້ນໆ ໂດຍເບິ່ງຈາກບ່ອນສູງ ແລະ ຂອບເຂດທີ່ຕັ້ງຂອງສິ່ງນັ້ນໆ.

2) ວິທີສ້າງແຜນຜັງ

ການສ້າງແຜນຜັງໃດຫນຶ່ງ, ກ່ອນອື່ນໃຫ້ສັງເກດເບິ່ງຮູບຮ່າງຂອງສິ່ງນັ້ນ ແລ້ວແທກຂະ ຫນາດຕ່າງໆ, ຈາກນັ້ນຈຶ່ງແຕ້ມລົງໃສ່ເຈ້ຍໂດຍຫຍໍ້ເຂົ້າຕາມມາດ ຕາສ່ວນທີ່ກຳນົດໄວ້.

ມາດຕາສ່ວນ: ມາດຕາສ່ວນແມ່ນອັດຕາສ່ວນລະຫວ່າງຄວາມຍາວ ຫຼື ຂະຫນາດໃນຮູບ ກັບຄວາມຍາວ ຫຼື ຂະ ຫມາດໃນຕົວຈິງ. ມາດຕາສ່ວນຊ່ວຍໃຫ້ເຮົາຮູ້ໄດ້ວ່າຂະຫນາດໃນຮູບຈະ ນ້ອຍກວ່າຕົວຈິງຫຼາຍເທົ່າໃດເທື່ອ. ມາດຕາສ່ວນໃນຮູບສ່ວນຫຼາຍໄດ້ສະແດງໃຫ້ເຫັນດັ່ງນີ້: 1/1000 ມີຄວາມຫມາຍວ່າ: 1 ຊັງຕີແມັດໃນຮູບເທົ່າ ກັບ 1000 ຊັງຕີແມັດຂອງຕົວຈິງ.

ສູດການຄິດໄລ່ມາດຕາສ່ວນມີດັ່ງນີ້:

$$\text{ມາດຕາສ່ວນ} = \frac{\text{ຄວາມຍາວໃນຮູບ}}{\text{ຄວາມຍາວ ໃນຕົວຈິງ}}$$

ຕົວຢ່າງ: ຖ້າເຮົາຢູ່ບ່ອນສູງເບິ່ງສິ່ງຕ່າງໆ ຢູ່ພື້ນທີ່ໃດຫນຶ່ງ ແລ້ວແຕ້ມຮູບສິ່ງເຫຼົ່ານັ້ນຕາມ ຮູບຊົງພາຍນອກຂອງ ມັນກໍແມ ເຮົາໄດ້ແຕ້ມແຜນຜັງຂອງສິ່ງນັ້ນເຊັ່ນ: ໂຮງຮຽນ, ຫ້ອງຮຽນ, ບ້ານ, ວັດ, ຕະຫຼາດ.

2.ແຜນທີ່

1) ແຜນທີ່ແມ່ນຫຍັງ?

ແຜນທີ່ແມ່ນການແຕ້ມຫຍໍ້ຂອງພື້ນທີ່ໃດຫນຶ່ງຢູ່ເທິງຫນ້າໂລກ ຕາມມາດຕາສ່ວນອັນ ແນ່ນອນ. - ການແຕ້ມ ແຜນທີ່ຂອງພື້ນທີ່ໃດຫນຶ່ງສາມາດນຳໃຊ້ຮູບຖ່າຍຈາກບ່ອນສູງ ເພື່ອສຶກສາທີ່ ຕັ້ງຂອງສະຖານທີ່ຕ່າງໆ ແລ້ວຄິດ ໄລໄລຍະທາງນັ້ນໃຫ້ກົງກັບຕົວຈິງ. ຫຼັງຈາກນັ້ນຈຶ່ງຫຍໍ້ເຂົ້າ ຕາມມາດຕາສ່ວນທີ່ກຳນົດໄວ້ ແລະ ໃຊ້ສັນຍາລັກ ໃສ່ບັນດາສະຖານທີ່ນັ້ນໆ ໃຫ້ເຫມາະສົມ.

2) ສ່ວນປະກອບສຳຄັນຂອງແຜນທີ່

ກ) ຊື່: ຊື່ຂອງແຜນທີ່ຊີ້ບອກໃຫ້ເຮົາຮູ້ຂອບເຂດ, ທີ່ຕັ້ງ ແລະ ຂໍ້ມູນຕົ້ນຕໍຂອງສະຖານທີ່ນັ້ນໆ.

ຂ) ທິດ: ແຜນທີ່ຫນຶ່ງໆ ເພິ່ນຈະກຳນົດທິດເພື່ອຢູ່ເທິງ,ເບື້ອງລຸ່ມແມ່ນທິດໃຕ້, ເບື້ອງຂວາແມ່ນທິດຕາເວັນອອກ ແລະ ເບື້ອງຊ້າຍແມ່ນທິດຕາເວັນຕົກ.

ຄ) ເຄື່ອງຫມາຍ: ເຄື່ອງຫມາຍໃນແຜນທີ່ໃຊ້ເພື່ອສະແດງໃຫ້ຮູ້ທີ່ຕັ້ງ, ຂອບເຂດທາງດ້ານພູມ ສາດ, ການປົກຄອງ, ປະຫວັດສາດ

ເຄື່ອງຫມາຍທີ່ສຳຄັນດັ່ງນີ້:




3) ວິທີນຳໃຊ້ແຜນທີ່

ແຜນທີ່ປະກອບມີຫຼາຍປະເພດ ແຕ່ລະປະເພດມີຂໍ້ມູນແຕກຕ່າງກັນ, ເພື່ອຢາກນຳໃຊ້ ແຜນທີ່ໃຫ້ຖືກຕ້ອງເຮົາຄວນປະຕິບັດດັ່ງນີ້:

- ອ່ານຊື່ແຜນທີ່ນັ້ນເພື່ອໃຫ້ຮູ້ວ່າແມ່ນແຜນທີ່ຫຍັງ? (ແຜນທີ່ ການປົກຄອງ, ແຜນທີ່ການທ່ອງທ່ຽວ, ແຜນທີ່ການຕໍ່ສູ້ຂອງບັ້ນຮົບໃດຫນຶ່ງ, ແຜນທີ່ເສດຖະກິດ...).
- ສຶກສາເບິ່ງເຄື່ອງຫມາຍໃນແຜນທີ່.
- ຊອກຫາເປົ້າຫມາຍໃນການຄົ້ນຄວ້າຂໍ້ມູນ

1.2.3. ດ້ານເວລາ

ເວລາໃນການສອນທັງໝົດ 3 ຊົ່ວໂມງ

1. ຂັ້ນນຳ 10 ນາທີ

2. ຂັ້ນສອນ 115 ນາທີ
3. ຂັ້ນສະຫຼຸບ 10 ນາທີ
4. ຂັ້ນວັດ ແລະ ປະເມີນ 15 ນາທີ

1.2.4.ສື່ການຮຽນ-ການສອນ

- ❖ ແຜນຜັງໂຮງຮຽນ.
- ❖ ແຜນທີ່ການຝຶກຄອງຂອງ ສປປລາວ.
- ❖ ຮູບແຜນຜັງ ແລະ ແຜນທີ່ຕ່າງໆ ທີ່ສາມາດຫາມາໄດ້.

1.2.5. ກິດຈະກຳການຮຽນ-ການສອນ

ກິດຈະກຳທີ1 ສຶກສາແຜນຜັງ

ກິດຈະກຳທີ2 ແຕ້ມແຜນຜັງ

ກິດຈະກຳທີ3 ສົນທະນາກ່ຽວກັບແຜນທີ່

ກິດຈະກຳທີ4 ຝຶກການນຳໃຊ້ແຜນທີ່

1.2.6. ການວັດ ແລະ ການປະເມີນຜົນ

ຄູພິຈາລະນາຈາກ:

- ❖ ການຕອບຄຳຖາມ.
- ❖ ການມີສ່ວນຮ່ວມໃນກິດຈະກຳກຸ່ມ.
- ❖ ເຮັດບົດທົດສອບ
    1) ແຜນຜັງແມ່ນຫຍັງ?
    2) ແຜນທີ່ແມ່ນຫຍັງ?
    3) ສ່ວນປະກອບທີ່ສຳຄັນຂອງແຜນທີ່ມີຫຍັງແດ່?

# 2. ການສອນກ່ຽວກັບພູມສັນຖານປະເທດລາວ ປ 5

## 2.1. ແຕ່ງບົດສອນ

### 2.1.1. ວິເຄາະຫຼັກສູດ

ວິຊາໂລກອ້ອມຕົວຊັ້ນປະຖົມປີທີ 5 ບົດທີ 27 ພູມສັນຖານຂອງປະເທດລາວ

1) ວິເຄາະຈຸດປະສົງ

ຕາຕະລາງວິເຄາະຈຸດປະສົງ

| ຫົວຂໍ້ | ເວລາສອນ (ນາທີ) | ຈຸດປະສົງທາງພຶດຕິກຳ | | | | | | | | ລວມ % |
|---|---|---|---|---|---|---|---|---|---|---|
| | | ຄວາມຮູ້ | ເຂົ້າໃຈ | ນຳໄປໃຊ້ | ວິເຄາະ | ສັງເຄາະ | ປະເມີນຄ່າ | ທັກສະ | ຈິດພິໄສ | |
| 1.ລັກສະນະທົ່ວໄປຂອງພູມສັນຖານລາວ | 15 | 5 | 10 | | | | | | | 15 |
| 1. ພູ ແລະ ພູງສູງ | 30 | 5 | 15 | | 10 | | | | | 30 |
| 2. ພູພຽງ | 25 | 5 | 10 | | 5 | | | | | 25 |
| 3. ທົ່ງພຽງ | 30 | 10 | 20 | | 5 | | | | | 30 |
| ລວມ | 100 | 25 | 55 | | 20 | | | | | 100 |

- ❑ ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ບອກ ແລະ ອະທິບາຍລັກສະນະລວມພູມສັນຖານຂອງປະເທດລາວໄດ້
- ບອກ ແລະ ຈຳແນກ ຊື່, ທີ່ຕັ້ງ ແລະ ລັກສະນະຂອງສາຍພູ ພູພຽງ ແລະ ທົ່ງພຽງທີ່ສຳຄັນຂອງລາວໄດ້
- ອະທິບາຍຄວາມສຳຄັນຂອງ, ພູພຽງ ແລະ ທົ່ງພຽງຕໍ່ການຂະຫຍາຍຕົວທາງດ້ານເສດຖະກິດຂອງລາວ

**2) ວິເຄາະເນື້ອໃນ**

ເນື້ອໃນບົດຮຽນແບ່ງອອກເປັນ 4 ບັນຫາໃຫຍ່ຄື:

1. ລັກສະນະທົ່ວໄປຂອງພູມສັນຖານລາວ
2. ສາຍພູ ແລະ ພູສູງ
3. ພູພຽງ
4. ທົ່ງພຽງ

3) ວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

ຕາຕະລາງວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

| ເນື້ອໃນ | ຈຸດປະສົງ |
|---|---|
| - ລັກສະນະທົ່ວໄປຂອງພູມສັນຖານລາວ<br>- ສາຍພູ ແລະ ພູສູງ<br>- ພູພຽງ | - ບອກ ແລະ ອະທິບາຍລັກສະນະລວມພູມສັນຖານຂອງປະເທດລາວໄດ້<br>- ບອກ ແລະ ຈຳແນກ ຊື່, ທີ່ຕັ້ງ ແລະ ລັກສະນະຂອງສາຍພ |

| | |
|---|---|
| - ທົ່ງພຽງ | - ພູພຽງ ແລະ ທົ່ງພຽງທີ່ສຳຄັນຂອງລາວໄດ້<br>- ອະທິບາຍຄວາມສຳຄັນຂອງ, ພູພຽງ ແລະ ທົ່ງພຽງຕໍ່ການຂະຫຍາຍຕົວທາງດ້ານເສດຖະກິດຂອງລາວ |

**2.1.2. ແຕ່ງບົດສອນ**

ວິຊາໂລກອ້ອມຕົວ ຊັ້ນປະຖົມປີທີ 5

ບົດທີ 27 ພູມສັນຖານຂອງປະເທດລາວ ເວລາ 2 ຊົ່ວໂມງ

1. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

1. ບອກ ແລະ ອະທິບາຍລັກສະນະລວມພູມສັນຖານຂອງປະເທດລາວໄດ້
2. ບອກ ແລະ ຈຳແນກ ຊື່, ທີ່ຕັ້ງ ແລະ ລັກສະນະຂອງສາຍພູ ພູພຽງ ແລະ ທົ່ງພຽງທີ່ສຳຄັນຂອງລາວໄດ້
3 ອະທິບາຍຄວາມສຳຄັນຂອງ, ພູພຽງ ແລະ ທົ່ງພຽງຕໍ່ການຂະຫຍາຍຕົວທາງດ້ານເສດຖະກິດຂອງລາວ

2. ເນື້ອໃນຕົ້ນຕໍ

ພູມສັນຖານຂອງປະເທດລາວ ສ່ວນຫຼາຍແມ່ນພູ ແລະ ພູພຽງຊື່ງຢັ່ງຢາຍ ຢູ່ທາງພາກເຫນືອ ແລະ ພາກຕາເວັນອອກ. ສ່ວນທົ່ງພຽງແມ່ນຢູ່ຕາມລ້ອງແມ່ນ້ຳໃຫຍ່, ປະເທດລາວປະກອບມີບ. ພູພຽງ ແລະ ທົ່ງພຽງ ແສຳຄັນຫຼາຍແຫ່ງເຊັ່ນ: ພູເບ້ຍ, ພຊາດ, ພູເຂົາຄວາຍ: ພູພຽງເມືອງພວນ, ພູພຽງນາກາຍ, ພູພຽງບໍລະເວນ, ທົ່ງພຽງວຽງຈັນ, ທົ່ງພຽງສະຫວັນນະເຂດ ແລະ ຈົ່ງພຽງ ຈຳປາສັກ ພູມສັນຖານຂອງປະເທດລາວໄດ້ສ້າງຄວາມສະດວກໃນການພັດທະນາເສດຖະກິດຂອງ ລາວໄດ້ເປັນຢ່າງດີ.

3.ສື່ການຮຽນ - ການສອນ

- ແຜນທີ່ພູມສັນຖານຂອງປະເທດລາວ
- ຮູບພູ ພູພຽງ ແລະ ທົ່ງພຽງ
- ເອກະສານຕ່າງໆທີ່ພົວພັນເຖິງບົດຮຽນ

4.ກິດຈະກຳການຮຽນ - ການສອນ

ຂັ້ນນຳ ເວລາ 5 ນາທີ

- ກວດກາຈຳນວນພົນ
- ກວດກາຄວາມເປັນລະບຽບ
- ທວນຄືນບົດເກົ່າ
  1. ໃນປີ 2005 ພົນລະເມືອງລາວມີເທົ່າ?
  2. ແຂວງໃດມີປະຊາກອນຫຼາຍກວ່າໝູ່?

3. ແຂວງໃດມີປະຊາກອນໜ້ອຍກວ່າໝູ່?

- ລ້ຽວເຂົ້າສູ່ບົດໃໝ່: ຄູເອົາຮູບພູຜາປ່າໄມ້ໃຫ້ນັກຮຽນເບິ່ງ ແລຖາມວ່ານີ້ແມ່ນຮູບຍັງ?

ຂັ້ນສອນ ເວລາ 85 ນາທີ

ຂຽນຫົວບົດໃສ່ກະດານ

ກິດຈະກຳທີ 1 ສັງເກດແຜນທີ່ພູມສັນຖານຂອງປະເທດລາວ

❖ ຄູຕັ້ງຄຳຖາມໃຫ້ນັກຮຽນດັ່ງນີ້:

1. ພູ ແລະ ພູພຽງມີຢູ່ໃສແດ່?
2. ທົ່ງພຽງມີຢູ່ໃສແດ່ ?
3. ເນື້ອທີ່ລະຫວ່າງເຂດພູ ແລະ ທົ່ງພຽງຢູ່ລາວ ອັນໃດຫຼາຍກວ່າກັນ ?

- ໃຫ້ນັກຮຽນອາສາສະໝັກຕອບ
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ

ກິດຈະກຳທີ2 ສົນທະນາໃນກຸ່ມກ່ຽວກັບສາຍພູ, ພູພຽງ ແລະ ທົ່ງພຽງ

❖ ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເຫມາະສົມ. ຈາກນັ້ນໃຫ້ແຕ່ລະກຸ່ມ ຄົ້ນຄວ້າໜຶ່ງຄຳຖາມດັ່ງນີ້:

1. ສາຍພູທີ່ສຳຄັນຂອງປະເທດລາວມີສາຍພູຫຍັງແດ່, ຕັ້ງຢູ່ໃສ ແລະ ສູງຈັກແມັດ
2. ພູພຽງທີ່ສຳຄັນຂອງປະເທດລາວມີພູພຽງໃດແດ່, ຕັ້ງຢູ່ໃສ?
   ທົ່ງພຽງທີ່ສຳຄັນຂອງປະເທດລາວມີທົ່ງພຽງໃດແດ່, ຕັ້ງຢູ່ໃສ ແລະ ທົ່ງພຽງໃດໃຫຍ່ກວ້າງກວ່າຫມູ່?
3. ພູ, ພູພຽງ ແລະ ທົ່ງພຽງມີຄວາມສຳຄັນແນວໃດຕໍ່ການພັດທະນາເສດຖະກິດ

❖ ໃຫ້ຕາງໜ້າກຸ່ມລາຍງານ

❖ ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ

ຂັ້ນສະຫຼຸບ ເວລາ 5 ນາທີ

- ຄູຖາມຂໍ້ຂ້ອງໃຈ ແລະ ສະຫຼຸບ
- ແນະນຳໃຫ້ນັກຮຽນຈົດບົດຮຽນ

ຂັ້ນວັດ ແລະ ປະເມີນຜົນ ເວລາ 5 ນາທີ

- ຄູຕັ້ງຄຳຖາມ:
  1. ຈົ່ງບອກຊື່ ພູ, ພູພຽງ ແລະ ທົ່ງພຽງທີ່ສຳຄັນຂອງລາວ?
- ໃຫ້ນກຮຽນ 2-3 ຄົນຕອບ
- ສຶກວສາແນວຄິດ ແລະ ມອບວຽກບ້ານ

**2.2. ວິເຄາະບົດສອນ**

**2.2.1.** ດ້ານຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

1. ອະທິບາຍລັກສະນະລວມພູມສັນຖານຂອງປະເທດລາວໄດ້

2. ບອກຊື່, ທີ່ຕັ້ງ ແລະ ລັກສະນະຂອງສາຍພູ ພູພຽງ. ແລະ ທົ່ງພຽງທີ່ສຳຄັນຂອງລາວ

3 ອະທິບາຍຄວາມສຳຄັນຂອງພູພຽງ ແລະ ທົ່ງພຽງຕໍ່ການຂະຫຍາຍຕົວທາງດ້ານເສດຖະກິດຂອງລາວ

**2.2.2.** ດ້ານເນື້ອໃນ

ວິຊາໂລກອ້ອມຕົວ ຊັ້ນ ປ 5

ບົດທີ 27 ພູມສັນຖານຂອງປະເທດລາວ

1. ລັກສະນະທົ່ວໄປຂອງພູມສັນຖານ

ປະເທດລາວມີພູ ແລະ ພູພຽງຫຼາຍກວມເຖິງ 80% ເນື້ອທີ່ທັງໝົດຂອງປະເທດ. ພູ ແລະ ພູພຽງສ່ວນຫຼາຍແມ່ນຢູ່ທາງພາກເໜືອ ແລະ ພາກຕາເວັນອອກ. ທົ່ງພຽງສ່ວນຫຼາຍແມ່ນຢູ່ຕາມເຂດລ້ອງແມ່ນ້ຳໃຫຍ່. ເປັນຕົ້ນແມ່ນລ້ອງແມ່ນ້ຳຂອງ.

ພູມສັນຖານຂອງປະເທດລາວແບ່ງອອກເປັນ 4 ເຂດຄື: ເຂດຕາເວັນອອກສຽງເໜືອ. ເຂດຕາເວັນຕົກສຽງເໜືອ. ເຂດພູພຽງພາກໃຕ້ ແລະ ເຂດທົ່ງພຽງລ້ອງແມ່ນ້ຳຂອງ.

2. ພູ ແລະ ສາຍພູທີ່ສຳຄັນ

ພູ ແລະ ສາຍພູສ່ວນຫຼາຍຢູ່ທາງພາກເໜືອ ແລະ ພາກຕາເວັນອອກເປັນພູສູງ ແລະ ເປັນພູຫີນປູນ. ປະເທດລາວມີພູສູງທີ່ສຳຄັນຫຼາຍໜ່ວຍໃນຕາຕະລາງລຸ່ມນີ້:

| ລຳດັບ | ຊື່ ແລະ ທີ່ຕັ້ງ | ລະດັບສູງ (ແມັດ) | ລຳດັບ | ຊື່ ແລະ ທີ່ຕັ້ງ | ລະດັບສູງ (ແມັດ) |
|---|---|---|---|---|---|
| 1 | ພູເບ້ຍ (ຊຽງຂວາງ) | 2 820 | 15 | ພູໄດເຈຍກຸງ (ຫຼວງນ້ຳທາ) | 2 099 |
| 2 | ພູຊາວ (ຊຽງຂວາງ) | 2 690 | 16 | ພູລາວປີ (ຫຼວງພະບາງ) | 2 079 |
| 3 | ພູສາມສຸມ (ຊຽງຂວາງ) | 2 620 | 17 | ພູປານໃຫຍ່ (ຫົວພັນ) | 2 079 |
| 4 | ພູອາທວດ (ເຊກອງ) | 2 500 | 18 | ພູຫອມຈັນ (ຊຽງຂວາງ) | 2 038 |
| 5 | ພູມ້ຽງ (ວຽງຈັນ) | 2 458 | 19 | ພູເຂົ້າໝ້ຽງ (ໄຊຍະບູລີ) | 2 007 |
| 6 | ພູຫວດ (ຫົວພັນ) | 2 452 | 20 | ພູນາແມວ (ອຸດົມໄຊ) | 1 937 |
| 7 | ພູຊ້າງ (ໄຊຍະບູລີ) | 2 330 | 21 | ພູພະຂາວ (ຫຼວງພະບາງ) | 1 870 |
| 8 | ພູຮາວກໍ (ຄຳມວນ) | 2 286 | 22 | ພູດອຍຈີ (ຜົ້ງສາລີ) | 1 842 |
| 9 | ພູງອກໄນ (ອັດຕະປື) | 2 259 | 23 | ພູເລັບ (ຊຽງຂວາງ) | 1 761 |
| 10 | ພູເລີຍ (ຫົວພັນ) | 2 257 | 24 | ພູສັງ (ວຽງຈັນ) | 1 666 |
| 11 | ພູງອກປ່ານ (ອັດຕະປື) | 2 251 | 25 | ພູຈາປາຕາ (ຫຼວງນ້ຳທາ) | 1 588 |

| | | | | | |
|---|---|---|---|---|---|
| 12 | ພູສັນ (ຊຽງຂວາງ) | 2 221 | 26 | ພູປາສັກ (ຈຳປາສັກ) | 1 416 |
| 13 | ພູສາມສາດ (ວຽງຈັນ) | 2 218 | 27 | ພູເຂົາຄວາຍ (ວຽງຈັນ) | 1 026 |
| 14 | ພູສາມາດ (ວຽງຈັນ) | 2 218 | | | |

ພູທີ່ກ່າວມາຂ້າງເທິງນັ້ນ ມີຄວາມສຳຄັນຕໍ່ການດຳລົງຊີວິດຂອງຄົນເຮົາ, ສະໜອງອາຫານ, ເຄື່ອງປາຂອງດົງ, ເປັນບ່ອນປູກຝັງລ້ຽງສັດ ແລະ ທັງເປັນຈຸດຍຸດທະສາດທີ່ສຳຄັນໃນສະໄໝ ຕໍ່ສູ້ຕ້ານຈັກກະພັດຕ່າງດ້າວຂອງປະຊາຊົນບັນດາເຜົ່າ.

3. ພູພຽງທີ່ສຳຄັນ

ປະເທດລາວ ມີພູພຽງຫຼາຍແຫ່ງ ທີ່ຢັ່ງຢາຍແຕ່ເໜືອເຖິງໃຕ້ເຊັ່ນ:

- ພູພຽງເມືອງພວນ (ແຂວງຊຽງຂວາງ) ມີຄວາມສູງສະເລ່ຍປະມານ 1200 ແມັດ ເຖິງ 1400 ແມັດ ເປັນເຂດພູມສັນຖານສູງ ແລະ ເປັນຕົ້ນກຳເນີດຂອງສາຍນ້ຳຫຼາຍສາຍເຊັ່ນ: ນ້ຳງື່ມ, ນ້ຳມັດ, … ເປັນພູພຽງທີ່ມີທົ່ງຫຍ້າກວ້າງຂວາງ ແລະ ມີປ່າໄມ້ໃບເຂັມ (ໃບແປກ, ໃບຮົ້ງ…) ຂະຫຍາຍຕົວດີ.
- ພູພຽງນາກາຍ (ແຂວງຄຳມ່ວນ) ມີຄວາມສູງສະເລ່ຍ 600 ແມັດ ເຖິງ 800 ແມັດ ເປັນພູພຽງທີ່ຕິດຕໍ່ກັນກວ້າງຂວາງ. ເປັນເຂດທີ່ມີໂຄກ, ມີປ່າ ແລະ ທົ່ງຫຍ້າ.
- ພູພຽງບໍລະເວນ (ແຂວງຈຳປາສັກ) ມີຄວາມສູງສະເລ່ຍ 1000 ແມັດ, ພູພຽງນີ້ຕັ້ງຢູ່ລະຫວ່າງກາງເຊໂດນ, ເຊກອງ ແລະ ແມ່ນ້ຳຂອງ. ພູພຽງດັ່ງກ່າວເປັນເຂດທີ່ມີ ດິນອຸດົມສົມບູນ ເໝາະແກ່ການປູກພືດຫຼາຍຊະນິດ.

4. ທົ່ງພຽງທີ່ສຳຄັນ

ທົ່ງພຽງທີ່ກວ້າງໃຫຍ່ ແລະ ມີຄວາມສຳຄັນກວ່າໝູ່ ໃນປະເທດລາວມີ 3 ທົ່ງພຽງຄື: ທົ່ງພຽງວຽງຈັນ, ທົ່ງພຽງສະຫວັນນະເຂດ ແລະ ທົ່ງພຽງຈຳປາສັກ.

- ທົ່ງພຽງວຽງຈັນ: ມີຄວາມສູງສະເລ່ຍ 162 ແມັດ (ທຽບໃສ່ລະນ້ຳທະເລ) ເປັນເຂດດິນອຸດົມສົມບູນ ແລະ ຮາບພຽງດີ, ມີປ່າດົງກວ້າງຂວາງ. ດັ່ງນັ້ນ ຈຶ່ງເປັນອູ່ເຂົ້າອູ່ປາທີ່ສຳຄັນ ໂດຍສະເພາະຢູ່ເຂດນ້ຳງື່ມ ແລະ ນ້ຳລີກ.
- ທົ່ງພຽງສະຫວັນນະເຂດ: ມີຄວາມສູງສະເລ່ຍ 300 ແມັດ, ເປັນທົ່ງພຽງທີ່ກວ້າງຂວາງກ່ວາໝູ່ຢູ່ປະເທດລາວ. ມີດິນດີຢູ່ເຂດລ້ອງນ້ຳເຊບັ້ງໄຟ, ເຊບັ້ງຫຽງເໝາະແກ່ການປູກຝັງລ້ຽງສັດ.
- ທົ່ງພຽງຈຳປາສັກ: ເປັນທົ່ງພຽງທີ່ຕ່ຳ ແລະ ພຽງກວ່າໝູ່ ມີຄວາມສູງສະເລ່ຍແມ່ນ 100 ແມັດ ແລະ ເປັນທົ່ງພຽງກວ້າງຂວາງອັນດັບສອງຂອງລາວ. ຍ້ອນເປັນທົ່ງພຽງດິນດີ ຈຶ່ງເປັນເຂດປູກເຂົ້າ ແລະ ພືດພັນຕ່າງໆທີ່ມີຊື່ສຽງ. ເປັນເຂດປ່າດົງຕຶບໜາກວ້າງໃຫຍ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ.

ບັນດາທົ່ງພຽງດັ່ງກ່າວມີເນື້ອທີ່ດິນກວ້າງຂວາງ, ອຸດົມສົມບູນ, ປ່າດົງດິບໜາ ມີແຫຼ່ງຊັບພະ ຍາກອນທໍາມະຊາດຫຼາຍເໝາະສົມນການປູກຝັງ, ລ້ຽງສັດ ແລະ ໄປມາສະດວກ ຈຶ່ງເຮັດໃຫ້ເສດຖະກິດມີການຂະຫຍາຍຕົວ.

**2.2.3. ດ້ານເວລາ**

ເວລາໃນສອນທັງໝົດ 2 ຊົ່ວໂມງ

1. ຂັ້ນນໍາ ເວລາ 5 ນາທີ
2. ຂັ້ນສອນເວລາ 85 ນາທີ

   ກິດຈະກໍາທີ 1 ສັງເກດແຜນທີ່ພູມສັນຖານຂອງປະເທດລາວ ເວລາ 35 ນາທີ

   ກິດຈະກໍາທີ2 ສົນທະນາໃນກຸ່ມກ່ຽວກັບສາຍພູ, ພູພຽງ ແລະ ທົ່ງພຽງ ເວລາ 50 ນາທີ

3. ຂັ້ນສະຫຼຸບ 5 ນາທີ
4. ຂັ້ນວັດ ແລະ ປະເມີນ5 ນາທີ່

**2.2.4.** ສື່ການຮຽນ - ການສອນ

- ແຜນທີ່ພູມສັນຖານຂອງປະເທດລາວ
- ຮູບພູ ພູພຽງ ແລະ ທົ່ງພຽງ
- ເອກະສານຕ່າງໆທີ່ພົວພັນເຖິງບົດຮຽນ

**2.2.5.** ກິດຈະກໍາການຮຽນ - ການສອນ

ກິດຈະກໍາທີ 1 ສັງເກດແຜນທີ່ພູມສັນຖານຂອງປະເທດລາວ

ກິດຈະກໍາທີ2 ສົນທະນາໃນກຸ່ມກ່ຽວກັບສາຍພູ, ພູພຽງ ແລະ ທົ່ງພຽງ

**2.2.6.** ການວັດ ແລະ ປະເມີນຜົນ

ພິຈາລະນາຄວາມສາມາດຂອງນັກຮຽນຈາກ:

- ການຕອບຄໍາຖາມຂອງນັກຮຽນ
- ການມີສ່ວນຮ່ວມໃນກິດຈະກໍາກຸ່ມ

# 3. ການສອນກ່ຽວກັບແມ່ນໍ້າລໍາເຊ ປ5

## 3.1. ແຕ່ງບົດສອນ

**3.1.1.** ວິເຄາະຫຼັກສູດ

ວິຊາໂລກອ້ອມຕົວຊັ້ນປະຖົມປີທີ 5 ບົດທີ 29 ແມ່ນໍ້າໃນປະເທດລາວ

1) ວິເຄາະຈຸດປະສົງ

ຕາຕະລາງວິເຄາະຈຸດປະສົງ

| ຫົວຂໍ້ | ເວລາສອນ (ນາທີ) | ຈຸດປະສົງທາງພຶດຕິກຳ | | | | | | | | ລວມ % |
|---|---|---|---|---|---|---|---|---|---|---|
| | | ຄວາມຮູ້ | ເຂົ້າໃຈ | ນຳໄປໃຊ້ | ວິເຄາະ | ສັງເຄາະ | ປະເມີນຄ່າ | ທັກສະ | ຈິດພິສັຍ | |
| 1. ແມ່ນ້ຳຂອງ ແລະ ສາຍນ້ຳຕ່າງໆໃນລາວ | 20 | 15 | 5 | | 10 | 15 | | | | 40 |
| 2. ຄວາມສຳຄັນຂອງແມ່ນ້ຳຕໍ່ກັບການພັດທະນາເສດຖະກິດ ແລະ ການຄົມມະນາຄົມ | 30 | 10 | 20 | 10 | | | 5 | | 15 | 60 |
| ລວມ | 50 | 25 | 35 | 10 | 10 | 15 | 5 | | 10 | 100 |

❑ ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ❖ ບອກຕົ້ນກຳເນີດຂອງແມ່ນ້ຳຂອງ ແລະ ສາຂາຂອງມັນ
- ❖ ອະທິບາຍຄວາມສຳຄັນຂອງແມ່ຕໍ່ເສດຖະກິດ-ການຄົມມະນາຄົມ.
- ❖ ເຫັນຄຸນຄ່າຄວາມສຳຄັນ, ມີແນວຄິດລິເລີ່ມໃນການປົກປັກຮັກສາແມ່ນ້ຳ ແລະ ນຳໃຊ້ນ້ຳຢ່າງເປັນປະໂຫຍດ

2) ວິເຄາະເນື້ອໃນ

- ❖ ແມ່ນ້ຳຂອງ ແລະ ສາຍນ້ຳຕ່າງໆໃນລາວ
- ❖ ຄວາມສຳຄັນຂອງແມ່ນ້ຳຕໍ່ກັບການພັດທະນາເສດຖະກິດ ແລະ ການຄົມມະນາຄົມ

3) ວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

ຕາຕະລາງວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

| ເນື້ອໃນ | ຈຸດປະສົງ |
|---|---|
| ▪ ແມ່ນ້ຳຂອງ ແລະ ສາຍນ້ຳຕ່າງໆໃນລາວ<br>▪ ຄວາມສຳຄັນຂອງແມ່ນ້ຳຕໍ່ກັບ | ເພື່ອໃຫ້ນັກຮຽນສາມາດ:<br>❖ ບອກຕົ້ນກຳເນີດຂອງແມ່ນ້ຳຂອງ ແລະ ສາຂາຂອງມັນ<br>❖ ອະທິບາຍຄວາມສຳຄັນຂອງແມ່ຕໍ່ເສດຖະກິດ-ການ |

| | |
|---|---|
| ການພັດທະນາເສດຖະກິດ ແລະ ການຄົມມະນາຄົມ | ຄົມມະນາຄົມ.<br>❖ ເຫັນຄຸນຄ່າຄວາມສຳຄັນ, ມີແນວຄິດລິເລີ່ມໃນການປົກປັກຮັກສາແມ່ນ້ຳ ແລະ ນຳໃຊ້ນ້ຳຢ່າງເປັນປະໂຫຍດ |

**3.1.2. ແຕ່ງບົດສອນ**

ວິຊາໂລກອ້ອມຕົວ ຊັ້ນປະຖົມປີທີ 5

ບົດທີ 29 ແມ່ນ້ຳໃນປະເທດລາວ ເວລາ 1 ຊົ່ວໂມງ

1. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ❖ ບອກຕົ້ນກຳເນີດຂອງແຟ້າຂອງ ແລະ ສາຂາຂອງມັນ
- ❖ ອະທິບາຍຄວາມສຳຄັນຂອງແມ່ຕໍ່ເສດຖະກິດ-ການຄົມມະນາຄົມ.
- ❖ ເຫັນຄຸນຄ່າຄວາມສຳຄັນ, ມີແນວຄິດລິເລີ່ມໃນການປົກປັກຮັກສາແມ່ນ້ຳ ແລະ ນຳໃຊ້ນ້ຳຢ່າງເປັນປະໂຫຍດ

2. ເນື້ອໃນຕົ້ນຕໍ

ແມ່ນ້ຳໃນປະເທດລາວປະກອບມີຫຼາຍສາຍນ້ຳທີ່ສຳຄັນເປັນຕົ້ນແມ່ນແມ່ນ້ຳຂອງເຊິ່ງມີຕົ້ນກຳເນີດ ມາຈາກພູພຽງຕີເບດ(ປະເທດຈີນ). ນອກຈາກນີ້ຍັງມີສາຂາຂອງແມ່ນ້ຳຂອງຫຼາຍສາຍ ແລະ ຍັງມີ ແມ່ນ້ຳຈຳນວນຫນຶ່ງທີ່ໄຫຼອອກສູ່ອ່າວຫວຽດນາມ ເຊິ່ງລ້ວນແຕ່ເປັນສາຫນ້າທີ່ອຸດົມສົມບູນ, ສະຫນອງ ນ້ຳໃຫ້ແກ່ການພັດທະນາທາງດ້ານເສດຖະກິດ ແລະ ການຄົມມະນາຄົມ

3. ສື່ການຮຽນ-ການສອນ
   - ແຜນທີ່ແມ່ນ້ຳ
   - ແຜນການປົກຄອງ
   - ຮູບພາບແມ່ນ້ຳຕ່າງໆ
   - ຮູບເຂື່ອນໄຟຟ້າ
   - ເອກະສານຕ່າງໆທີ່ພົວພັນເຖິງບົດຮຽນ
4. ກິດຈະກຳການຮຽນ-ການສອນ

ຂັ້ນນຳ ເວລາ 5 ນາທີ

- ກວດກາຈຳນວນພົນ
- ກວດກາຄວາມເປັນລະບຽບ
- ທວນຄືນບົດຮຽນເກົ່າ: ໂດຍການຕັ້ງຄຳຖາມ

1. ປະເທດລາວແບ່ງອອກເປັນຈັກລະດູຄືລະດູໃດແນ່ ແຕ່ລະລະດູເລີ່ມແຕ່ເດືອນໃດຫາເດືອນໃດ?

- ລ້ຽວເຂົ້າສູ່ບົດຮຽນ: ໂດຍການຕັ້ງຄຳຖາມ

  ຈົ່ງບອກຊື່ແມ່ນ້ຳ ຫຼື ຫ້ວຍຮ່ອງໜອງບຶງໃນບ້ານຂອງພວກນ້ອງ?

ຂັ້ນສອນ 35 ນາທີ

ຂຽນຫົວບົດໃສ່ກະດານ

ກິດຈະກຳທີ 1 ສັງເກດແຜນທີ່ກ່ຽວກັບແມ່ນ້ຳລຳເຊ

- ຄູແນະນຳໃຫ້ນັກຮຽນທັງເກດແຜນທີ່ແລ້ວຕອບຄຳຖາມດັ່ງນີ້:
  - ແມ່ນ້ຳຂອງມີຕົ້ນກຳຫນົດມາຈາກໃສ?
  - ແມ່ນ້ຳຂອງໄຫຼຜ່ານ ແລະ ລຽບປະເທດໃດແດ່?
  - ໃນປະເທດລາວມີແມ່ນ້ຳສຳຄັນໃດແດ່ທີ່ເປັນສາຂາຂອງແມ່ນ້ຳຂອງ?
  - ແມ່ນ້ຳທີ່ໄຫຼຜ່ານປະເທດລາວແລ້ວໄຫຼສູ່ທະເລຫວຽດນາມແມ່ນ້ຳໃດແດ່?
- ໃຫ້ນັກຮຽນອາສາສະຫນັກຂຶ້ນຊີ້ ແລະ ອະທິບາຍທີ່ຕັ້ງຂອງແມ່ນ້ຳຕ່າງໆເທິງແຜນທີ່
- ແນະນຳໃຫ້ນັກຮຽນອ່ານເນື້ອໃນບົດຮຽນໃນຂໍ້ທີ 1 (ແມ່ຂອງ ແລະ ສາຍນ້ຳຕ່າງໆຂອງລາວ).
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ).

ກິດຈະກຳທີ 2 ສົນທະນາກ່ຽວກັບຄວາມສຳຄັນຂອງແມ່ນ້ຳ

- ຄູຕັ້ງຄຳຖາມໃຫ້ນັກຮຽນຕອບ:

  1. ແມ່ນ້ຳມີຄວາມສຳຄັນໃນການພັດທະນາດ້ານໃດແດ່ (ກະສິກຳ, ອຸດສະຫະກຳ ແລະ ມະນາຄົມ, ການສ້າງເຂື່ອນ ...)
  2. ລາວເຮົາມີເຂື່ອນໄຟຟ້ານ້ຳຕົກໃດແດ່?
- ໃຫ້ນັກຮຽນ 2-3 ຄົນຕອບຄຳຖາມແຕ່ລະຂໍ້ ສຸດທ້າຍຄູສະຫຼຸບ:

ຂັ້ນສະຫຼຸບ ເວລາ 5 ນາທີ

- ຄູຖາມຂໍ້ຂ້ອງໃຈ ແລະ ແກ້ໄຂຂໍ້ຂ້ອງໃຈ (ຖ້າມີ)
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ
- ຄູແນະນຳໃຫ້ຈົດບົດຮຽນ

ຂັ້ນວັດ ແລະ ປະເມີນຜົນເວລາ 5 ນາທີ

- ຄູຕັ້ງຄຳຖາມໃຫ້ນັກຮຽນຕອບ

  1. ແມ່ນ້ຳຂອງມີຕົ້ນກຳເນີດມາຈາກໃສ, ໄຫຼຜ່ານຈັກປະເທດຄືປະເທດໃດແນ່?
  2. ແມ່ນ້ຳມີຄວາມສຳຄັນຫຍັງແນ່?
- ສຶກສາແນວຄິດ

- ມອບວຽກບ້ານ: ໃຫ້ນັກຮຽນອ່ານບົດຮຽນບົດທີ 30 ກະສິກຳໃນລາວ

**3.2. ວິເຄາະບົດສອນ (ວິເຄາະຫຼັກສູດ)**

**3.2.1.** ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ❖ ບອກຕົ້ນກຳເນີດຂອງແມ່ນ້ຳຂອງ ແລະ ສາຂາຂອງມັນ
- ❖ ອະທິບາຍຄວາມສຳຄັນຂອງແມ່ຕໍ່ເສດຖະກິດ-ການຄົມມະນາຄົມ.
- ❖ ມີແນວຄິດລິເລີ່ມໃນການປົກປັກຮັກສາແຫຼ່ງນ້ຳ

**3.2.2.** ເນື້ອໃນ

1. ແມ່ນ້ຳຂອງ ແລະ ສາຍນ້ຳຕ່າງໆຂອງລາວ

ແມ່ນ້ຳຂອງມີຕົ້ນກຳເນີດຈາກພູພຽງຕິເບດ (ປະເທດຈີນ) ມີລວງຍາວທັງໝົດປະມານ 4.500 ກິໂລແມັດ ໄຫຼຜ່ານ 6 ປະເທດຄື: ຈີນ, ລາວ, ຫວຽດນາມ, ມຽນມາ, ໄທ ແລະ ກຳປູເຈຍ. ແມ່ນ້ຳຂອງໄຫຼຜ່ານພູມສັນຖານທີ່ແຕກຕ່າງກັນພາໃຫ້ມີແກ້ງມີຕາດຫຼາຍແຫ່ງ, ທັງໄຫຼຄົດໂຄ້ງ, ມີບ່ອນແຄບ, ບ່ອນເລິກ ແລະ ບ່ອນກວ້າງ... ແມ່ນ້ຳຂອງໄຫຼຜ່ານປະເທດລາວ 1898 ກິໂລແມັດ ເປັນສາຍນ້ຳທີ່ເຕົ້າໂຮມເອົານ້ຳຈາກສາຂາຕ່າງໆ. ນອກຈາກແມ່ນ້ຳຂອງແລ້ວປະເທດລາວຍັງປະກອບມີແມ່ນ້ຳທີ່ສຳຄັນຫຼາຍສາຍ ແລະ ທັງເປັນສາຂາຂອງແມ່ນ້ຳຂອງອີກຄື: ນ້ຳອູ, ນ້ຳທາ, ນ້ຳແບງ, ນ້ຳຄານ, ນ້ຳເຊືອງ, ນ້ຳງື່ມ, ນ້ຳງຽບ, ນ້ຳຊັນ, ນ້ຳຫີນບູນ, ນ້ຳກະດິງ, ນ້ຳເຊບັ້ງຫຽງ, ນ້ຳເຊບັ້ງໄຟ, ນ້ຳເຊໂດນ ແລະ ນ້ຳເຊກອງ. ດັ່ງນັ້ນ ປະລິມານນ້ຳຂອງຈຶ່ງມີຢ່າງຫຼວງຫຼາຍຕະຫຼອດປີ. ນອກຈາກນັ້ນ ຍັງມີແມ່ນ້ຳທີ່ໄຫຼຜ່ານປະເທດລາວແລ້ວໄຫຼສູ່ທະເລຫວຽດນາມຄື: ແມ່ນ້ຳມ້າ, ແມ່ນ້ຳຊຳ ແລະ ແມ່ນ້ຳເນີນ (ຢູ່ແຂວງຫົວພັນ).

2. ຄວາມສຳຄັນຂອງແມ່ນ້ຳຕໍ່ການພັດທະນາເສດຖະກິດ ແລະ ການຄົມມະນາຄົມ

ແມ່ນ້ຳແມ່ນຊັບພະຍາກອນທຳມະຊາດ ທີ່ມີຄວາມສຳຄັນເຊິ່ງມີຄວາມຜູກພັນຕໍ່ການດຳລົງຊີວິດ ແລະ ເສດຖະກິດຂອງຄົນເຮົາມາແຕ່ບູຮານນະການ. ແມ່ນ້ຳສາຍຕ່າງໆເປັນບ່ອນທຳມາຫາກິນ ແລະ ຮັບໃຊ້ການຜະລິດຕ່າງໆເຊັ່ນ: ການປູກຝັງ, ລ້ຽງສັດ, ເສັ້ນທາງຄົມມະນາຄົມ ໃນການໄປມາຫາສູ່ກັນລະຫວ່າງທ້ອງຖິ່ນຕ່າງໆ ແລະ ການສົ່ງສິນຄ້າໄປສູ່ເຂດແຂວງຕ່າງໆ. ນອກຈາກນັ້ນ ແມ່ນ້ຳຍັງເປັນສິ່ງສຳຄັນໃນການ ຜະລິດພະລັງງານໄຟຟ້ານ້ຳຕົກ ທີ່ໄດ້ມາຈາກແຮງນ້ຳເຊັ່ນ: ເຂື່ອນໄຟຟ້ານ້ຳງື່ມ (ແຂວງວຽງຈັນ), ເຂື່ອນໄຟຟ້າຫີນບູນ (ແຂວງຄຳມ່ວນ)... ດັ່ງນັ້ນ ພວກເຮົາຄວນປົກປັກຮັກສາແຫຼ່ງນ້ຳໃຫ້ຄົງຢູ່ຕະຫຼອດໄປ.

**3.2.3.** ດ້ານເວລາ

ເວລາທັງໝົດ 1 ຊົ່ວໂມງ ຫຼື 50 ນາທີ

ຂັ້ນນຳ ເວລາ 5 ນາທີ

ຂັ້ນສອນເວລາ 35 ນາທີ

ຂັ້ນສະຫຼຸບ 5 ນາທີ

ຂັ້ນວັດ ແລະ ປະເມີນ 5 ນາທີ

3.2.4. ສື່ການຮຽນ-ການສອນ

- ແຜນທີ່ແມ່ນໍ້າ
- ແຜນການປົກຄອງ
- ຮູບພາບແມ່ນ້ຳຕ່າງໆ
- ຮູບເຄື່ອນໄຟຟ້າ
- ເອກະສານຕ່າງໆທີ່ພົວພັນເຖິງບົດຮຽນ

3.2.5. ກິດຈະກຳການຮຽນ-ການສອນ

ກິດຈະກຳທີ 1 ສັງເກດແຜນທີ່ກ່ຽວກັບແມ່ນໍ້າລຳເຊ ແລ້ວຕອບຄຳຖາມ

ກິດຈະກຳທີ 2 ສົນທະນາກ່ຽວກັບຄວາມສຳຄັນຂອງແມ່ນໍ້າ

3.2.6. ການວັດ ແລະ ປະເມີນຕົ້ນ

ຄູປະເມີນ ຄວາມສາມາດຂອງນັກຮຽນຈາກ:

- ຄວາມກ້າຫານໃນການມີສ່ວນຮ່ວມໃນກິດຈະກຳຕ່າງໆ
- ການຕອບຄຳຖາມຂອງນັກຮຽນ
- ຕອບແບບທົດສອບຫຼັງການຮຽນ

## 4. ດຳເນີນການສອນທົດລອງ ແລະ ຖອດຖອນບົດຮຽນ

- ຄູອະທິບາຍຮ່າງປະເມີນການສອນ
- ຄູຈັບສະຫຼາກເພື່ອເລືອກເອົານັກຮຽນອອກມາສອນທົດລອງຕາມບົດສອນທີ່ໄດ້ແຕ່ງຕົວຈິງ
- ຖອດຖອນບົດຮຽນ

## 5. ການສອນກ່ຽວກັບການອະນຸລັກປ່າໄມ້ ແລະ ສັດປ່າ ປ4

### 5.1. ແຕ່ງບົດສອນ

5.1.1. ວິເຄາະຫຼັກສູດ

ວິຊາໂລກອ້ອມຕົວຊັ້ນປະຖົມປີທີ 4 ບົດທີ 14 ການອະນຸລັກປ່າໄມ້ ແລະ ສັດປ່າ

1) ວິເຄາະຈຸດປະສົງ

ຕາຕະລາງວິເຄາະຈຸດປະສົງ

| ຫົວຂໍ້ | ເວລາສອນ (ນາທີ) | ຈຸດປະສົງທາງພຶດຕິກຳ | | | | | | | | ລວມ % |
|---|---|---|---|---|---|---|---|---|---|---|
| | | ຄວາມຮູ້ | ເຂົ້າໃຈ | ນຳໄປໃຊ້ | ວິເຄາະ | ສັງເຄາະ | ປະເມີນຄ່າ | ທັກສະ | ຈິດພິໄສ | |
| 1 ການອະນຸລັກແມ່ນຫຍັງ | 20 | 10 | 10 | 10 | | | | | 10 | 40 |
| 2 ພືດ ແລະ ສັດຊະນິດໃດທີ່ຄວນອະນຸ ລັກ | 30 | 15 | 15 | | | 10 | 10 | | 10 | 60 |
| ລວມ | 50 | 25 | 25 | 0 | | 10 | 10 | | 20 | 100 |

- **ຈຸດປະສົງ**

  ເພື່ອໃຫ້ນັກຮຽນສາມາດ:

  1 ບອກຄວາມຫມາຍຂອງການອະນຸລັກ.

  2 ບອກຊື່ ພືດ ແລະ ສັດທີ່ໃກ້ຈະສູນພັນ.

  - ສະເຫນີວິທີການອະນຸລັກພັນພືດ ແລະ ສັດ.
  - ເກີດມີແນວຄິດສະຫງວນນັກ ແລະ ຮັກປ່າໄມ້ ແລະ ສັດປ່າ

2) ວິເຄາະເນື້ອໃນ

   ເນື້ອໃນແບ່ງອອກເປັນ 2 ບັນຫາຕົ້ນຕໍຄື:

   1 ການອະນຸລັກແມ່ນຫັຍງ

   2 ພືດ ແລະ ສັດຊະນິດໃດທີ່ຄວນອະນຸລັກ

3) ວິເຄາະຄວາມສໍາພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

ຕາຕະລາງວິເຄາະຄວາມສໍາພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

| ເນື້ອໃນ | ຈຸດປະສົງ |
|---|---|
| 1 ການອະນຸລັກແມ່ນຫັຍງ<br>2 ພືດ ແລະ ສັດຊະນິດໃດທີ່ຄວນອະນຸລັກ | ເພື່ອໃຫ້ນັກຮຽນສາມາດ:<br>1. ບອກຄວາມຫມາຍຂອງການອະນຸລັກ.<br>2. ບອກຊື່ ພືດ ແລະ ສັດທີ່ໃກ້ຈະສູນພັນ.<br>3 ສະເຫນີວິທີການອະນຸລັກພັນພືດ ແລະ ສັດ. |

| | |
|---|---|
| | 4 ເກີດມີແນວຄິດສະຫງວນມັກ ແລະ ຮັກປ່າໄມ້ ແລະ ສັດປ່າ |

**5.1.2 ແຕ່ງບົດສອນ**

ວິຊາໂລກອ້ອມຕົວ ຊັ້ນປະຖົມປີທີ 4

ບົດທີ 14 ການອະນຸລັກປ່າໄມ້ ແລະ ສັດປ່າ ເວລາ 1 ຊົ່ວໂມງ

1. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

1. ບອກຄວາມຫມາຍຂອງການອະນຸລັກ.
2. ບອກຊື່ ພືດ ແລະ ສັດທີ່ໃກ້ຈະສູນພັນ.
3 ສະເຫນີວິທີການອະນຸລັກພັນພືດ ແລະ ສັດ.
4 ເກີດມີແນວຄິດສະຫງວນມັກ ແລະ ຮັກປ່າໄມ້ ແລະ ສັດປ່າ

2. ເນື້ອໃນຕົ້ນຕໍ

ປ່າໄມ້ ແລະ ສັດປ່າມີຄຸນປະໂຫຍດຕໍ່ຊີວິດຂອງຄົນເຮົາຢ່າງຫຼວງຫຼາຍ. ປັດຈຸບັນມີພືດ ແລະ ສັດ ຫຼາຍຊະນິດຍັງເຫຼືອຫນ້ອຍ, ແລະ ໃກ້ຈະສູນພັນ.ສະນັ້ນ, ພວກເຮົາຕ້ອງປົກປັກຮັກສາພວກມັນໄວ້ໃຫ້ຢືນຍົງຕະຫຼອດໄປ.

3. ສື່ການຮຽນ-ການສອນ

- ຮູບປ່າໄມ້ທີ່ອຸດົມສົມບູນ.
- ຮູບສັດປ່າທີ່ລັດຖະບານລາວກໍານົດໄວ້ເປັນສັດອະນຸລັກ.
- ບັດຄໍາ ຫຼື ຮູບພືດ ແລະ ສັດຊະນິດຕ່າງໆ.

4. ກິດຈະກໍາການຮຽນ-ການສອນ

ຂັ້ນນໍາ 5 ນາທີ

- ກວດກາຈໍານວນພົນ
- ກວດກາຄວາມເປັນລະບຽບ
- ທວນຄືນບົດເກົ່າ: ໃຫ້ນັກຮຽນແຍກບັດຄໍາທີ່ເປັນສິ່ງແວດລ້ອມທາງທໍາມະຊາດ ແລະ ສິ່ງແວດລ້ອມທາງສັງຄົມ.
- ລ້ຽວເຂົ້າສູ່ບົດຮຽນ ຄູຍົກຮູບປ່າໄມ້ທີ່ອຸດົມສົມບູນ ແລະ ຮູບປ່າໄມ້ທີ່ຖືກທໍາລາຍ ແລ້ວໃຫ້ນັກຮຽກອະທິບາຍຮູບທັງສອງໃບ.

ຂັ້ນສອນ ເວລາ 35 ນາທີ

ຂຽນຫົວບົດໃສ່ກະດານ

ກິດຈະກໍາທີ 1 ສົນທະນາກ່ຽວກັບຄວາມໝາຍຂອງການອະນຸລັກປ່າໄມ້ ແລະ ສັດປ່າ

- ຄູຕັ້ງຄຳຖາມ: ຈົ່ງບອກຄວາມໝາຍຂອງການອະນຸລັກປ່າໄມ້ ແລະ ສັດປ່າ

ກິດຈະກຳທີ 2 ເກມການເລືອກບັດຄຳຈັບຄູກັບຮູບພາບສັດ ແລະ ພືດທີ່ຄວນອະນຸລັກ

- ຄູຢາຍບັດຄຳ ຫຼື ຮູບ ໃຫ້ນັກຮຽນຜູ້ລະບັດ.
- ໃຫ້ນັກຮຽນເລືອກເອົາບັດດັ່ງກ່າວວ່າແມ່ນພືດ ແລະ ສັດຊະນິດໃດທີ່ຕ້ອງອະນຸລັກ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບກ່ຽວກັບພືດ ແລະ ສັດທີ່ຕ້ອງອະນຸລັກ.

ກິດຈະກຳທີ 3 ສັງເກດຮູບການທຳລາຍປ່າ ແລະ ສັດ

- ຄູໃຫ້ນັກຮຽນສັງເກດຮູບການທຳລາຍທຳມະຊາດໃນປຶ້ມແບບຮຽນ ແລະ ຮູບອື່ນໆ ທີ່ຫາໄດ້ເຊັ່ນ: (ປ່າທີ່ອຸດົມສົມບູນ ແລະ ສັດທີ່ກຳນົດເປັນສັດອະນຸລັກ; ການທຳລາຍປ່າໄມ້, ການລ່າສັດປ່າມາ ຂາຍ) ແລ້ວຕອບຄຳຖາມ:

1) ນັກຮຽນ ມີຄວາມຮູ້ສຶກແນວໃດຕໍ່ການທຳລາຍປ່າໄມ້ ແລະ ການລ່າສັດ?

2) ແມ່ນໃຜເປັນຜູ້ທຳລາຍປ່າໄມ້, ແມ່ນໃຜເປັນຜູ້ທຳລາຍສັດ?

- ຄູ ແລະ ນັກກຮຽນຮ່ວມກັນສະຫຼຸບ:

ກິດຈະກຳທີ4. ສົນທະນາກຸ່ມກ່ຽວກັບວິທີການອະນຸລັກ ແລະ ປົກປັກຮັກສາປ່າ ແລະ ສັດ

- ແບ່ງນັກຮຽນອອກເປັນ 3 ກຸ່ມ , ໃຫ້ແຕ່ລະກຸ່ມຄົ້ນຄ້ວາ 1 ຄຳຖາມດັ່ງລຸ່ມນີ້:

1) ເປັນຫຍັງຈຶ່ງຕ້ອງອະນຸລັກ ແລະ ປົກປັກຮັກສາສັດ ແລະ ປ່າໄມ້

2) ແມ່ນໃຜແດ່ຈະຕ້ອງມີສ່ວນຮ່ວມໃນການປົກປັກຮັກສາປ່າໄມ້ ແລະ ສັດປ່າ ໃຫ້ຍືນຍົງຕະຫຼອດໄປ,ຍ້ອນຫຍັງ?

3) ພວກເຮົາຈະມີວິທີປ້ອງກັນສັດປ່າ ແລະ ປ່າໄມ້ໄດ້ແນວໃດ? - ໃຫ້ຜູ້ຕາງໜ້າແຕ່ລະກຸ່ມລາຍງານ.

- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ

ຂັ້ນສະຫຼຸບ ເວລາ5 ນາທີ

- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບບົດຮຽນ
- ຄູແນະນຳໃຫ້ນັກຮຽນຈົດບົດຮຽນໃສ່ປຶ້ມ

ຂັ້ນວັດ ແລະ ປະເມີນ ເວລາ 5 ນາທີ

- ຄູໃຫ້ນັກຮຽນບອກຊື່ພືດ ແລະ ສັດທີ່ໃກ້ຈະສູນພັນໃນລາວ
- ໃຫ້ນັກຮຽນບອກວິທີການອະນຸລັກຮັກສາປ່າໄມ້ ແລະ ສັດປ່າ?
- ສຶກສາແນວຄິດໃຫ້ນັກຮຽນເຫັນຄຸນຄ່າຂອງປ່າໄມ້ ແລະ ສັດປ່າ
- ມອບວຽກບ້ານ

- ❖ ແຕ້ມຮູບພາບປ່າໄມ້ທີ່ສົມບູນ ຫຼື ສັດທີ່ກຳລັງໃກ້ຈູສູນພັນ
- ❖ ໃຫ້ນັກຮຽນເອົາດອກໄມ້ມາປູກໃສ້ໜ້າຫ້ອງຮຽນ

**5.2. ວິເຄາະບົດສອນ**

**5.2.1.** ດ້ານຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

1. ບອກຄວາມໝາຍຂອງການອະນຸລັກ.
2. ບອກຊື່ ພືດ ແລະ ສັດທີ່ໃກ້ຈະສູນພັນ.

3 ສະເໜີວິທີການອະນຸລັກພັນພືດ ແລະ ສັດ.

4 ເກີດມີແນວຄິດສະຫງວນມັກ ແລະ ຮັກປ່າໄມ້ ແລະ ສັດປ່າຍິ່ງຂຶ້ນ

**5.2.2.** ດ້ານເນື້ອໃນ

ວິຊາໂລກອ້ອມຕົວ ຊັ້ນປະຖົມປີທີ 4

ບົດທີ 14 ການອະນຸລັກປ່າ ແລະ ສັດ

1. ການອະນຸລັກໝາຍຄວາມວ່າແນວໃດ?

ການອະນຸລັກແມ່ນການຊົມໃຊ້ຢ່າງສົມເຫດສົມຜົນ, ປະຢັດສິ່ງທີ່ຫາຍາກ, ຄິດກ່ອນໃຊ້ ແລະ ບູລະນະສິ່ງທີ່ເຊື່ອມໂຊມ.

2. ພືດ ແລະ ສັດຊະນິດໃດແດ່ທີ່ຄວນອະນຸລັກ?

ພືດທີ່ຕ້ອງອະນຸລັກມີຫຼາຍຊະນິດ, ສຳລັບຢູ່ປະເທດລາວເຮົາມີຄື: ໄມ້ໂລ່ງເລ່ງ, ໄມ້ຄະຍູງ, ໄມ້ດູ່, ໄມ້ແຄນ...

ສັດທີ່ຕ້ອງອະນຸລັກມີຫຼາຍຊະນິດ, ສຳລັບລາວເຮົາມີຄື: ເສືອ, ສິງ, ຟານ, ນົກຍູງ, ກະຮອກ, ລິ່ນ, ແຮດສອງນໍ, ນົກຂຽນ, ໄກ່ຂວາ, ເສົາຫຼາ, ໝູງວງ, ນົກແອ່ນຕາຂາວ, ປາຂ່າ, ເຍືອງ, ກະທິງ, ເມີຍ, ທະນີ...

3. ພວກເຮົາຈະມີວິທີອະນຸລັກປ່າໄມ້ ແລະ ສັດໄດ້ແນວໃດ?

ວິທີອະນຸລັກປ່າໄມ້ ແລະ ສັດປ່າມີຄື:

- ຊອກວິທີການຂະຫຍາຍພັນພືດ ແລະ ສັດທີໃກ້ຈະສູນພັນ.
- ກຳນົດເຂດປ່າສະຫງວນ
- ບໍ່ຈູດປ່າ ຫຼື ຖາງປ່າຊະຊາຍ
- ສ້າງສວນສັດ ແລະ ສວນພືດ
- ບໍ່ລ່າ, ບໍ່ກິນ ແລະ ບໍ່ຄ້າຂາຍສັດປ່າ
- ປູກຕົ້ນໄມ້ທົດແທນປ່າທີ່ສູນເສຍໄປ

**5.2.3.** ດ້ານເວລາ

ເວລາທີ່ໃຊ້ເຂົ້າໃນການສອນ 1 ຊົ່ວໂມງ

ຂັ້ນນຳ 5 ນາທີ

ຂັ້ນສອນ 35 ນາທີ

ຂັ້ນສະຫຼູບ 5 ນາທີ

ຂັ້ນວັດ ແລະ ປະເມີນ 5 ນາທີ

**5.2.4.** ດ້ານສື່ການຮຽນ-ການສອນ

- ຮູບປ່າໄມ້ທີ່ອຸດົມສົມບູນ.
- ຮູບສັດປ່າທີ່ລັດຖະບານລາວກຳນົດໄວ້ເປັນສັດອະນຸລັກ.
- ບັດຄຳ ຫຼື ຮູບພືດ ແລະ ສັດຊະນິດຕ່າງໆ.

**5.2.5.** ດ້ານກິດຈະກຳການຮຽນ-ການສອນ

ກິດຈະກຳທີ 1 ສົນທະນາກ່ຽວກັບຄວາມໝາຍຂອງການອະນຸລັກປ່າໄມ້ ແລະ ສັດປ່າ

ກິດຈະກຳທີ 2 ເກມການເລືອກບັດຄຳຈັບຄູ່ກັບຮູບພາບສັດ ແລະ ພືດທີ່ຄວນອະນຸລັກ

ກິດຈະກຳທີ 3 ສັງເກດຮູບການທຳລາຍປ່າ ແລະ ສັດ

ກິດຈະກຳທີ4. ສົນທະນາກຸ່ມກ່ຽວກັບວິທີ່ການອະນຸລັກ ແລະ ປົກປັກຮັກສາປ່າ ແລະ ສັດ

**5.2.6.** ດ້ານການວັດ ແລະ ການປະເມີນຜົນ

ຄູສາມາດປະເມີນຄວາມສາມາດນັກຮຽນຈາກ:

- ການຕອບຄຳຖາມ
- ການມີສ່ວນຮ່ວມໃນການເຮັດກິດຈະກຳກຸ່ມ
- ຜົນງານການແຕ້ມຮູບພາບ

## 6. ການສອນກ່ຽວກັບການຄ້າ ແລະ ການບໍລິການ ປ5

### 6.1. ແຕ່ງບົດສອນ

### 6.1.1.ວິເຄາະຫຼັກສູດ

ວິຊາໂລກອ້ອມຕົວຊັ້ນປະຖົມປີທີ 5 ບົດທີ 32 ການຄ້າ ແລະ ການບໍລິການ

ວິເຄາະຈຸດປະສົງ

ຕາຕະລາງວິເຄາະຈຸດປະສົງ

| ຫົວຂໍ້ | ເວລາສອນ (ນາທີ) | ຈຸດປະສົງທາງພຶດຕິກຳ | | | | | | | | % ຂວາ |
|---|---|---|---|---|---|---|---|---|---|---|
| | | ຄວາມຮູ້ | ເຂົ້າໃຈ | ນຳໄປໃຊ້ | ວິເຄາະ | ສັງເຄາະ | ປະເມີນຄ່າ | ທັກສະ | ຈິດພິໄສ | |
| 1.ການຄ້າ ແລະ ການບໍລິການ | 20 | 5 | 15 | | | | | | | 20 |
| 2.ການຄ້າໃນລາວ | 30 | 15 | | | 10 | 5 | | | | 30 |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 3.ການບໍລິການໃນລາວ | 30 | 15 | | | 10 | 5 | | | | 30 |
| 4.ຄວາມສຳຄັນຂອງການຄ້າ ແລະ ການບໍລິການ | 20 | 5 | 15 | | | | | | | 20 |
| ລວມ | | 40 | 30 | | 20 | 10 | | | | 100 |

❑ ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍຂອງການຄ້າ ແລະ ການບໍລິການ
- ບອກ ແລະ ຈຳແນກປະເພດສິນຄ້າຕົ້ນຕໍ ແລະ ການບໍລິການຢູ່ລາວ
- ອະທິບາຍຄວາມສຳຄັນຂອງການຄ້າ ແລະ ການບໍລິການ
- ບອກຊື່ສິນຄ້າ ແລະ ການບໍລິການທີ່ຜິດກົດໝາຍ

2)ວິເຄາະເນື້ອໃນ

ເນື້ອໃນແບ່ງເປັນ 4 ບັນຫາໃຫຍ່ຄື:

❖ ການຄ້າ ແລະ ການບໍລິການ

❖ ການຄ້າໃນລາວ

❖ ການບໍລິການໃນລາວ

❖ ຄວາມສຳຄັນຂອງການຄ້າ ແລະ ການບໍລິການ

3)ວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

ຕາຕະລາງວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

| ເນື້ອໃນ | ຈຸດປະສົງ |
|---|---|
| ❖ ການຄ້າ ແລະ ການບໍລິການ<br>❖ ການຄ້າໃນລາວ<br>❖ ການບໍລິການໃນລາວ<br>❖ ຄວາມສຳຄັນຂອງການຄ້າ ແລະ ການບໍລິການ | ເພື່ອໃຫ້ນັກຮຽນສາມາດ:<br>❖ ອະທິບາຍຄວາມໝາຍຂອງການຄ້າ ແລະ ການບໍລິການ<br>❖ ບອກ ແລະ ຈຳແນກປະເພດສິນຄ້າຕົ້ນຕໍ ແລະ ການບໍລິການຢູ່ລາວ<br>❖ ອະທິບາຍຄວາມສຳຄັນຂອງການຄ້າ ແລະ ການບໍລິການ<br>❖ ບອກຊື່ສິນຄ້າ ແລະ ການບໍລິການທີ່ຜິດກົດໝາຍ |

### 6.1.2. ແຕ່ງບົດສອນ

ວິຊາໂລກອ້ອມຕົວ ຊັ້ນປະຖົມປີທີ 5

ບົດທີ 32 ການຄ້າ ແລະ ການບໍລິການ ເວລາ 2 ຊົ່ວໂມງ

1. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ❖ ອະທິບາຍຄວາມຫມາຍຂອງການຄ້າ ແລະ ການບໍລິການ
- ❖ ບອກປະເພດສິນຄ້າຕົ້ນຕໍ ແລະ ການບໍລິການຢູ່ລາວ
- ❖ ອະທິບາຍຄວາມສຳຄັນຂອງການຄ້າ ແລະ ການບໍລິການ
- ❖ ບອກຊື່ສິນຄ້າ ແລະ ການບໍລິການທີ່ຜິດກົດຫມາຍ

2. ເນື້ອໃນຕົ້ນຕໍ

ການຄ້າ ແລະ ການບໍລິການຂອງລາວປະກອບມີຫຼາຍປະເພດ: ໃນປະຈຸບັນມີການຊື້ຂາຍແລກປ່ຽນທາງພາຍໃນ ແລະ ຕ່າງປະເທດຢ່າງກວ້າງຂວາງ, ມີຫຼາຍເຂດ ແຂວງໄດ້ກາຍເປັນສູນກາງການຄ້າ ແລະ ການບໍລິການ.

3. ສື່ການຮຽນ-ການສອນ

- ❖ ຮູບພາບປະເພດສິນຄ້າຕ່າງໆ
- ❖ ຮູບພາບໂຮງແຮມ, ໂຮງຫມໍ, ຮ້ານຄ້າ, ຕະຫຼາດ ...
- ❖ ເອກະສານທີ່ພົວພັນເຖິງບົດຮຽນ

4. ກິດຈະກຳການຮຽນ-ການສອນ

ຂັ້ນນຳ ເວລາ 5 ນາທີ

- ❖ ກວດກາຈຳນວນພົນ
- ❖ ກວດກາຄວາມເປັນລະບຽບ
- ❖ ທວນຄືນບົດຮຽນເກົ່າຄູຕັ້ງຄຳຖາມໃຫ້ນັກຮຽນຕອບ:

  ຈົ່ງບອກຂະແໜງອຸດສະຫະກຳ ແລະ ຫັດຖະກຳທີ່ສຳຄັນຂອງລາວ?
- ❖ ລ້ຽວເຂົ້າສູ່ບົດຮຽນໂດຍຄູນຳເອົາຮູບພາບກ່ຽວກັບສິນຄ້າກະສິກຳ ແລະ ຂະແໜງການບໍລິການໃຫ້ນັກຮຽນເບິ່ງພ້ອມຖາມວ່າ ພວກນ້ອງສັງເກດເຫັນຫຍັງແນ່ໃນຮູບພາບ?

ຂັ້ນສອນ ເວລາ 80 ນາທີ

- ❖ ຄູຂຽນຫົວບົດໃສ່ກະດານ

ກິດຈະກຳທີ 1 ລະດົມສະຫມອງກ່ຽວກັບການຄ້າ ແລະ ການບໍລິການ

- ❖ ຄູຕັ້ງຄຳຖາມໃຫ້ນັກຮຽນຕອບດັ່ງນີ້:

1. ການຄ້າ ແລະ ການບໍລິການແມ່ນຫຍັງ?

- ❖ ຄູໃຫ້ນັກຮຽນອາສາສະໜັກອະທິບາຍໃຫ້ທຸກຄົນໃນຫ້ອງຟັງ
- ❖ ຄູສະຫຼຸບຄືນ

ກິດຈະກຳທີ 2 ສົນທະນາຄົ້ນຄວ້າກ່ຽວກັບການຄ້າ, ການບໍລິການ ແລະ ຄວາມສຳຄັນຂອງການຄ້າ ແລະ ການບໍລິການໃນປະເທດລາວ.

- ❖ ຄູແບ່ງນັກຮຽນອອກເປັນ 7 ກຸ່ມ
- ❖ ຈາກນັ້ນແບ່ງຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າດັ່ງນີ້:
    1. ການຄ້າໃນປະເທດລາວປະຈຸບັນເປັນແນວໃດ?
    2. ປະເພດສິນຄ້າທີ່ລາວເຮົາສົ່ງອອກຂາຍຕ່າງປະເທດມີຫຍັງແດ່?
    3. ປະເພດສິນຄ້າທີ່ລາວນຳເຂົ້າມາມີຫຍັງແດ່?
    4. ການບໍລິການໃນປະເທດລາວມີດ້ານໃດແດ່?
    5. ການຄ້າ ແລະການບໍລິການປະເພດໃດນຳລາຍໄດ້ມາໃຫ້ປະເທດຊາດ?
    6. ການຄ້າ ແລະ ການບໍລິການທີ່ຜິດກົດໝາຍມີຫຍັງແດ່ ຈົ່ງຍົກຕົວຢ່າງ?
    7. ນັກຮຽນມີຄວາມຮູ້ສຶກແນວໃດຕໍ່ຜູ້ທີ່ເຮັດການຄ້າ ການຜິດກົດໝາຍ?
- ❖ ໃຫ້ຕາງໜ້າກຸ່ມລາຍງານ, ກຸ່ມອື່ນປະກອບຄວາມຄິດເຫັນ
- ❖ ຄູຊ່ວຍສະຫຼຸບແຕ່ລະຂໍ້

ຂັ້ນສະຫຼຸບ ເວລາ 5 ນາທີ

- ❖ ຄູຖາມຂໍ້ຂ້ອງໃຈ ແລະ ອະທິບາຍຂໍ້ຂ້ອງໃຈ (ຖ້າມີ)
- ❖ ໃຫ້ນັກຮຽນສະຫຼຸບຄືນບົດຮຽນທີ່ໄດ້ຮຽນມາ
- ❖ ແນະນຳໃຫ້ນັກຮຽນຈົດບົດຮຽນ

ຂັ້ນວັດ ແລະ ປະເມີນຜົນ 10 ນາທີ

- ❖ ຄູໃຫ້ນັກຮຽນເຮັດບົດທົດສອບດ້ວຍການຕອບຄຳຖາມ
    1) ການຄ້າໃນປະເທດລາວປະຈຸບັນເປັນແນວໃດ?
    2) ປະເພດສິນຄ້າທີ່ລາວເຮົາສົ່ງອອກຂາຍຕ່າງປະເທດມີຫຍັງແດ່?
    3) ປະເພດສິນຄ້າທີ່ລາວນຳເຂົ້າມາມີຫຍັງແດ່?
    4) ການບໍລິການໃນປະເທດລາວມີດ້ານໃດແດ່?
    5) ການຄ້າ ແລະການບໍລິການປະເພດໃດນຳລາຍໄດ້ມາໃຫ້ປະເທດຊາດ?
    6) ການຄ້າ ແລະ ການບໍລິການທີ່ຜິດກົດໝາຍມີຫຍັງແດ່ ຈົ່ງຍົກຕົວຢ່າງ?
- ❖ ໃຫ້ນັກຮຽນອາສາສະໝັກຕອບຄຳຖາມຂ້າງເທິງ
- ❖ ສຶກສາແນວຄິດ
- ❖ ມອບວຽກບ້ານ: ໃຫ້ນັກຮຽນອ່ານບົດຮຽນບົດທີ 33 ຊັບພະຍາກອນທຳມະຊາດ ແລະ ບໍ່ແຮ່ໃນລາວ

5. ການວັດ ແລະ ປະເມີນຜົນ

ຄູປະເມີນຄວາມສາມາດຂອງນັກຮຽນຈາກ:

- ການມີສ່ວນຮ່ວມໃນກິດຈະກຳ

- ການຕອບຄຳຖາມ

- ຜົນງານການສະເຫນີຂອງນັກຮຽນ

- ການຕອບຂໍ້ສອບພາຍຫຼັງການຮຽນ.

**6.2. ວິເຄາະບົດສອນ**

**6.2.1.** ດ້ານຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

ເພື່ອໃຫ້ນັກຮຽນສາມາດ:

- ❖ ອະທິບາຍຄວາມຫມາຍຂອງການຄ້າ ແລະ ການບໍລິການ
- ❖ ບອກ ແລະ ຈຳແນກປະເພດສິນຄ້າຕົ້ນຕໍ ແລະ ການບໍລິການຢູ່ລາວ
- ❖ ອະທິບາຍຄວາມສຳຄັນຂອງການຄ້າ ແລະ ການບໍລິການ
- ❖ ບອກຊື່ສິນຄ້າ ແລະ ການບໍລິການທີ່ຜິດກົດຫມາຍ

**6.2.2.** ດ້ານເນື້ອໃນ

ບົດທີ 32 ການຄ້າ ແລະ ການລິການ

1. ການຄ້າ ແລະ ການລິການ

ການຄ້າແມ່ນ ການຈຳໜ່າຍຊື້ຂາຍແລກປ່ຽນສິນຄ້ານສັງຄົມ ແລະ ການບໍລິການແມ່ນ ການຕອບສະໜອງຕາມຄວາມຕ້ອງການສິ່ງໃດໜຶ່ງຂອງສັງຄົມ, ການຄ້າ ແລະ ການບໍລິການມີຄວາມພົວພັນເຊິ່ງກັນ ແລະ ກັນຢ່າງສະໜິດແໜ້ນ.

2. ການຄ້າໃນປະເທດລາວ

ການຄ້າມີທັງການຄ້າພາຍໃນ ແລະ ຕ່າງປະເທດ ເຊິ່ງໄດ້ມີການຂະຫຍາຍຕົວພໍສົມຄວນທາງດ້ານການຈັດຕັ້ງ ແລະ ປະເພດສິນຄ້າຈຳໜ່າຍ. ຕາໜ່າງການຄ້າໄດ້ຮັບການເປີດຫກວ້າງ ແລະ ກໍ່ສ້າງຂຶ້ນຢູ່ແຕ່ລະແຂວງພ້ອມນັ້ນ ລັດຖະບານໄດ້ອະນຸຍາດໃຫ້ເອກະຊົນ ຜູ້ທີ່ມີທຶນຈັດຕັ້ງທຸລະກິດການຄ້າຂອງຕົນຂຶ້ນແຕ່ຢູ່ໃຕ້ການຄວບຄຸມຊີ້ນຳຂອງລັດ. ສະນັ້ນ ປະເພດສິນຄ້າທີ່ຈໍລະຈອນຢູ່ທ້ອງຕະຫຼາດຈຶ່ງມີຫຼາຍຊະນິດ; ແຕ່ຜະລິດຕະພັນທີ່ຜະລິດໄດ້ໃນລາວ ແມ່ນຈໍລະຈອນ ແລະ ຊົມໃຊ້ພາຍໃນປະເທດ; ປະເພດທີ່ສົ່ງອອກມີພະລັງງານໄຟຟ້າ, ແຮ່ທາດ, ກາເຟ, ໄມ້... ປະເທດລາວມີການພົວການຄ້າ, ການລົງທຶນກັບຫຼາຍປະເທດ ໂດຍລັດເປັນຜູ້ຜູກຂາດຫຼາຍຂະແໜງການ. ດ້ວຍເຫດນັ້ນ ລະດັບການຄ້າ ແລະ ປະເພດສິນຄ້າຢູ່ລາວ ຈຶ່ງເພີ່ມຂຶ້ນຢ່າງໄວວາ. ສູນການຄ້າທີ່ສຳຄັນໃນລາວແມ່ນຢູ່ນະຄອນຫຼວງວຽງຈັນ, ສະຫວັນນະເຂດ, ຈຳປາສັກ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ

, ຫຼວງພະບາງ...ປະເພດສິນຄ້າທີ່ນໍາເຂົ້າມີຄື: ປະເພດລົດ, ນໍ້າມັນເຊື້ອໄຟ, ສີມັງ, ພະລັງງານໄຟຟ້າ, ເຫຼັກເສັ້ນ, ເຈ້ຍ, ນໍ້າຕານ, ນົມຂຸ້ນ, ເຂົ້າ, ແຜນແພ, ເຄື່ອງນຸ່ງຫົ່ມ, ຢາປົ່ວພະຍາດ...

3. ການບໍລິການ

ປະເທດລາວເປັນປະເທດໜຶ່ງ ທີ່ມີຄວາມສວຍງາມທາງດ້ານທໍາມະຊາດ, ມີຄວາມອຸດົມຮັ່ງມີທາງດ້ານວັດທະນະທໍາ-ຮີດຄອງປະເພນີ ແລະ ຮ່ອງຮອຍປະຫວັດສາດອັນເກົ່າແກ່ຂອງປະຊາຊົນບັນດາເຜົ່າ. ຄົນລາວເປັນຄົນດຸໝັ່ນຂະຫຍັນພຽນ, ມີຈິດໃຈກວ້າງຂວາງ, ນອບນ້ອມຖ່ອມຕົວ, ສັງຄົມລາວມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ຍິນດີຕ້ອນຮັບແຂກບ້ານແຂກເມືອງ. ຈາກຈຸດນີ້ຈຶ່ງເຮັດໃຫ້ຊາວຕ່າງປະເທດໃນທົ່ວໂລກມີຄວາມສົນໃຈເຂົ້າມາທ່ອງທ່ຽວ.

ເພື່ອເຮັດໃຫ້ການບໍລິການຂະຫຍາຍຕົວ ລັດຖະບານໄດ້ດໍາເນີນການປັບປຸງແຫຼ່ງທ່ອງທ່ຽວ, ກໍ່ສ້າງໂຮງແຮມ, ບ້ານພັກ, ຕະຫຼາດ ແລະ ຮ້ານອາຫານ... ຢູ່ແຕ່ລະທ້ອງຖິ່ນເພື່ອຕອບສະໜອງ ແລະ ຄວາມຕ້ອງການຂອງການບໍລິການດັ່ງກ່າວ ໂດຍສະເພາະແມ່ນຢູ່ບັນດາແຂວງ: ຫຼວງພະບາງ, ແຂວງຊຽງຂວາງ, ແຂວງຫົວພັນ, ແຂວງວຽງຈັນ, ນະຄອນຫຼວງວຽງຈັນ, ສະຫວັນນະເຂດ, ຄໍາມ່ວນ, ຈໍາປາສັກ... ນອກຈາກນັ້ນ ຍັງມີການບໍລິການອູ່ສ້ອມແປງລົດຍົນ, ທາງດ້ານສາທາລະນະສຸກ.

4. ຄວາມສໍາຄັນຂອງການຄ້າ ແລະ ການບໍລິການ

ການຄ້າ ແລະ ການບໍລິການ ມີບົດບາດສໍາຄັນຕໍ່ການພັດທະນາປະເທດຊາດ ເພາະວ່າແຕ່ລະປີປະເທດຊາດ ເພາະວ່າແຕ່ລະປີປະເທດເຮົາ ມີລາຍໄດ້ເປັນຈໍານວນຫຼວງຫຼາຍມາຈາກການຂາຍໄມ້, ພະລັງງານໄຟຟ້າ, ແຮ່ທາດ, ກາເຟ ແລະ ການບໍລິການທ່ອງທ່ຽວ...ຄຽງຄູ່ກັນນັ້ນ ລັດຖະບານເຮົາກໍ່ໄດ້ອອກກົດໝາຍຢ່າງເຄັ່ງຄັດຕໍ່ການຄ້າຂາຍ ແລະ ການບໍລິການທີ່ຜິດກົດໝາຍຄື: ການຄ້າຂາຍຢາເສບຕິດ, ການຄ້າປະເວນີ, ການຄ້າຂາຍເດັກນ້ອຍ ແລະ ແມ່ຍິງເປັນຕົ້ນ.

**6.2.3.** ດ້ານເວລາ

ເວລາໃນການສອນທັງໝົດ 2 ຊົ່ວໂມງ

ຂັ້ນນໍາ 5 ນາທີ

ຂັ້ນສອນ 80 ນາທີ

ຂັ້ນສະຫຼຸບ 5 ນາທີ

ຂັ້ນວັດ ແລະ ປະເມີນ 10 ນາທີ

**6.2.4.** ດ້ານສື່ການຮຽນ-ການສອນ

- ຮູບພາບປະເພດສິນຄ້າຕ່າງໆ
- ຮູບພາບໂຮງແຮມ, ໂຮງໝໍ, ຮ້ານຄ້າ, ຕະຫຼາດ ...
- ເອກະສານທີ່ພົວພັນເຖິງບົດຮຽນ

**6.2.5.** ດ້ານກິດຈະກໍາການຮຽນ-ການສອນ

ກິດຈະກໍາທີ 1 ລະດົມສະໝອງກ່ຽວກັບການຄ້າ ແລະ ການບໍລິການ

ກິດຈະກຳທີ 2 ສົນທະນາຄົ້ນຄວ້າກ່ຽວກັບການຄ້າ, ການບໍລິການ ແລະ ຄວາມສຳຄັນຂອງການຄ້າ ແລະ ການບໍລິການໃນປະເທດລາວ.

**6.2.6.** ດ້ານການວັດ ແລະ ການປະເມີນຜົນ

ຄູປະເມີນຄວາມສາມາດຂອງນັກຮຽນຈາກ:

- ການມີສ່ວນຮ່ວມໃນກິດຈະກຳ
- ການຕອບຄຳຖາມ
- ຜົນງານການສະເໜີຂອງນັກຮຽນ
- ການຕອບຂໍ້ສອບພາຍຫຼັງການຮຽນ.

## 7. ດຳເນີນການສອນທົດລອງ ແລະ ຖອດຖອນບົດຮຽນ

- ❖ ເລືອກຜູ້ຈຳທຳການສອນທົດລອງ
- ❖ ດຳເນີນການສອນທົດລອງ
- ❖ ຖອດຖອນບົດຮຽນ

# ກິດຈະກຳທ້າຍບົດ

1. ນັກສຶກສາຈົ່ງນຳໃຊ້ປຶ້ມແບບຮຽນ, ປຶ້ມຄູມືຄູ ແລະ ຫຼັກສູດຊັ້ນປະຖົມສຶກສາປີທີ 5 ແລ້ວເລືອກເອົາຫົວຂໍ້ໃດໜຶ່ງຕາມໃຈໂດຍບໍ່ໃຫ້ຊ້ຳກັນກັບຄົນອື່ນແລ້ວດຳເນີນການວິເຄາະຫຼັກສູດ, ແຕ່ງບົດສອນ ແລະ ດຳເນີນການສອນ (ບັຍທຶກວິດີໂອ)

# ບົດທີ 3

# ການສອນກ່ຽວກັບປະເທດລາວ

## ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

ເພື່ອໃຫ້ນັກຮຽນສາມາດ:

- ❖ ບອກ,ອະທິບາຍ, ວິເຄາະ ແລະ ສັງລວມໄດ້ກ່ຽວກັບເນື້ອໃນ
  - ວິຊາໂລກອ້ອມຕົວ ປ 4 ບົດທີ 19 ວັດທະນະທຳ ແລະ ຮີດຄອງປະເພນີລາວ
  - ວິຊາໂລກອ້ອມຕົວ ປ4 ບົດທີ 21 ເມືອງລາວບູຮານ
  - ວິຊາໂລກອ້ອມຕົວ ປ 4 ບົດທີ 32 ເຈົ້າຟ້າງຸ່ມທ້ອນໂຮມແຜ່ນດິນລາວ
- ❖ ແຕ່ງບົດສອນກ່ຽວກັບ
  - ວິຊາໂລກອ້ອມຕົວ ປ 4 ບົດທີ 19 ວັດທະນະທຳ ແລະ ຮີດຄອງປະເພນີລາວ
  - ວິຊາໂລກອ້ອມຕົວ ປ4 ບົດທີ 21 ເມືອງລາວບູຮານ
  - ວິຊາໂລກອ້ອມຕົວ ປ 4 ບົດທີ 32 ເຈົ້າຟ້າງຸ່ມທ້ອນໂຮມແຜ່ນດິນລາວ
- ❖ ວິເຄາະບົດສອນກ່ຽວກັບ
  - ວິຊາໂລກອ້ອມຕົວ ປ 4 ບົດທີ 19 ວັດທະນະທຳ ແລະ ຮີດຄອງປະເພນີລາວ
  - ວິຊາໂລກອ້ອມຕົວ ປ4 ບົດທີ 21 ເມືອງລາວບູຮານ
  - ວິຊາໂລກອ້ອມຕົວ ປ 4 ບົດທີ 32 ເຈົ້າຟ້າງຸ່ມທ້ອນໂຮມແຜ່ນດິນລາວ
- ❖ ດຳເນີນການສອນໃນ
  - ວິຊາໂລກອ້ອມຕົວ ປ 4 ບົດທີ 19 ວັດທະນະທຳ ແລະ ຮີດຄອງປະເພນີລາວ
  - ວິຊາໂລກອ້ອມຕົວ ປ4 ບົດທີ 21 ເມືອງລາວບູຮານ
  - ວິຊາໂລກອ້ອມຕົວ ປ 4 ບົດທີ 32 ເຈົ້າຟ້າງຸ່ມທ້ອນໂຮມແຜ່ນດິນລາວ

## 1.ການສອນກ່ຽວກັບວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ (ປ 4)

### 1.1. ແຕ່ງບົດສອນ

#### 1.1.1 ວິເຄາະຫຼັກສູດ

ວິຊາໂລກອ້ອມຕົວຊັ້ນປະຖົມປີທີ 4 ບົດທີ 19 ວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ

1)ວິເຄາະຈຸດປະສົງ

ຕາຕະລາງວິເຄາະຈຸດປະສົງ

| ຫົວຂໍ້ | ເວລາສອນ (ນາທີ) | ຈຸດປະສົງທາງພຶດຕິກຳ | | | | | | | | ລວມ % |
|---|---|---|---|---|---|---|---|---|---|---|
| | | ຄວາມຮູ້ | ເຂົ້າໃຈ | ນຳໄປໃຊ້ | ວິເຄາະ | ສັງເຄາະ | ປະເມີນຄ່າ | ທັກສະ | ຈິດພິໄສ | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 1.ວັດທະນະທຳ ແລະ ຮີດຄອງປະເພນີລາວ | 30 | 10 | 5 | | 5 | | | | | 20 |
| 2 ວັດທະນະທຳຂອງບາງຊົນເຜົ່າໃນລາວ | 70 | 10 | 20 | | 10 | | | | 10 | 50 |
| 3.ການອະນຸລັກ ແລະ ສົ່ງເສີມວັດທະນະທຳ | 50 | 5 | 5 | 10 | 10 | | | | | 30 |
| | 150 | 25 | 30 | 10 | 25 | | | | 10 | 100 |

❑ ຈຸດປະສົງ

ໃຫ້ນັກຮຽນສາມາດ:

1. ບອກສິ່ງທີ່ສະແດງເຖິງວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ.
2. ອະທິບາຍລັກສະນະຂອງການດຳລົງຊີວິດ, ການປະກອບອາຊີບ, ປະເພນີ້ຂອງຊົນເຜົ່າໃນລາວ.
3. ບອກວິທີການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳຂອງລາວ.
4. ເຂົ້າຮ່ວມກິດຈະກຳຕ່າງໆກ່ຽວກັບວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ.
5.ສົມທຽບ ແລະ ເລືອກເຟັ້ນວັດທະນະທຳຕ່າງປະເທດເຂົ້າມານຳໃຊ້.

2) ວິເຄາະເນື້ອໃນ

ເນື້ອໃນແບ່ງອອກເປັນ 3 ບັນຫາດັ່ງລຸ່ມນີ້:

- ວັດທະນະທຳ ແລະ ຮີດຄອງປະເພນີລາວ
- ວັດທະນະທຳຂອງບາງຊົນເຜົ່າໃນລາວ
- ການອະນຸລັກ ແລະ ສົ່ງເສີມວັດທະນະທຳ

3) ວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

ຕາຕະລາງວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

| ເນື້ອໃນ | ຈຸດປະສົງ |
|---|---|
| ❖ ວັດທະນະທຳ ແລະ ຮີດຄອງປະເພນີລາວ<br>❖ ວັດທະນະທຳຂອງບາງຊົນເຜົ່າໃນລາວ<br>❖ ການອະນຸລັກ ແລະ ສົ່ງເສີມວັດທະນະທຳ | ເພື່ອໃຫ້ນັກຮຽນສາມາດ:<br>ໃຫ້ນັກຮຽນສາມາດ:<br>1. ບອກສິ່ງທີ່ສະແດງເຖິງວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ.<br>2. ອະທິບາຍລັກສະນະຂອງການດຳລົງຊີວິດ, ການປະກອບອາຊີບ, ປະເພນີ້ຂອງຊົນເຜົ່າໃນລາວ.<br>3. ບອກວິທີການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳຂອງລາວ.<br>4. ເຂົ້າຮ່ວມກິດຈະກຳຕ່າງໆກ່ຽວກັບວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ. |

| | |
|---|---|
| | 5 ສົມທຽບ ແລະ ເລືອກເຟັ້ນວັດທະນະທຳຕ່າງປະເທດເຂົ້າມານຳໃຊ້. |

**1.1.2.ແຕ່ງບົດສອນ**

ວິຊາໂລກອ້ອມຕົວ ຊັ້ນປະຖົມປີທີ 4

ບົດທີ 19 ວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ ເວລາ 3 ຊົ່ວໂມງ

1. ຈຸດປະສົງ

ໃຫ້ນັກຮຽນສາມາດ:

1. ບອກສິ່ງທີ່ສະແດງເຖິງວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ.
2. ອະທິບາຍລັກສະນະຂອງການດຳລົງຊີວິດ, ການປະກອບອາຊີບ, ປະເພນີ້ຂອງຊົນເຜົ່າໃນລາວ.
3. ບອກວິທີການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳຂອງລາວ.
4. ເຂົ້າຮ່ວມກິດຈະກຳຕ່າງໆກ່ຽວກັບວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ.

5 ສົມທຽບ ແລະ ເລືອກເຟັ້ນວັດທະນະທຳຕ່າງປະເທດເຂົ້າມານຳໃຊ້.

2. ເນື້ອໃນຕົ້ນຕໍ

ວັດທະນະທຳ ແລະ ຮີດຄອງປະເພນີແມ່ນສິ່ງສະແດງເຖິງຄວາມຈະເລີນ, ສວຍງາມ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງຊາດທີ່ໄດ້ສືບທອດກັນມາແຕ່ບູຮານນະການ ຈົນກາຍເປັນຮູບລັກສະນະທີ່ສຳຄັນ ແລະ ໂດດເດັ່ນຂອງຊາດ ເຊັ່ນ: ພາສາປາກເວົ້າ, ຕົວໜັງສື, ງານບຸນ. ປະເທດລາວປະກອບມີຫຼາຍ ຊົນເຜົ່າ, ມີວັດທະນະທຳ ແລະ ປະເພນີເປັນເອກະລັກລວມ ແລະ ສະເພາະຂອງແຕ່ລະຊົນເຜົ່າ.

3. ສື່ການຮຽນ-ການສອນ

- ຮູບການຕັ້ງຖິ່ນຖານຂອງຊົນເຜົ່າຕ່າງໆ.
- ຮູບການແຕ່ງກາຍ
- ງານບຸນປະເພນີຕາໆໆ.
- ເອກະສານຕ່າງໆທີ່ພົວພັນເຖິງບົດຮຽນ.

4. ກິດຈະກຳການຮ່ຽນ-ການສອນ

ຂັ້ນນຳ ເວລາ 10 ນາທີ

- ກວດກາຈຳນວນພົນ
- ກວດກາຄວາມເປັນລະບຽບ
- ທວນຄືນບົດເກົ່າ

ຄູຕັ້ງຄຳຖາມໃຫ້ນັກຮຽນຕອບ

1) ພົນລະເມືອງລາວໃນປີ 2005 ມີເທົ່າໃດ?
2) ໃນປີ 2005 ລາວປະກອບມີຈັກຊົນເຜົ່າ?

ຄູ ແລະ ນັກຮຽນຮ່ວມການສະຫຼຸບຄືນ

- ລ້ຽວເຂົ້າສູ່ບົດໃໝ່ໂດຍຄູເອົາຮູບພາບກ່ຽວກັບງານບຸນປະເພນີໃຫ້ນັກຮຽນສັງເກດ ແລະ ຖາມວ່າພວກນ້ອງເຫັນຫຍັງແນ່ໃນຮູບ?

ຂັ້ນສອນ 120 ນາທີ

ຂຽນຫົວບົດໃສ່ກະດານ

ກິດຈະກຳທີ 1. ສົນທະນາກ່ຽວກັບວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ

- ຄູຕັ້ງຄຳຖາມ

1. ມີສິ່ງໃດແດ່ທີ່ສະແດງເຖິງວັດທະນະທຳ? (ພາສາ, ຕົວໜັງສື, ການກິນຢູ່, ນຸ່ງຖື, ປາກເວົ້າ.
2. ມີສິ່ງໃດແດ່ທີ່ສະແດງເຖິງຮີດຄອງປະເພນີ (ງານບຸນຕ່າງໆ, ພິທີກຳຕ່າງໆ ທີ່ໄດ້ປະຕິບັດສືບທອດກັນມາເປັນເວລາດົນນານ....

- ຄູໃຫ້ນັກຮຽນອາສາສະໝັກ 2-3 ຄົນຕອບແຕ່ລະຄຳຖາມ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ.

ກິດຈະກຳທີ 2. ສົນທະນາກ່ຽວກັບວັດທະນະທຳ ແລະ ພຶດຄອງປະເພຂອງບາງຊົນເຜົ່າ

- ຄູແບ່ງນັກຮຽນອອກເປັນກຸ່ມ, ກຸ່ມລະ 4-5 ຄົນ (ອີງຕາມຄວາມເໝາະສົມຄຳຖາມດັ່ງລຸ່ມນີ້:

1) ຊົນເຜົ່າລາວມີວັດທະນະທຳ ແລະ ຮີດຄອງປະເພນີຫຍັງແດ່?
2) ຊົນເຜົ່າມົ້ງມີວັດທະນະທຳ ແລະ ຮີດຄອງປະເພນີຫຍັງແດ່?
3) ຊົນເຜົ່າກຶມມມີວັດທະນະທຳ ແລະ ຮີດຄອງປະເພນີຫຍັງແດ່?

- ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານ, ກຸມຂຶ້ນປະກອບຄວາມເຫັນ

- ຄູນຳພານັກຮຽມສະຫຼຸບແຕ່ລະຄຳຖາມ.

+ ຖ້າມີໂອກາດຄູນຳພານັກຮຽນໄປຮ່ວມກິດຈະກຳງານບຸນໃດໜຶ່ງໃນທ້ອງຖິ່ນຂອງຕົນ. ຈາກນັ້ນກໍ່ນຳມາສົນທະນາໃນຫ້ອງວ່າ: ງານບຸນນັ້ນຊື່ຫຍັງ, ຈຸດປະສົງເພິ່ນຈັດຕັ້ງຂຶ້ນມາເຮັດຫຍັງ ມັນມີຜົນດີແນວໃດຕໍ່ວັດທະນະທຳຂອງລາວ.

ກິດຈະກຳທີ 3 ຫຼິ້ນເກມກ່ຽວກັບການອະນຸລັກ ແລະ ສົ່ງເສີມວັດທະນະທຳລາວ

- ຄູຂີດກະດານອອກເປັນສອງສ່ວນ, ກຳນົດສ່ວນໃຫ້ແຕ່ລະກຸ່ມ.
- ຄູແບ່ງນັກຮຽມອອກເປັນ 2 ກຸ່ມ, ກຸ່ມລະ 5 ຄົນ ສ່ວນທີ່ເຫຼືອເປັນຜູ້ສັງເກດການ.
- ຄູໃຫ້ແຕ່ລະກຸ່ມອອກມາຢືນຢູ່ຕໍ່ໜ້າກະດານ.

- ຄູແນະນຳວິທີການຫຼິ້ນ: ໃຫ້ສະມາຊິກແຕ່ລະກຸ່ມຜັດປ່ຽນກັນຂຽນຂໍ້ຄວາມໃນການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳຂອງລາວພາຍໃນເວລາ 5 ນາທີ.
- ຄູສັນຍານເລີ່ມ ແລະ ຢຸດການແຂ່ງຂັນ, ຈາກນັ້ນພ້ອມກັນກວດ, ຖ້າກຸ່ມໃດໄດ້ຫຼາຍ ແລະ ຖືກຕ້ອງກຸ່ມນັ້ນເປັນຜູ້ຊະນະ.

ຂັ້ນສະຫຼຸບ ເວລາ 10 ນາທີ

- ຄູຖາມຂໍ້ຂ້ອງໃຈ ແລະ ແກ້ໄຂຂໍ້ຂ້ອງໃຈ
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບບົດຮຽນ

ຂັ້ນວັດ ແລະ ປະເມີນຜົນ ເວລາ 10 ນາທີ

ຄູຕັ້ງຄຳຖາມໃຫ້ນັກຮຽນຕອບ

- ມີສິ່ງໃດແນ່ທີ່ບົ່ງບອກເຖິງວັດທະນະທຳຂອງຊາດ?
- ວັດທະນະທຳ ແລະ ຮີດຄອງປະເພນີຂອງລາວປະກອບມີຫຍັງແນ່?

ສຶກສາແນວຄິດ

ມອບວຽກບ້ານ: ໃຫ້ນັກຮຽນບອກບຸນປະເພນີທີ່ສຳຄັນຂອງລາວ ແລະ ເລືອກເອົາ 1 ບຸນປະເພນີທີ່ນັກຮຽນມັກທີ່ສຸດມາເວົ້າໃນມື້ຕໍ່ໄປ

.

5.ການວັດ ແລະ ປະເມີນຜົນ

ຄູພິຈາລະນາຈາກ:

- ການຕອບຄຳຖາມຂອງນັກຮຽນ.
- ການເຮັດວຽກເປັນກຸມ.
- ຕອບຄຳຖາມ.

**1.2. ວິເຄາະບົດສອນ**

1.2.1. ດ້ານຈຸດປະສົງ

ໃຫ້ນັກຮຽນສາມາດ:

1. ບອກສິ່ງທີ່ສະແດງເຖິງວັດທະນະທຳ ແລະ ຮີດ7ອງປະເພນີຂອງລາວ.
2. ອະທິບາຍລັກສະນະຂອງການດຳລົງຊີວິດ, ການປະກອບອາຊີບ, ປະເພນີ້ຂອງຊົນເຜົ່າໃນລາວ.
3. ບອກວິທີການຝຶກປັກຮັກສາ ແລະ ສົ່ງເສີມວັດທະນະທຳຂອງລາວ.
4. ເຂົ້າຮ່ວມກິດຈະກຳຕ່າງໆກ່ຽວກັບວັດທະນະທຳ ແລະ ຮີດຄອງປະເພນີຂອງລາວ.

5 ຮູ້ສົມທຽບ ແລະ ເລືອກຟື້ນວັດທະນະທຳຕ່າງປະເທດເຂົ້າມານຳໃຊ້.

1.2.2. ດ້ານເນື້ອໃນ

ບົດທີ 19 ວັດທະນະທຳ ແລະ ຮີດຄອງປະເພນີລາວ

1. ວັດທະນະທຳ ແລະ ຮີດຄອງປະເພນີລາວ

ວັດທະນະທຳບົ່ງບອກເຖິງຄວາມຈະເລີນສວຍງາມຂອງຊາດໃນທຸກດ້ານເຊັ່ນ: ຂະນົບທຳນຽມ, ຮີດຄອງປະເພນີ, ຄວາມເຊື່ອຖື, ພາສາ, ຕົວໜັງສື ແລະ ສິລະປະທຸກປະເພດ.

ປະເທດລາວປະກອບດ້ວຍຫຼາຍຊົນເຜົ່າ ມີວັດທະນະທຳທີ່ຫຼາກຫຼາຍ, ມີພາສາລາວ ແລະ ຕົວໜັງສືລາວເປັນພາສາກາງ. ວັດທະນະທຳຂອງລາວປະກອບມີພາສາ, ການກິນຢູ່, ການນຸ່ງຖື, ການນັບຖືຮີດຄອງປະເພນີ. ຮີດຄອງປະເພນີລາວປະກອບມີວັດທະນະທຳໃນການແຕ່ງກາຍ, ການດຳຊີວິດ, ການປະກອບອາຊີບ ແລະ ງານບຸນປະເພນີຕ່າງໆ ມີການເຊື່ອຖືແຕກຕ່າງກັນ.

2. ວັດທະນະທຳຂອງບາງຊົນເຜົ່າໃນລາວ

1) ຊົນເຜົ່າລາວ:

ຊົນເຜົ່າລາວສ່ວນຫຼາຍອາໄສຢູ່ແຖບທົ່ງພຽງແຄມແມ່ນ້ຳຂອງ, ເຊິ່ງມັກເຕົ້າໂຮມກັນຢູ່ເປັນເປັນບ້ານໃຫຍ່, ຢູ່ເຮືອນຮ້ານ, ກິນເຂົ້າໜຽວ ແລະ ນັບຖືສາສະໜາພຸດເປັນສ່ວນໃຫຍ່, ອາຊີບທົ່ວໄປແມ່ນເຮັດນາ, ລ້ຽງສັດ, ປູກຝັງ, ຈັກສານ, ຕ່ຳຜ້າທໍໄໝ, ຄ້າຂາຍ...

ຊົນເຜົ່າລາວປະກອບມີງານບຸນປະເພນີຫຼາຍຢ່າງເຊັ່ນ, ມີບຸນຕຸດສິງການ, ບຸນບັ້ງໄຟ, ບຸນຫໍ່ເຂົ້າປະດັບດິນ, ເຂົ້າພັນສາ, ບຸນອອກພັນສາ...

ການນຸ່ງຖືຂອງເຜົ່າລາວ: ເພດຍິງຈະນຸ່ງສິ້ນມີຫົວ, ມີຕີນ, ນຸ່ງເສື້ອ, ເກົ້າຜົມ, ພາດຜ້າບ່ຽງໃນຍາມໄປງານບຸນ, ສ່ວນເພດຊາຍຈະນຸ່ງຜ້າສະໂຫຼ່ງ ແລະ ນຸ່ງໂສ້ງ, ນຸ່ງເສື້ອ

2) ຊົນເຜົ່າມົ້ງ

ຊົນເຜົ່າມົ້ງມັກອາໄສຢູ່ເທິງພູ ບ່ອນທີ່ມີອາກາດເຢັນ ແລະ ຕັ້ງເປັນບ້ານນ້ອຍ ໂດຍແຈກຢາຍອາໄສຢູ່ທາງພາກ ເໜືອ ລົງໄປເຖິງຕອນເໜືອຂອງພາກກາງ (ແຂວງບໍລິຄຳໄຊ) ລັກຊະນະຂອງເຮືອນ ສ່ວນຫຼາຍແມ່ນເຮືອນຊູດິນ, ແອ້ມແປ້ນ, ມຸງດ້ວຍຫຍ້າ ມີອາຊີບທົ່ວໄປແມ່ນເຮັດໄຮ່, ປູກເຂົ້າ, ສາລີ, ປູກເຜືອກມັນ, ລ້ຽງສັດ.

ຊົນເຜົ່າມົ້ງມີປະເພນີງານບຸນເປັນເອກະລັກຂອງຊົນເຜົ່າເຊັ່ນ: ງານບຸນກິນຈຽງໃນທຸກໆທ້າຍປີ. ຊາວເຜົ່າມົ້ງສ່ວນລາຍນັບຖືສາສະໜາຜີ.

ການນຸ່ງຖືທີ່ເປັນເອກະລັກຂອງຊົນເຜົ່າມົ້ງ: ເພດຊາຍຈະນຸ່ງໂສ້ງສີດຳຂາໃຫຍ່, ນຸ່ງເສື້ອສີດຳ, ແຂນເສື້ອ , ໝວກມີຫຼາຍສີລວດລາຍ. ເພດຍິງນຸ່ງໂສ້ງດຳຂາໃຫຍ່ ຫຼື ກະໂປ່ງ ແລະ ເສື້ອມີການປັກແສ່ວສະຫຼັບຫຼາຍສີສັນຢ່າງສ່ວຍງາມ ພ້ອມທັງປະດັບປະດາໄປດ້ວຍເຄື່ອງເອ້ເຕັມຕົວເຊັ່ນ: ປອກແຂນ, ປອກຄໍ, ແຜຄຽນຫົວ, ແຜມັດແອວໃນຍາມບຸນຕ່າງໆ.

3) ຊົນເຜົ່າກຶມມຸ

ຊົນເຜົ່າກຶມມຸມັກຕັ້ງຖິ່ນຖານຢູ່ຕາມພູພຽງ ແລະ ເປີ້ນພູ, ໂດຍແຈກຢາຍຢູ່ແຕ່ເໜືອຮອດໄຕ້, ແຕ່ຫຼາຍກວ່າໝູ່ແມ່ນຢູ່ພູພຽງບໍລະເວນ ແລະ ຢູ່ລຽບຕາມສາຍພູຫຼວງ...ເຜົ່າກຶມມຸມັກຕັ້ງບ້ານຢູ່ເປັນບ້ານໃຫຍ່, ລັກສະນະຂອງເຮືອນເປັນເຮືອນຮ້ານ, ແອ້ມ ແລະ ປູດ້ວຍໄມ້ໄຜ່, ມຸ່ງດ້ວຍຫຍ້າ, ອາຊີບທົ່ວໄປແມ່ນ: ເຮັດໄຮ່ປູກເຂົ້າ, ສາລີ, ປູກເຜືອກມັນ, ເຮັດສວນ ແລະ ເກັບຜັກປ່າ...

ຊົນເຜົ່າກຶມມຸມີງານບຸນປະເພນີເຊັ່ນວ່າ:ບຸນປີດປີ (ບຸນກະເຮີ) ຈະຈັດຂຶ້ນພາຍຫຼັງລະດູການເກັບກ່ຽວ ໃນລະຫວ່າງເດືອນຈຽງ, ເດືອນຍີ ເຊິ່ງເປັນປາງບຸນປີດປີເກົ່າຂຶ້ນປີໃໝ່, ຊົນເຜົ່າກຶມມຸສ່ວນຫຼາຍຖືສາສະໜາຜີ.

ການນຸ່ງຖືຂອງຊົນເຜົ່າກຶມມຸ: ທັງຍິງ ແລະ ຊາຍ ສ່ວນຫຼາຍນຸ່ງເຄື່ອທີ່ເປັນຜ້າຍ້ອມຕາມຂອບເສື້ອ, ໝວກ ແລະ ແພຄຽນຫົວມັກຖັກແສ່ວລວດລາຍໃສ່.

3. ການອະນຸລັກ ແລະ ສົ່ງເສີມວັດທະນະທຳລາວ

ພື້ນຖານວັດທະນະທຳແມ່ນລັກສະນະສະເພາະຂອງຊາດ ເຊິ່ງສາມາດຈຳແນກຄວາມແຕກຕ່າງລະຫວ່າງຊາດໄດ້.

ໃນປະເທດລາວປະກອບມີຫຼາຍຊົນເຜົ່າ, ດັ່ງນັ້ນ, ວັດທະນະທຳ, ຂະນົບທຳນຽມ ແລະ ຮີດຄອງປະເພນີ, ການນັບຖືຮີດຄອງ, ປະເພນີການເກີດ, ການຕາຍ, ການເຮັດບຸນ, ການນຸ່ງຖືແຕກຕ່າງກັນ...

ພວກເຮົາເປັນພົນລະເມືອງລາວ ຄວນອະນຸລັກຮັກສາວັດທະນະທຳ ແລະ ຮີດຄອງປະເພນີທີ່ດີງາມເອົາໄວ້ເຊັ່ນ: ນຸ່ງຖື, ມາລະຍາດໃນການປາກເວົ້າ, ເຂົ້າຮ່ວມງານບຸນປະເພນີຕ່າງໆ, ຮັກສາສະຖານທີ່ບູຮານສະຖານ, ບູຮານວັດຖຸທີ່ເປັນມໍລະດົກວັດທະນະທຳຂອງຊາດ.

ໃນປະຈຸບັນປະເທດລາວໄດ້ມີການພົວພັນ ແລກປ່ຽນກັບບັນດາປະເທດໃນດ້ານຕ່າງໆເຊັ່ນ: ການເມືອງ , ເສດຖະກິດ, ການສຶກສາ, ວັດທະນະທຳ...ການແຊກຊ້ອນວັດທະນະທຳຂອງຕ່າງປະເທດອາດບໍ່ສາມາດປະຕິເສດໄດ້ ເຊິ່ງສະແດງອອກທາງດ້ານພາສາປາກເວົ້າ, ເຄື່ອງໃຊ້ສອຍ, ແບບແຜນດຳລົງຊີວິດ, ເຄື່ອງນຸ່ງຫົ່ມ, ຂໍ້ມູນຂ່າວສານຕ່າງໆ ແຕ່ຕ້ອງມີການເລືອກເຟັ້ນ ເພື່ອໃຫ້ແທດເໝາະກັບວັດທະນະທຳຂອງລາວ.

1.2.3. ດ້ານເວລາ

ເວລາທີ່ສອນທັງໝົດ 3 ຊົ່ວໂມງ

ຂັ້ນນຳ 10 ນາທີ

ຂັ້ນສອນ 120 ນາທີ

ຂັ້ນສະຫຼຸບ 10 ນາທີ

ຂັ້ນວັດ ແລະ ປະເມີນ 10 ນາທີ

1.2.4. ດ້ານສື່ການຮຽນ-ການສອນ

- ຮູບການຕັ້ງຖິ່ນຖານຂອງຊົນເຜົ່າຕ່າງໆ.
- ຮູບການແຕ່ງກາຍ
- ງານບຸນປະເພນີຕາໆໆ.
- ເອກະສານຕ່າງໆທີ່ພົວພັນເຖິງບົດຮຽນ.

1.2.5. ກິດຈະກຳການຮຽນ-ການສອນ

ກິດຈະກຳທີ 1. ສົນທະນາກ່ຽວກັບວັດທະນະາ ແລະ ພິດຄອງປະເພນີຂອງລາວ

ກິດຈະກຳທີ 2. ສົນທະນາກ່ຽວກັບວັດທະນະທຳ ແລະ ພິດຄອງປະເພຂອງບາງຊົນເຜົ່າ

ກິດຈະກຳທີ 3  ຫຼິ້ນເກມກ່ຽວກັບການອະນຸລັກ ແລະ ສິ່ງເສັ້ນວັດທະນະທຳລາວ

1.2.6 ການວັດ ແລະ ປະເມີນຕົ້ນ

ຄູພິຈາລະນາຈາກ:

- ການຕອບຄຳຖາມຂອງນັກຮຽນ.
- ການເຮັດວຽກເປັນກຸມ.
- ຕອບຄຳຖາມ.

## 2.ການສອນກ່ຽວກັບເມືອງລາວບູຮານ ປ 4

### 2.1 ແຕ່ງບົດສອນ

#### 2.1.1. ວິເຄາະຫຼັກສູດ

ວິຊາໂລກອ້ອມຕົວຊັ້ນປະຖົມປີທີ4 ບົດທີ 21 ເມືອງລາວບູຮານ ເວລາ 2 ຊົ່ວໂມງ

1) ວິເຄາະຈຸດປະສົງ

ຕາຕະລາງວິເຄາະຈຸດປະສົງ

| ຫົວຂໍ້ | ເວລາສອນ (ນາທີ) | ຈຸດປະສົງທາງພຶດຕິກຳ | | | | | | | | % ລວມ |
|---|---|---|---|---|---|---|---|---|---|---|
| | | ຄວາມຮູ້ | ເຂົ້າໃຈ | ນຳໄປໃຊ້ | ວິເຄາະ | ສັງເຄາະ | ປະເມີນຄ່າ | ທັກສະ | ຈິດພິສັຍ | |
| 1.ຄວາມເປັນມາຂອງເມືອງລາວບູຮານ | 50 | 20 | 20 | | | | | | | 40 |
| 2.ເມືອງລາວບູຮານ | 50 | 20 | 10 | 10 | | 20 | | | | 60 |
| | 100 | 40 | 30 | 10 | | 20 | | | | 100 |

❑ ຈຸດປະສົງ

ໃຫ້ນັກຮຽນສາມາດ:

1. ບອກ ແລະ ອະທິບາຍຄວາມເປັນມາຂອງເມືອງລາວບູຮານ.
2. ບອກຊື່ ທີ່ຕັ້ງຂອງເມືອງລາວບູຮານ.
3. ບອກ ແລະ ສັງລວມສະຖານທີ່ສຳຄັນທີ່ມີຮ່ອງຮອຍທາງປະຫວັດສາດໃນທ້ອງຖິ່ນໄດ້.

2) ວິເຄາະເນື້ອໃນ

ເນື້ອໃນແບ່ງອອກເປັນ 2 ບັນຫາໃຫຍ່ຄື

- ຄວາມເປັນມາຂອງເມືອງລາວບູຮານ
- ເມືອງລາວບູຮານ

3) ວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

ຕາຕະລາງວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

| ເນື້ອໃນ | ຈຸດປະສົງ |
|---|---|
| ▪ ຄວາມເປັນມາຂອງເມືອງລາວບູຮານ<br>▪ ເມືອງລາວບູຮານ | ເພື່ອໃຫ້ນັກຮຽນສາມາດ:<br>ໃຫ້ນັກຮຽນສາມາດ:<br>▪ ບອກ ແລະ ອະທິບາຍຄວາມເປັນມາຂອງເມືອງລາວບູຮານ.<br>▪ ບອກຊື່ ທີ່ຕັ້ງຂອງເມືອງລາວບູຮານ.<br>▪ ບອກ ແລະ ສັງລວມສະຖານທີ່ສຳຄັນທີ່ມີຮ່ອງຮອຍທາງປະຫວັດສາດໃນທ້ອງຖິ່ນໄດ້. |

**2.1.2. ແຕ່ງບົດສອນ**

ວິຊາໂລກອ້ອມຕົວຊັ້ນປະຖົມປີທີ 4 ບົດທີ 21 ເມືອງລາວບູຮານ ເວລາ 2 ຊົ່ວໂມງ

1. ຈຸດປະສົງ

ໃຫ້ນັກຮຽນສາມາດ:

1. ບອກ ແລະ ອະທິບາຍຄວາມເປັນມາຂອງເມືອງລາວບູຮານ.
2. ບອກຊື່ ທີ່ຕັ້ງຂອງເມືອງລາວບູຮານ.
3. ບອກ ແລະ ສັງລວມສະຖານທີ່ສຳຄັນທີ່ມີຮ່ອງຮອຍທາງປະຫວັດສາດໃນທ້ອງຖິ່ນໄດ້.

2. ເນື້ອໃນຕົ້ນຕໍ

ຊາດລາວເປັນຊາດຫນຶ່ງທີ່ມີປະຫວັດຄວາມເປັນມາອັນເກົ່າແກ່, ຍາວນານ, ເປັນປຶກແຜ່ນຫມັ້ນຄົງທີ່ເຄີຍມີຄວາມຮຸ່ງເຮືອງ, ປະກອບມີເມືອງບູຮານຫຼາຍເມືອງໂດຍຜ່ານຫຼາຍຍຸກຫຼາຍສະໄຫມ ແລະ ໄດ້ກໍ່ຕັ້ງ ເປັນອານາຈັກໂດຍມີບັນດາບັນພະບຸລຸດທີ່ເກັ່ງກ້າສາມາດໄດ້ຮ່ວມແຮງສາມັກຄີກັນສ້າງຊາດ ແລະ ປົກປັກຮັກສາຊາດໃຫ້ຍືນຍົງ ຄົງຕົວຈົນເຖິງທຸກວັນນີ້.

3.ສື່ການຮຽນ-ການສອນ

- ຮູບສະຖານທີ່ເມືອງລາວບູຮານ
- ແຜນທີ່ການເຄື່ອນຍ້າຍຂອງອ້າຍລາວ
- ເອກະສານທີ່ພົວພັນເຖິງບົດຮຽນ.

4. ກິດຈະກຳການຮຽນ-ການສອນ

ຂັ້ນນຳ ເວລາ 5 ນາທີ

- ກວດກາຈຳນວນພົນ
- ກວດກາຄວາມເປັນລະບຽບ
- ທວນຄືນບົດເກົ່າ:

ຄູຕັ້ງຄຳຖາມ

1. ມະນຸດບູຮານວິວັດທະນາການມາຈາກຫຍັງ?
2. ຈົ່ງບອກລັກສະນະຂອງຄົນບູຮານ?

- ລ້ຽວເຂົ້າສູ່ບົດໃໝ່: ຄູເອົາຮູບພາບພະທາດສີໂຄດຕະບອງໃຫ້ນັກຮຽນສັງເກດແລ້ວຖາມນັກຮຽນວ່າ ນີ້ແມ່ນຮູບຫຍັງ? ຕັ້ງຢູ່ໃສໃນປັດຈຸບັນ?

ຂັ້ນສອນ          ເວລາ 80 ນາທີ

ກິດຈະກຳທີ 1 ສົນທະນາກ່ຽວກັບຄວາມເປັນມາຂອງເມືອງລາວບູຮານ

- ຄູຕັ້ງຄຳຖາມນັກຮຽນດັ່ງນີ້:

1. ນັກຮຽນຈົ່ງບອກຊື່ເມືອງລາວບູຮານທີ່ຮູ້ຈັກ?
2. ອານາຈັກຂອງລາວທີ່ມີຄວາມຈະເລີນຮຸ່ງເຮືອງໃນເມື່ອກ່ອນຢູ່ໃສ? (ແຜ່ນດິນນີ້ຈີນເອີ້ນວ່າ ນະຄອນໜອງແສງ.
3. ຍ້ອນຫຍັງຊາດອ້າຍລາວຈຶ່ງເຄື່ອນຍ້າຍລົງມາທາງໃຕ້? (ມີການຍາດຊິງດິນແດນ, ເກີດເສິກສົງຄາມ).
4. ໃນສະຕະວັດໃດ ອ້າຍລາວໄດ້ກໍ່ຕັ້ງ ອານາຈັກລ້ານຊ້າງຂຶ້ນ ແລະ ເຂົາເຈົ້າໄດ້ເຮັດຫຍັງແດ່? (ໃນສະຕະວັດທີ 7-8 ອ້າຍລາວໄດ້ສາມັກຄີກັນກໍ່ຕັ້ງອານາຈັກຂອງຕົນນັ້ນໃຫ້ມີຄວາມຈະເລີນເຂັ້ມແຂງຂຶ້ນເລື້ອຍໆ).

- ຄູນຳພານັກຮຽນສະຫຼຸບຕາມປຶ້ມແບບຮຽນ ຫຼື ຕາມຄຳຖາມ.

ກິດຈະກຳທີ 2 ສົນນທະນາກ່ຽວກັບການປົກຄອງຂອງເມືອງລາວບູຮານ

- ຄູຕັ້ງຄຳຖາມ:

1. ເມືອງລາວບູຮານມີເມືອງໃດແດ່?

2. ເມືອງລາວບູຮານມີການປົກຄອງແນວໃດ?

- ຄູອະທິບາຍໃຫ້ນັກຮຽນຮູ້ວ່າ:

ເມືອງລາວບູຮານໃນເມື່ອກ່ອນມີການປົກຄອງພໍ່ໃຜພໍ່ລາວ ແລະ ມີ ຊື່ເອີ້ນທີ່ແຕກຕ່າງກັນ ຍ້ອນວ່າດິນແດນລາວໃນເມື່ອກ່ອນມີຄວາມກວ້າງໃຫຍ່ໄພສານຈຶ່ງປະກອບມີຫຼາຍ ເມືອງທີ່ຕັ້ງຢູ່ຢາງກະແຈກ ກະຈາຍ. ເມືອງລາວບູຮານສ້າງຕັ້ງ ໃນລະຫວ່າງສະຕະວັດທີ 7-4 ເຊິ່ງມີເມືອງທີ່ສຳຄັນເຊັ່ນ: ເມືອງຊຽງຮຸ່ງ, ຊຽງແຂງ, ຊຽງຕຶງ, ສັນນະໂຄມຄຳ, ໂຍນົກຊຽງ, ຊຽງດົງ-ຊຽງທອງ, ເມືອງພວນ (ຊຽງຂວາງ). ວຽງຈັນ, ວຽງຄຳ, ຊາຍ

ຟອງ, ສີໂຄດຕະບອງ (ທ່າແຂກ), ເມືອງຈາມປານະຄອນ, ເມືອງ ໂຊກ, ເມືອງ ຊຸງ, ເມືອງມີມາຍ, ເມືອງໜອງຫານ, ເມືອງຮ້ອຍເອັດ, ເມືອງໂຄຣາດ ແຕ່ປັນດາເມືອງເຫຼົ່ານັ້ນ ປົກຄອງພໍໃຜພໍລາວ, ຈົນຮອດສະຕະວັດທີ 10 ຈຶ່ງຕົກຢູ່ໃຕ້ອຳນາດຂອງພວກຂອມ. ຈົນມາເຖິງສະຕະວັດ ທີ່ 13 ຈຶ່ງສາມາດແຍກຕົວອອກ ຈາກຂອມໄດ້, ແຕ່ປັນດາເມືອງກໍຍັງມີລັກສະນະກະແຈກກະຈາຍຈົນມາ ເຖິງກາງສະຕະວັດທີ 14 ສະໄໝ ເຈົ້າຟ້າງຸ່ມຂຶ້ນເປັນເຈົ້າແຜ່ນດິນຈຶ່ງສາມາດທ້ອນໂຮມເມືອງລາວບູຮານ.

- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ

ກິດຈະກຳທີ 3 ລວບລວມຂໍ້ມູນຮ່ອງຮອຍປະຫວັດສາດ

ທ້ອງຖິ່ນຫາກມີຮ່ອງຮອຍບູຮານໃຫ້ພານັກຮຽນໄປທັດສະນະສຶກສາ ຫຼື ເກັບກຳຂໍ້ມູນແລ້ວມາສົນທະນາໃນຫ້ອງ.

ຂັ້ນສະຫຼຸບ ເວລາ 5 ນາທີ

- ຄູແກ້ໄຂຂໍ້ຂ້ອງໃຈ
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ

5. ການວັດ ແລະ ປະເມີນຜົນ

ຄູພິຈາລະນາຄວາມສາມາດຂອງນັກຮຽນຈາກ:

- ການຕອບຄຳຖາມ.
- ການຕັ້ງໃຈຟັງຄູອະທິບາຍ.
- ຄວາມເຂົ້າໃຈໃນການຕັ້ງຄຳຖາມ.
- ຜົນຂອງການໄປທັດສະນະສຶກສາ.

**2.2. ວິເຄາະບົດສອນ**

2.2.1. ດ້ານຈຸດປະສົງ

ໃຫ້ນັກຮຽນສາມາດ:

1. ບອກຄວາມເປັນມາຂອງເມືອງລາວບູຮານ.
2. ບອກຊື່, ທີ່ຕັ້ງຂອງເມືອງລາວບູຮານ.
3. ບອກສະຖານທີ່ສຳຄັນທີ່ມີຮ່ອງຮອຍທາງປະຫວັດສາດໃນທ້ອງຖິ່ນໄດ້.

2.2.2. ດ້ານເນື້ອໃນ

ບົດທີ 21 ເມືອງລາວບູຮານ

1. ຄວາມເປັນມາຂອງເມືອງລາວບູຮານ

ປະເທດລາວມີປະຫວັດຄວາມເປັນມາອັນຍາວນານ ມີບັນດາຊົນເຜົ່າເຂົ້າມາຕັ້ງຖິ່ນຖານບ້ານເຮືອນມາແລ້ວຫຼາຍຍຸກຫຼາຍສະໄໝ ແລະ ເຄີຍມີອານາຈັກໃຫຍ່ທີ່ມີຄວາມຈະເລີນຮຸ່ງເຮືອງ ຢູ່ໃນແຜນດິນຂອງປະເທດຈີນເຊັ່ນ: ນະຄອນຫຼວງ, ນະຄອນປາ, ນະຄອນງ້ຽວ, ນະຄອນເພງາຍ ແລະ ນະຄອນໜອງແສ. ຍ້ອນມີເສິກ

ສົງຄາມຕໍ່ສູ້ລະຫວ່າງຊົນຊາດອ້າຍລາວກັບຈີນ. ອ້າຍລາວຈຶ່ງໄດ້ອົບພະຍົບລົງມາຢູ່ທາງໄຕ້ຂອງປະເທດຈີນ ແລ້ວມາສ້າງຕັ້ງເປັນອານາຈັກນ່ານເຈົາ. ຕໍ່ຈາກນັ້ນພວກມົງໂກນມີອຳນາດ ແລະ ອິດທິພົນສູງຈຶ່ງໄດ້ເຂົ້າມາເຮັດສົງຄາມກັບພວກຈີນ. ພາຍຫຼັງຍຶດຈີນໄດ້ແລ້ວກໍເຂົ້າມາຣຸກຮານອ້າຍລາວ ແລະ ຍຶດເອົາອານາຈັກນານເຈົາ(ເຂດຖູນໜົງປະເທດຈີນປະຈຸບັນ). ແຕ່ນັ້ນມາອ້າຍລາວກໍອົບພະຍົບລົງມາທາງໃຕ້ຕາມລ້ອງແມ່ນ້ຳຕ່າງໆເຊັ່ນ: ພວກທີ່ອົບພະຍົບໄປຕາມລ້ອງແມ່ນ້ຳອິຣະວະດີ ກາຍເປັນຊົນເຜົ່າໜຶ່ງຂອງອິນເດຍ ແລະ ພະມ້າ(ມຽນມາ) ພວກທີ່ໄປຕາມລ້ອງແມ່ນ້ຳແດງກາຍເປັນຊົນເຜົ່າໜຶ່ງຂອງຫວຽດນາມ. ພວກທີ່ໄປຕາມລ້ອງແມ່ນ້ຳຂອງກາຍເປັນຄົນລາວເປັນຄົນໄທໃນປະຈຸບັນ.

ຮອດສະຕະວັດທີ 7-8 ອານາຈັກລ້ານຊ້າງໄດ້ກໍ່ຕັ້ງຂຶ້ນຢູ່ທາງຕອນເໜືອຂອງແມ່ນ້ຳຂອງ. ເຂົາເຈົ້າໄດ້ສາມັກຄີກັນສ້າງສາພັດທະນາອານາຈັກຂອງຕົນໃຫ້ມີຄວາມຈະເລີນເຂັ້ມແຂງຂຶ້ນເລື່ອຍໆ

2. ເມືອງລາວບູຮານ

ເມືອງລາວບູຮານໄດ້ປະກົດມີຫຼາຍເມືອງ ທີ່ມີຮູບການປົກຄອງພໍໃຜພໍລາວ ເອີ້ນຊື່ແຕກຕ່າງກັນເຊັ່ນ: ເມືອງ, ວຽງ, ຊຽງ, ນະຄອນ, ແຄວນ ແລະ ອານາຈັກ ບັນດາເມືອງເລົ່ານັ້ນຕັ້ງຢູ່ກະແຈກກະຈາຍຕາມລ້ອງແມ່ນ້ຳຂອງ ແລະ ສາຂາຂອງມັນ.

ເມືອງລາວບູຮານສ້າງຕັ້ງຂຶ້ນທຳອິດຢູ່ໃນລະຫວ່າງ ສະຕະວັດທີ 7-8 ປະກອບດ້ວຍບັນດາເມືອງທີ່ສຳຄັນຄື: ເມືອງຊຽງຮຸ່ງ, ຊຽງແຂງ, ຊຽງຕຶງ, ສຸວັນນະໂຄມຄຳ, ໂຍນົກຊຽງ, ຊຽງດົງ-ຊຽງທອງ, ເມືອງພວນ (ຊຽງຂວາງ), ວຽງຈັນ, ວຽງຄຳ, ຊາຍຟອງ, ສີໂຄດຕາບອງ (ທ່າແຂກ), ເມືອງຈາມປານະຄອນ, ເມືອງໂຊກ, ເມືອງຊຸງ, ເມືອງພິມາຍ, ເມືອງໜອງຫານ, ເມືອງຮ້ອຍເອັດ, ເມືອງໂຄຣາດ.

ຄົນລາວບູຮານມີແຫຼ່ງກຳເນີດຢູ່ຫຼາຍບ່ອນ ແຕ່ມີການເຊື່ອມປະສານກັນຢ່າງກົມກຽວຈັນກາຍມາເປັນຊາດລາວ ແລະ ໄດ້ກໍ່ສ້າງແຫຼ່ງອາລິຍະທຳຂຶ້ນຫຼາຍແຫ່ງ. ເມື່ອຮອດສະຕະວັດທີ 10 ກໍໄດ້ຕົກຢູ່ໃນອຳນາດຂອງພວກຂອມແຫ່ງອັງກໍ ແລະ ຊາດອື່ນໆ. ຈົນກາຍມາຮອດສະຕະວັດທີ 13 ຈຶ່ງສາມາດແຍກຕົນອອກເປັນເອກະລາດ. ແຕ່ບັນດາເມືອງເລົ່ານັ້ນມີການປົກຄອງພໍຜພໍລາວ. ມາເຖິງກາງສະຕະວັດທີ 14 ເຈົ້າຟ້າງຸ່ມຈຶ່ງສາມາດທ້ອນໂຮມເອົາບັນດາເມືອງລາວບູຮານເຂົ້າເປັນອານາຈັກລາວລ້ານຊ້າງເປັນເອກະລາດ-ເອກະພາບອັນໜຶ່ງອັນດຽວທີ່ມີຄວາມຈະເລີນເຂັ້ມແຂງ.

2.2.3. ດ້ານເວລາ

ນຳໃຊ້ເວລາສອນທັງໝົດ 2 ຊົ່ວໂມງຄື:

ຂັ້ນນຳ 5 ນາທີ

ຂັ້ນສອນ 8 ນາທີ

ຂັ້ນສະຫຼຸບ 5 ນາທີ່

ຂັ້ນວັດ ແລະ ປະເມີນ 10 ນາທີ

2.2.4. ສື່ການຮຽນ-ການສອນ

- ຮູບສະຖານທີ່ເມືອງລາວບູຮານ
- ແຜນທີ່ການເຄື່ອນຍ້າຍຂອງອ້າຍລາວ

- ເອກະສານທີ່ພົວພັນເຖິງບົດຮຽນ.

2.2.5. ກິດຈະກຳການຮຽນ-ການສອນ

ກິດຈະກຳທີ 1 ສົນທະນາກ່ຽວກັບຄວາມເປັນມາຂອງເມືອງລາວບູຮານ

ກິດຈະກຳທີ 2 ສົນນທະນາກ່ຽວກັບການປົກຄອງຂອງເມືອງລາວບູຮານ

ກິດຈະກຳທີ 3 ລວບລວມຂໍ້ມູນຮ່ອງຮອຍປະຫວັດສາດ

## 3. ດຳເນີນການສອນທົດລອງ

- ເລືອກນັກຮຽນຜູ້ທີ່ຈະສອນທົດລອງ
- ສອນທົດລອງຕາມການມອບໝາຍ
- ຖອດຖອນບົດຮຽນ

## 4. ການສອນກ່ຽວກັບການທ້ອນໂຮມແຜ່ນດິນລາວພາຍໃຕ້ການນຳພາຂອງເຈົ້າຟ້າງຸ່ມ ປ4

### 4.1. ແຕ່ງບົດສອນ

#### 4.1.1. ວິເຄາະຫຼັກສູດ

ວິຊາໂລກອ້ອມຕົວຊັ້ນປະຖົມປີທີ 4 ບົດທີ 32 ເຈົ້າຟ້າງຸ່ມທ້ອນໂຮມແຜ່ນດິນລາວ

- ວິເຄາະຈຸດປະສົງ

ຕາຕະລາງວິເຄາະຈຸດປະສົງ

| ຫົວຂໍ້ | ເວລາສອນ (ນາທີ) | ຈຸດປະສົງທາງພຶດຕິກຳ | | | | | | | | % ລວມ |
|---|---|---|---|---|---|---|---|---|---|---|
| | | ຄວາມຮູ້ | ເຂົ້າໃຈ | ນຳໄປໃຊ້ | ວິເຄາະ | ສັງເຄາະ | ປະເມີນຄ່າ | ທັກສະ | ຈິດພິສັຍ | |
| 1.ປະຫວັດຫຍໍ້ຂອງເຈົ້າຟ້າງຸ່ມ | 30 | 10 | | | | 20 | | | | 40 |
| 2.ເຈົ້າຟ້າງຸ່ມທ້ອນໂຮມແຜ່ນດິນລາວ | 70 | 10 | 10 | | 20 | 20 | | | | 60 |
| ລວມ | 10<br>0 | | | | | | | | | 100 |

❑ ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

1. ເລົ່າປະຫວັດຫຍໍ້ຂອງເຈົ້າຟ້າງຸ່ມ.
2. ຍົກເຫດຜົນທີ່ເຈົ້າຟ້າງຸ່ມສາມາດທ້ອນໂຮມເອົາບັນດາເມືອງລາວເຂົ້າເປັນອານາຈັກລ້ານຊ້າງ.
3. ສະເໜີຜົນງານເດັ່ນຂອງເຈົ້າຟ້າງຸ່ມ

- ວິເຄາະເນື້ອໃນ

4) ວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

ຕາຕະລາງວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

| ເນື້ອໃນ | ຈຸດປະສົງ |
|---|---|
| 1. ປະຫວັດຫຍໍ້ຂອງເຈົ້າຟ້າງຸ່ມ<br>2. ເຈົ້າຟ້າງຸ່ມທ້ອນໂຮມແຜ່ນດິນລາວ | ເພື່ອໃຫ້ນັກຮຽນສາມາດ:<br>▪ ເລົ່າປະຫວັດຫຍໍ້ຂອງເຈົ້າຟ້າງຸ່ມ.<br>▪ ຍົກເຫດຜົນທີ່ເຈົ້າຟ້າງຸ່ມສາມາດທ້ອນໂຮມເອົາບັນດາເມືອງລາວເຂົ້າເປັນອານາຈັກລ້ານຊ້າງ.<br>▪ ສະເຫນີຜົນງານເດັ່ນຂອງເຈົ້າຟ້າງຸ່ມ |

ບົດທີ 32 ເຈົ້າຟ້າງຸ່ມທ້ອນໂຮມແຜ່ນດິນລາວ ເວລາ 2 ຊົ່ວໂມງ

1. ຈຸດປະສົງ

ໃຫ້ນັກຮຽນສາມາດ:

1. ເລົ່າປະຫວັດຫຍໍ້ຂອງເຈົ້າຟ້າງຸ່ມ.
2. ບອກເຫດຜົນທີ່ເຈົ້າຟ້າງຸ່ມສາມາດທ້ອນໂຮມເອົາບັນດາເມືອງລາວເຂົ້າເປັນອານາຈັກລ້ານຊ້າງ.
3. ສະເຫນີຜົນງານເດັ່ນຂອງເຈົ້າຟ້າງຸ່ມ

2. ເນື້ອໃນຕົ້ນຕໍ

ເຈົ້າຟ້າງຸ່ມເກີດໃນປີ ຄ.ສ 1316 ທີ່ນະຄອນຊຽງດົງ-ຊຽງທອງເປັນກະສັດລາວທີ່ມີຄວາມເກັ່ງກ້າສາມາດໃນການສູ້ຮົບ ແລະ ປົກຄອງບ້ານເມືອງພະອົງທ້ອນໂຮມອານາຈັກລາວລ້ານຊ້າງໃຫ້ເປັນ ເອກະລາດ, ເອກະພາບ, ໄດ້ນຳເອົາພະບາງ, ສາສະຫນາພຸດເຂົ້າມາເຜີຍແຜ່ໃນລາວ ແລະ ສ້າງຕັ້ງ ອຳນາດສັກດີນາລາວລວມສູນ, ດັດແປງກົດຫມາຍເຮັດໃຫ້ບ້ານເມືອງມີຄວາມສະຫງົບສຸກ.

3. ສື່ການຮຽນ-ການສອນ

- ແຜນທີ່ອານາຈັກລາວລ້ານຊ້າງສະໄຫມເຈົ້າຟ້າງຸ່ມປົກຄອງ.
- ຮູບພະພຸດທະຮູບພະບາງ.
- ຮູບພາບຮູບປັ້ນເຈົ້າຟ້າງຸ່ມ
- ເອກະສານຕ່າງໆທີ່ພົວພັນເຖິງບົດຮຽນ.

4.ກິດຈະກຳການຮຽນ-ການສອນ

ຂັ້ນນຳ ເວລາ 5 ນາທີ

- ກວດກາຈຳນວນພົນ
- ກວດກາຄວາມເປັນລະບຽບ

- ທວນຄືນບົດເກົ່າ: ຄຳຖາມເມືອງລາວບູຮານມີເມືອງໃດແດ່? ໃຫ້ນັກຮຽນ 1-2 ຄົນຕອບ ແລ້ວຄູສະຫຼຸບຄືນ.

ຂັ້ນສອນ 80 ນາທີ

- ຂຽນຫົວບົດໃສ່ກະດານ

ກິດຈະກຳ 1. ສົນທະນາລວມກ່ຽວກັບປະຫວັດຫຍໍ້ຂອງເຈົ້າຟ້າງຸ່ມ

ຕັ້ງຄຳຖາມໃຫ້ນັກຮຽນດັ່ງນີ້:

1) ສະພາບຂອງເມືອງລາວບູຮານເປັນແນວໃດ?
2) ເຈົ້າຟ້າງຸ່ມເກີດປີໃດ? ຢູ່ໃສ?
3) ເຈົ້າຟ້າງຸ່ມໄດ້ຫນີ້ລົງໄປທາງພາກໃຕ້ເພື່ອຫຍັງ?
4) ເຈົ້າຟ້າງຸ່ມໄດ້ໄປສຶກສາຮ່ຳຮຽນຢູ່ໃສ? ແລະ ໄດ້ແຕ່ງງານກັບລູກສາວຂອງເຈົ້າຊີວິດປະເທດໃດ?

- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບດັ່ງນີ້:

ສະພາບການຂອງເມືອງລາວບູຮານກ່ອນເຈົ້າຟ້າງຸ່ມຍັງບໍ່ທັນຂຶ້ນເປັນເຈົ້າຊີວິດ ນັ້ນມີຄວາມ ຫຍຸ້ງຍາກສັບສົນເນື່ອງມາຈາກການຍາດຊີງອຳນາດໃນກຸ່ມຮັກດີນາລາວ, ເຈົ້າຟ້າງຸ່ມເກີດປີ ຄ.ສ 1316 ທີ່ນະຄອນຊຽງດົງ-ຊຽງທອງ, ເຈົ້າຟ້າງຸ່ມຫນີ້ລົງໄປພາກໃຕ້ ເພື່ອຊອກຫາຊ່ອງທາງທ້ອນໂຮມບັນດາ ເມືອງລາວບູຮານ. ນອກນັ້ນພະອົງໄດ້ໄປສຶກສາຫາວິຊາຄວາມຮູ້ໃນພະລາຊະວັງຂອງເຈົ້າຊີວິດຂະເໝນ ແລະ ໄດ້ແຕ່ງງານກັບລູກສາວຂອງເຈົ້າຊີວິດຂະເໝນອີກດ້ວຍ.

ກິດຈະກຳທີ 2 ສົນທະນາກຸ່ມກ່ຽວກັບການທ້ອນໂຮມລາວຂອງເຈົ້າຟ້າງຸ່ມ

- ແບ່ງນັກຮຽນເປັນກຸ່ມ.
- ຄູໃຫ້ແຕ່ລະກຸ່ມຄົ້ນຄວ້າ 1 ຄຳຖາມ:

1) ເຈົ້າຟ້າງຸ່ມໄດ້ເລີ່ມຕົ້ນທ້ອນໂຮມອານາຈັກລາວລ້ານຊ້າງແນວໃດ?

2) ເຈົ້າຟ້າງຸ່ມສາມາດຕີຊະນະ ແລະ ຢຶດເອົາເມືອງຊວາໄດ້ແນວໃດ?

3) ເຈົ້າຟ້າງຸ່ມໄດ້ຂຶ້ນເປັນເຈົ້າຊີວິດອານາຈັກລາວລ້ານຊ້າງໃນປີໃດ?

4) ຍ້ອນຫຍັງເມືອງນ້ອຍໃຫຍ່ຕ່າງໆ ຈຶ່ງມາສະຫມັກຂຶ້ນກັບເຈົ້າຟ້າງຸ່ມ?

5) ພາຍຫຼັງຂຶ້ນເປັນເຈົ້າຊີວິດແລ້ວເຈົ້າຟ້າງຸ່ມໄດ້ປົກຄອງບ້ານເມືອງແນວໃດ?

- ຕາງຫນ້າແຕ່ລະກຸ່ມລາຍງານ.
- ຄູນຳພານັກຮຽນສະຫຼຸບ ຕາມຄຳຖາມ ຫຼື ຕາມປຶ້ມແບບຮຽນ.

ຂັ້ນສະຫຼຸບ 5 ນາທີ

- ຄູຖາມຂໍ້ຂອງໃຈ ແລະ ແກ້ໄຂຂໍ້ຂ້ອງໃຈ
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຄືນ
- ແນະນຳໃຫ້ນັກຮຽນຈົດບົດຮຽນ

ຂັ້ນວັດ ແລະ ປະເມີນ 10ນາທີ

- ຄູຕັ້ງຄຳຖາມ
    1) ເຈົ້າຟ້າງຸ່ມໄດ້ເລີ່ມຕົ້ນທ້ອນໂຮມອານາຈັກລາວລ້ານຊ້າງແນວໃດ?
    2) ພາຍຫຼັງຂຶ້ນເປັນເຈົ້າຊີວິດແລ້ວເຈົ້າຟ້າງຸ່ມໄດ້ປົກຄອງບ້ານເມືອງແນວໃດ?
- ໃຫ້ນັກຮຽນ 2-3 ຄົນຕອບ ແລ້ວຄູຈຶ່ງສະຫຼຸບຄຳຕອບ
- ສຶກສາແນວຄິດ
- ມອບວຽກບ້ານ: ໃຫ້ນັກຮຽນອ່ານຄືນບົດຮຽນທີ່ໄດ້ຮຽນມາໃນບົດທີ 22

5. ການວັດ ແລະ ປະເມີນຜົນ

ຄູພິຈາລະນາຈາກ:

- ການຄົ້ນຄວ້າກຸ່ມ.
- ການຕອບຄຳຖາມຂອງນັກຮຽນ.
- ອອກຂໍ້ທົດສອບພາຍຫຼັງການຮຽນ.

4.2. **ວິເຄາະບົດສອນ (ວິເຄາະຫຼັກສູດ)**

1) ດ້ານຈຸດປະສົງ

ໃຫ້ນັກຮຽນສາມາດ:

1. ເລົ່າປະຫວັດຫຍໍ້ຂອງເຈົ້າຟ້າງຸ່ມ.
2. ເຫດຜົນທີ່ເຈົ້າຟ້າງຸ່ມສາມາດທ້ອນໂຮມເອົາບັນດາເມືອງລາວເຂົ້າເປັນອານາຈັກລ້ານຊ້າງ.
3. ສະເໜີຜົນງານເດັ່ນຂອງເຈົ້າຟ້າງຸ່ມ:

2) ດ້ານເນື້ອໃນຕົ້ນຕໍ

ບົດທີ 22 ເຈົ້າຟ້າງຸ່ມທ້ອນໂຮມແຜ່ນດິນລາວ

1. ປະຫວັດຫຍໍ້ຂອງເຈົ້າຟ້າງຸ່ມ

ເຈົ້າຟ້າງຸ່ມປະສູດ (ເກີດ) ໃນປີ ຄ.ສ 1316 ທີ່ນະຄອນຊຽງດົງ-ຊຽງທອງ (ແຂວງ ຫຼວງພະບາງ ປັດຈຸບັນ) ເປັນລາຊະໂອລົດ (ລູກຊາຍ) ຂອງເຈົ້າຟ້າງຽ້ວ, ເຈົ້າຟ້າງຸ່ມກຳເນີດຂຶ້ນ ໃນໄລຍະທີ່ເຫດການຢູ່ເມືອງຊວາ ນະຄອນຊຽງດົງ-ຊຽງທອງກຳລັງສັບສົນ, ປັ່ນປ່ວນເນື່ອງ ຈາກຄວາມຂັດແຍ່ງຢ່າງຮຸນແຮງລະຫວ່າງກຸ່ມສັກດີນາ ເພື່ອຊີງອຳນາດເຊິ່ງກັນ ແລະ ກັນ. ດັ່ງນັ້ນເຈົ້າຟ້າງຸ່ມພ້ອມດ້ວຍພີ່ນ້ອງ ແລະ ໄພ່ພົນຈຳນວນຫນຶ່ງໄດ້ພາກັນຫນີລົງໄປພາກໃຕ້ ເພື່ອກະກຽມກຳລັງເມື່ອມີໂອກາດກໍ່ຈະຫາຊ່ອງທາງ ທ້ອນໂຮມເມືອງລາວບູຮານທີ່ຍັງກະ ແຈກກະຈາຍໃຫ້ເປັນເອກະພາບ, ມີອຳນາດລວມສູນຄືກັບອານາຈັກຕ່າງໆ ອ້ອມຂ້າງ.

ການລົງພາກໃຕ້ຄັ້ງນັ້ນ ເຈົ້າຟ້າງຸ່ມໄດ້ໄປສຶກສາຮ່ຳຮຽນເອົາວິຊາຄວາມຮູ້ໃນພະລາ ຊະວັງຂອງເຈົ້າຊີວິດຂະເໝນ (ກຳປູເຈຍ). ພະອົງເປັນຄົນທີ່ສະຫຼຽວສະຫຼາດຈົນໄດ້ຮັບການຍ້ອງ ຍໍສັນລະເສີນຈາກເຈົ້າຊີວິດ

ຂະເໝນ, ພ້ອມນັ້ນເຈົ້າຊີວິດຂະເໝນຍັງໄດ້ຍົກ ພະທິດາ (ລູກສາວ) ມີນາມວ່າ ນາງແກ້ວເກງຍາ ໃຫ້ເຈົ້າຟ້າງຸ່ມມາເປັນຊາຍາ (ເມຍ).

2. ເຈົ້າຟ້າງຸ່ມທ້ອນໂຮມແຜ່ນດິນລາວ

ເມື່ອເຈົ້າຟ້າງຸ່ມສໍາເລັດການສຶກສາຮໍ່າຮຽນໃນດ້ານຕ່າງໆແລ້ວ, ພະອົງກໍເລີ່ມເຄື່ອນໄຫວ ເພື່ອທ້ອນໂຮມແຜ່ນດິນລາວໃຫ້ເປັນເອກະລາດ-ເອກະພາບໃນໄລຍະຕໍ່ມາ. ພະອົງພ້ອມດ້ວຍ ເຈົ້າຟ້າງ້ຽວຜູ້ເປັນພໍ່ກໍໄດ້ກະກຽມກໍາລັງແລ້ວຂຶ້ນມາຕີເອົາບັນດາເມືອງ ເຊັ່ນ: ເຂດຈໍາປາສັກ, ເມືອງສີໂຄດຕະບອງ, ເມືອງວຽງຈັນ, ເມືອງພວນ...

ໃນແຕ່ລະບັ້ນຮົບນັ້ນເຈົ້າຟ້າງຸ່ມໄດ້ທ້ອນໂຮມກໍາລັງນັບມື້ນັບຫຼາຍ ແລະ ເຂັ້ມແຂງຂຶ້ນ. ໃນລະຫວ່າງການເດີນທາງເຈົ້າຟ້າງ້ຽວໄດ້ເຖິງແກ່ກໍາ (ຕາຍ), ສ່ວນເຈົ້າຟ້າງຸ່ມໄດ້ສືບຕໍ່ນໍາພາ ກອງທັບບຸກໂຈມຕີເຂົ້າເມືອງຊວາ , ການສູ້ຮົບລະຫວ່າງກອງທັບຂອງເຈົ້າຟ້າງຸ່ມ ແລະ ກອງ ທັບຂອງເຈົ້າຄໍາຮຽວ ຜູ້ເປັນອາວຂອງເຈົ້າຟ້າງຸ່ມ) ທີ່ເປັນເຈົ້າເມືອງຊວາ ເປັນໄປຢ່າງດຸເດືອດ ຮຸນແຮງ, ແຕ່ສຸດທ້າຍກໍາລັງຂອງເຈົ້າຟ້າງຸ່ມກໍ່ສາມາດຕີເອົາຊະນະ ແລະຢຶດເມືອງຊວາໄດ້.

ເຈົ້າຄໍາຮຽວອຸກອັ່ງໃຈທີ່ສຸດ ທີ່ບໍ່ສາມາດຕີຊະນະກັບກອງທັບຂອງຫຼານຊາຍກໍເລີຍຕັດສິນໃຈກິນ ຢາຂ້າຕົວຕາຍພ້ອມກັບມະເຫສີຂອງລາວ. ປີ ຄສ 1353 ເຈົ້າຟ້າງຸ່ມໄດ້ຂຶ້ນປົກຄອງອານາຈັກ ລາວລ້ານຊ້າງ ແລະໄດ້ເລີ້ມສ້າງສາບູລະນະອານາຈັກລາວລ້ານຊ້າງໃຫ້ຈະເລີນເຂັ້ມແຂງ. ຈາກນັ້ນພະອົງກໍໄດ້ຕີເອົາເມືອງລາວບູຮານທີ່ຍັງເຫຼືອໃຫ້ມາຂຶ້ນກັບຕົນ. ຕໍ່ມາຊື່ສຽງຂອງເຈົ້າ ຟ້າງຸ່ມໄດ້ດັງກ້ອງໄປໄກເຮັດໃຫ້ບັນດາເມືອງນ້ອຍ, ເມືອງໃຫຍ່ມາຂຶ້ນກັບເຈົ້າຟ້າງຸ່ມ, ມາຮອດນີ້.

ບັນດາເມືອງລາວບູຮານໄດ້ບອນໂຮມເປັນອານາຈັກລາວລ້ານຊ້າງທີ່ມີເອກະລາດ(ອກະພາບ, ອໍານາດທັງຫມົດນັ້ນກັບສູນກາງ ໂດຍມີເມືອງຊວາເປັນນະຄອນຫຼວງ. ເພື່ອໃຫ້ບ້ານເມືອງມີ ຄວາມສະຫງົບຮຽບຮ້ອຍ, ເຈົ້າຟ້າງຸ່ມໄດ້ອອກກົດຫມາຍຕ່າງໆ ແລະ ໄດ້ນໍາເອົາສາສະຫນາພຸດ ນິກາຍຫີນະຍານ ຈາກຂະເໝນເຂົ້າມາເຜີຍແຜ່ໃນອານາຈັກລາວລ້ານຊ້າງ. ເຈົ້າຊີວິດຂະເໝນ ກໍໄດ້ສົ່ງຄະນະສົງຈໍານວນຫນຶ່ງມາເຜີຍແຜ່, ສິດສອນທໍາມະໃຫ້ຊາວລາວ ແລະ ໄດ້ມອບພະບາງ ໃຫ້ແກ່ລາວ. ແຕ່ນັ້ນມາພະບາງກໍ່ເປັນພະພຸດທະຮູບອົງສັກສິດຄູ່ບ້ານຄູ່ເມືອງຂອງລາວ ຈົນເທົ່າທຸກວັນນີ້.

ເຈົ້າຟ້າງຸ່ມເປັນວິລະບຸລຸດລາວທີ່ມີຄວາມເກັ່ງກ້າສາມາດ, ສະຫຼຽວສະຫຼາດໃນການນໍາພາປະຊາຊົນລາວຕໍ່ສູ້ແລະ ສ້າງສາບ້ານເມືອງໃຫ້ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ. ອານາຈັກລາວລ້ານຊ້າງໃນສະໄຫມເຈົ້າຟ້າງຸ່ມມີອານາເຂດກວ້າງໃຫຍ່ໄພສານ ແລະ ອຸດົມສົມບູນ.

3)ດ້ານເວລາ

ນໍາໃຊ້ເວລາສອນທັງໝົດ 2 ຊົ່ວໂມງຄື:

ຂັ້ນນໍາ 5 ນາທີ

ຂັ້ນສອນ 8 ນາທີ

ຂັ້ນສະຫຼຸບ 5 ນາທີ່

ຂັ້ນວັດ ແລະ ປະເມີນ 10 ນາທີ

4. ດ້ານສື່ການຮຽນ-ການສອນ

- ແຜນທີ່ອານາຈັກລາວລ້ານຊ້າງສະໄຫມເຈົ້າຟ້າງຸ່ມປົກຄອງ.
- ຮູບພະພຸດທະຮູບພະບາງ.
- ຮູບພາບຮູບປັ້ນເຈົ້າຟ້າງຸ່ມ
- ເອກະສານຕ່າງໆທີ່ພົວພັນເຖິງບົດຮຽນ.

5)ດ້ານກິດຈະກຳການຮຽນ-ການສອນ

ກິດຈະກຳ 1. ສົນທະນາລວມກ່ຽວກັບປະຫວັດຫຍໍ້ຂອງເຈົ້າຟ້າງຸ່ມ

ກິດຈະກຳທີ 2 ສົນທະນາກຸ່ມກ່ຽວກັບການທ້ອນໂຮມລາວຂອງເຈົ້າຟ້າງຸ່ມ

6)ການວັດ ແລະ ປະເມີນຜົນ

ຄູພິຈາລະນາຈາກ:

- ການຄົ້ນຄວ້າກຸ່ມ.
- ການຕອບຄຳຖາມຂອງນັກຮຽນ.
- ອອກຂໍ້ທົດສອບພາຍຫຼັງການຮຽນ.

## 5. ດຳເນີນການສອນທົດລອງ

- ຄັດເລືອກຜູ້ຂຶ້ນສອນທົດລອງ
- ດຳເນີນການສອນທົດລອງ
- ຖອດຖອນບົດຮຽນ ແລະ ປັບປຸງ

# ກິດຈະກຳທ້າຍບົດ

1. ນັກສຶກສາຈົ່ງນຳໃຊ້ປຶ້ມແບບຮຽນ, ປຶ້ມຄູມືຄູ ແລະ ຫຼັກສູດຊັ້ນປະຖົມສຶກສາປີທີ 5 ຫຼື ປີທີ 4 ແລ້ວເລືອກເອົາຫົວຂໍ້ໃດໜຶ່ງຕາມໃຈໂດຍບໍ່ໃຫ້ຊໍ້າກັນກັບຄົນອື່ນແລ້ວດຳເນີນການວິເຄາະຫຼັກສູດ, ແຕ່ງບົດສອນ ແລະ ດຳເນີນການສອນ (ບັນທຶກວີດີໂອ)

# ບົດທີ 4

# ການສອນກ່ຽວກັບມໍລະດົກ ແລະ ວັດທະນະທຳຂອງຊາດ ປ5

## ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ❖ ບອກ,ອະທິບາຍ, ວິເຄາະ ແລະ ສັງລວມໄດ້ກ່ຽວກັບເນື້ອໃນ
  ວິຊາໂລກອ້ອມຕົວ ປ 5 ບົດທີ 36 ມໍລະດົກທາງວັດທະນະທຳຂອງຊາດລາວ
- ❖ ແຕ່ງບົດສອນກ່ຽວກັບ
  ວິຊາໂລກອ້ອມຕົວ ປ 5 ບົດທີ 36 ມໍລະດົກທາງວັດທະນະທຳຂອງຊາດລາວ
- ❖ ວິເຄາະບົດສອນກ່ຽວກັບ
  ວິຊາໂລກອ້ອມຕົວ ປ 5 ບົດທີ 36 ມໍລະດົກທາງວັດທະນະທຳຂອງຊາດລາວ
- ❖ ດຳເນີນການສອນໃນ
  ວິຊາໂລກອ້ອມຕົວ ປ 5 ບົດທີ 36 ມໍລະດົກທາງວັດທະນະທຳຂອງຊາດລາວ

## 1. ການສອນກ່ຽວກັບມໍລະດົກ ແລະ ວັດທະນະທຳຂອງຊາດ ປ5

### 1.1. ແຕ່ງບົດສອນ

#### 1.1.1. ວິເຄາະຫຼັກສູດ

ວິຊາໂລກອ້ອມຕົວຊັ້ນປະຖົມປີທີ 5 ບົດທີ 30 ມໍລະດົກວັດທະນາທຳຂອງຊາດ

1) ວິເຄາະຈຸດປະສົງ

ຕາຕະລາງວິເຄາະຈຸດປະສົງ

| ຫົວຂໍ້ | ເວລາສອນ (ນາທີ) | ຈຸດປະສົງທາງພຶດຕິກຳ | | | | | | | | % ລວມ |
|---|---|---|---|---|---|---|---|---|---|---|
| | | ຄວາມຮູ້ | ເຂົ້າໃຈ | ນຳໄປໃຊ້ | ວິເຄາະ | ສັງເຄາະ | ປະເມີນຄ່າ | ທັກສະ | ເຈດຕະຄະຕິ | |
| 1. ບູຮານສະຖານ | 20 | 5 | 10 | | | | | | 5 | 20 |
| 2. ບູຮານວັດຖຸ | 20 | 5 | 10 | | | | | | 5 | 20 |
| 3. ປູຊະນີຍະສະຖານ | 20 | 5 | 10 | | | | | | 5 | 20 |
| 4. ປູຊະນີຍະວັດຖຸ | 20 | 5 | 10 | | | | | | 5 | 20 |
| 5. ການປົກປັກຮັກສາມໍລະດົກທາງ ວັດທະນະທຳຂອງຊາດ | 20 | 5 | 5 | 5 | | | | | 10 | 20 |
| ລວມ | 100 | 25 | 45 | 5 | | | | | 30 | 100 |

- ❑ **ຈຸດປະສົງ**

ເພື່ອໃຫ້ນັກຮຽນສາມາດ:

1. ອະທິບາຍຄວາມໝາຍບູຮານສະຖານ, ບູຮານວັດຖຸ.
2. ບອກຊື່, ຕັ້ງປູຊະຍະສະຖານ ແລະ ປູຊະນີຍະວັດຖຸທີ່ສຳຄັນຂອງລາວ ແລະ ທ້ອງຖິ່ນຕົນ.
3. ບອກວິທີການປົກປັກຮັກສາມໍລະດົກວັດທະນະທຳຂອງຊາດ.

2)ວິເຄາະເນື້ອໃນ

1. ບູຮານສະຖານ
2. ບູຮານວັດຖຸ
3. ປູຊະນີຍະສະຖານ
4. ປູຊະນີຍະວັດຖຸ
5. ການປົກປັກຮັກສາມໍລະດົກທາງວັດທະນະທຳຂອງຊາດ

3)ວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

ຕາຕະລາງວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

| ເນື້ອໃນ | ຈຸດປະສົງ |
|---|---|
| 1. ບູຮານສະຖານ<br>2. ບູຮານວັດຖຸ<br>3. ປູຊະນີຍະສະຖານ<br>4. ປູຊະນີຍະວັດຖຸ<br>5. ການປົກປັກຮັກສາມໍລະດົກທາງວັດທະນະທຳຂອງຊາດ | ເພື່ອໃຫ້ນັກຮຽນສາມາດ:<br>1. ອະທິບາຍຄວາມໝາຍບູຮານສະຖານ, ບູຮານວັດຖຸ.<br>2. ບອກຊື່, ຕັ້ງປູຊະນີຍະສະຖານ ແລະ ປູຊະນີຍະວັດຖຸທີ່ສຳຄັນຂອງລາວ ແລະ ທ້ອງຖິ່ນຕົນ.<br>3. ບອກວິທີການປົກປັກຮັກສາມໍລະດົກວັດທະນະທຳຂອງຊາດ. |

**1.1.2. ແຕ່ງບົດສອນ**

ວິຊາໂລກອ້ອມຕົວ ຊັ້ນປະຖົມປີທີ 5

ບົດທີ 30 ມໍລະດົກວັດທະນາທຳຂອງຊາດ ເວລາ 2 ຊົ່ວໂມງ

1. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

1. ອະທິບາຍຄວາມຫມາຍບູຮານສະຖານ, ບູຮານວັດຖຸ.

2. ບອກຊື່, ຕັ້ງປູຊະຍະສະຖານ ແລະ ປູຊະນີຍະວັດຖຸທີ່ສຳຄັນຂອງລາວ ແລະ ທ້ອງຖິ່ນຕົນ.

3. ບອກວິທີການປົກປັກຮັກສາມໍລະດົກວັດທະນະທຳຂອງຊາດ.

2. ເນື້ອໃນຕົ້ນຕໍ

ບູຮານສະຖານ-ບູຮານວັດຖຸ ປູຊະນີ້ຍະສະຖານ ແລະ ປຸຊະນີ້ຍະວັດຖຸ ເປັນມູນມໍລະດົກອັນລ້ຳຄ່າເຊິ່ງສະແດງເຖິງສະຕິປັນຍາ, ໄມ້ລາຍມືທາງດ້ານສິລະປະໃນການກໍ່ສ້າງ, ການແຕ້ມ, ການຄວັດລະບາຍໃຫ້ມີຄຸນຄ່າທາງດ້ານປະຫວັດສາດ ແລະ ວັດທະນະທຳທີ່ບັນພະບູລຸດລາວໄດ້ສ້າງຂຶ້ນມາຢ່າງມີລະບຽບແບບແຜນຕາມແຕ່ລະຍຸກແຕ່ລະສະໄຫມ. ດ້ວຍເຫດນັ້ນພວກເຮົາທຸກຄົນຕ້ອງພ້ອມກັນປົກປັກຮັກສາ ແລະ ອະນຸລັກໄວ້ເປັນມໍລະດົກຂອງຊາດລາວສືບຕໍ່ໄປ.

3. ສື່ການຮຽນ-ການສອນ

- ສະຖານທີ່ຈິ່ງ

- ວັດຖຸຈິງ .

- ຮູບພາບກ່ຽວກັບບຸຮານສະຖານ

-ບູຮານວັດຖຸ ປູຊະນີ້ຍະສະຖານ ແລະ ປູຊະຍະວັດg.

- ເອກະສານທີ່ພົວພັນເຖິງບົດຮຽນ

4. ກິດຈະກຳການຮຽນ-ການສອນ

ຂັ້ນນຳ ເວລາ 5 ນາທີ

- ກວດກາຈຳນວນພົນ
- ກວດກາຄວາມເປັນລະບຽບ
- ທວນຄືນບົດເກົ່າ:
  ຄູຕັ້ງຄຳຖາມ ອາຊຽນມີສະມາຊິກທັງໝົດຈັກປະເທດຄືປະເທດໃດແດ່? ໃຫ້ນັກຮຽນ 2-3 ຄົນຕອບ
- ລ່ຽວເຂົ້າສູ່ບົດໃໝ່: ຄູເອົາຮູບພາບກ່ຽວກັບບູຮານວັດຖຸ ແລະ ບູຮານສະຖານໃຫ້ນັກຮຽນເບິ່ງ

ຂັ້ນສອນ 70 ນາທີ

ກິດຈະກຳທີ 1. ລະດົມສະຫມອງກ່ຽວກັບມໍລະດົກວັດທະນະທຳລາວ

- ຄູຕັ້ງຄຳຖາມ, ຖາມນັກຮຽນດັ່ງນີ້:

1. ສິ່ງໃດແດ່ທີ່ຖືວ່າເປັນມໍລະດົກວັດທະນະທຳຂອງຊາດ" (ຄຳຕອບອາດກ້ວງຂວາງ).

2. ໃນທອງຖິ່ນຂອງນັກຮຽນມີ້ແຫ່ງທ່ອງທ່ຽດກ່ຽວກັບຫຍັງແດ່ (ນັກຮຽນອາດຈະຕອບທັງການທ່ອງທ່ຽວທຳມະຊາດ ແລະ ສະຖານທີ່ເກົ່າແກ່ຕ່າງໆ)

- ຄູຮ່ວມກັບນັກຮຽນຮ່ວມກັນສະຫຼຸບ:

ສິ່ງທີ່ຖືວ່າເປັນມໍລະດົກຂອງຊາດມີ: ສະຖານທີ່ກໍ່ສ້າງທີ່ເກົ່າແກ່, ວັດຄາອາຮາມ, ວັດຖຸສິ່ງຄອງເຊັ່ນ: ເຄື່ອງ, ເຄື່ອງໃຊ້ເຮັດດ້ວຍຫີນ, ທອງ, ເງິນ ແລະ ພະພຸດທະຮູບ

ທີ່ສ້າງຂຶ້ນມາຫຼາຍຮ້ອຍປີ.

ກິດຈະກໍາທີ 2 ສົນທະນາຄົ້ນຄວ້າເປັນກຸ່ມກ່ຽວກັບບູຮານສະຖານ-ບູຮານວັດຖຸ ປູຊະນີຍະສະຖານ ແລະປູຊະນີຍະວັດຖຸ ແລະ ການປົກປັກຮັກສາມໍລະດົກວັດທະນະທໍາຂອງຊາດ.

- ຄູແບ່ງນັກຮຽນອອກເປັນ 5 ກຸ່ມແລ້ວແບ່ງຄໍາຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າດັ່ງນີ້:

1) ບູຮານສະຖານຫມາຍເຖິງຫຍັງ ໃນປະເທດລາວມີບູຮານສະຖານທີ່ສໍາຄັນ ໃດແດ່?

2) ບູຮານວັດຖຸຫມາຍເຖິງຫຍັງ ໃນປະເທດລາວມີ້ບູຮານວັດຖຸທີ່ສໍາຄັນໃດແດ່?

3) ປູຊະນີຍະສະຖານຫມາຍເຖິງຫຍັງ? ໃນປະເທດລາວມີ ປູຊະນີຍະສະຖານ ທີ່ສໍາຄັນໃດແດ່?

4) ປູຊະນີຍະວັດຕູຫມາຍເຖິງຫຍັງ ໃນປະເທດລາວມີ້ ປຸຊະນີຍະວັດຖຸ ທີ່ສໍາຄັນໃດແດ່?

5) ພວກເຮົາຄວນປົກປັກຮັກສາມີ້ລະດົກວັດທະນະທໍາຂອງຊາດໄວ້ແນວໃດ?

- ຜູ້ຕາງຫນ້າກຸ່ມລາຍການ

- ຄູຮ່ວມກັບນັກຮຽນສະຫຼຸບ

ຂັ້ນສະຫຼຸບ ເວລາ 5 ນາທີ

- ຄູຖາມຂໍ້ຂອງໃຈ ແລະ ແກ້ໄຂຂໍ້ຂ້ອງໃຈ.
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບຄືນບົດຮຽນທີ່ສໍາຄັນ
- ແນະນໍາໃຫ້ນັກຮຽນຈົດບົດຮຽນ

ຂັ້ນວັດ ແລະ ປະເມີນ ເວລາ 20 ນາທີ

- ຄູໃຫ້ນັກຮຽນເຮັດບົດທົດສອບ

1) ບູຮານສະຖານຫມາຍເຖິງຫຍັງ ໃນປະເທດລາວມີບູຮານສະຖານທີ່ສໍາຄັນ ໃດແດ່?

2) ບູຮານວັດຖຸຫມາຍເຖິງຫຍັງ ໃນປະເທດລາວມີບູຮານວັດຖຸທີ່ສໍາຄັນໃດແດ່?

3) ປູຊະນີຍະສະຖານຫມາຍເຖິງຫຍັງ? ໃນປະເທດລາວມີ ປູຊະນີຍະສະຖານ ທີ່ສໍາຄັນໃດແດ່?

4) ປູຊະນີຍະວັດຕູຫມາຍເຖິງຫຍັງ ໃນປະເທດລາວມີ ປຸຊະນີຍະວັດຖຸ ທີ່ສໍາຄັນໃດແດ່?

5) ພວກເຮົາຄວນປົກປັກຮັກສາມໍລະດົກວັດທະນະທໍາຂອງຊາດໄວ້ແນວໃດ?

5. ການວັດ ແລະ ປະເມີນຜົນ

ຄູພິຈາລະນາຄວາມສາມາດຂອງນັກຮຽນຈາກ:

- ຄວາມຫ້າວຫັນໃນການຕອບຄຳຖາມ

- ການມີສ່ວນຮ່ວມໃນກິດຈະກຳກຸ່ມ

- ການຕັ້ງໃຈຟັງອະທິບາຍ.

- ເຮັດຂໍ້ທົດສອບພາຍຫຼັງການຮຽນ.

**1.2. ວິເຄາະບົດສອນ (ວິເຄາະຫຼັກສູດ)**

1) ດ້ານຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

1. ອະທິບາຍຄວາມໝາຍບູຮານສະຖານບູຮານວັດຖຸ.

2. ບອກຊື່, ຕັ້ງປູຊະຍະສະຖານ ແລະ ປູຊະນີຍະວັດຖຸທີ່ສຳຄັນຂອງລາວ ແລະ ທ້ອງຖິ່ນຕົນ.

3. ບອກວິທີການປົກປັກຮັກສາມໍລະດົກວັດທະນະທຳຂອງຊາດ.

2) ດ້ານເນື້ອໃນຕົ້ນຕໍ

ບົດທີ 36 ມໍລະດົກວັດທະນະທຳຂອງຊາດ

1. ບູຮານສະຖານ

ບູຮານສະຖານແມ່ນສະຖານທີ່ກໍ່ສ້າງ ທີ່ມີຄຸນຄ່າທາງດ້ານປະຫວັດາດ, ສິລະປະ, ວັດທະນະທຳເຊັ່ນ: ວັດວາອາຮາມ, ພະທາດ, ກຳແພງເມືອງ ... ເຊິ່ງມີອາຍຸຮ້ອຍປີຂຶ້ນໄປ ແລະ ບໍ່ສາມາດເຄື່ອນຍ້າຍໄດ້. ໃນປະເທດລາວ ມີບູຮານສະຖານທີ່ສຳຄັນຫຼາຍແຫ່ງເຊັ່ນ: ຫໍພະແກ້ວ, ວັດສີສະເກດ, ວັດສີເມືອງ, ພະທາດຫຼວງ, ວັດອົງຕື້, ວັດເພຍວັດ ແລະ ວັດຈັນຢູ່ນະຄອນຫຼວງວຽງຈັນ; ວັດຊຽງທອງຢູ່ຫຼວງພະບາງ; ພະທາດອິງຮັງຢູ່ສະຫວັນນະເຂດ; ພະທາດສີໂຄດຕະບອງຢູ່ຄຳມ່ວນ; ທົ່ງໄຫຫີນຢູ່ຊຽງຂວາງ...

2. ບູຮານວັດຖຸ

ບູຮານວັດຖຸແມ່ນວັດຖຸ ຫຼື ສິ່ງຂອງຕ່າງໆທີ່ສາມາດເຄື່ອນຍ້າຍໄດ້ ນັບທັງສິ່ງທີ່ມະນຸດສ້າງຂຶ້ນ ແລະ ທຳມະຊາດສ້າງໄວ້ເຊັ່ນ: ພະພຸດທະຮູບ, ເຄື່ອງປັ້ນດິນເຜົາ, ໂຄງກະດູກຂອງມະນຸດບູຮານ, ເຄື່ອງໃຊ້ສອຍຕ່າງໆ ທີ່ມີອາຍຸຮ້ອຍປີຂຶ້ນໄປ. ໃນປະເທດລາວມີບູຮານວັດຖຸຫຼາຍຢ່າງເຊັ່ນ: ພະບາງ (ຢູ່ຫຼວງພະບາງ), ຮາວທຽນ (ຢູ່ວັດສີສະເກດ), ໄຫ, ຖ້ວຍ (ຂຸດຄົ້ນພົບຢູ່ຂອບເຂດວັດນາກນະຄອນຫຼວງວຽງຈັນ ແລະ ບ້ານຊ່າງໄຫແຂວງຫຼວງພະບາງ), ເຄື່ອງມືເຮັດດ້ວຍຫີນ ແລະ ໂຄງກະດູກຂອງຄົນບູຮານ ຢູ່ຜາແຟນແຂວງບໍລິຄຳໄຊ...

3. ປູຊະນີຍະສະຖານ

ປູຊະນີຍະສະຖານແມ່ນສະຖານທີ່ທີ່ຄົນທົ່ວໄປເຄົາລົບບູຊາເຊັ່ນ: ວັດວາອາຣາມ, ພະທາດເຈດີຕ່າງໆ ເຊິ່ງມີອາຍຸຮ້ອຍປີຂຶ້ນໄປ ຢູ່ໃນປະເທດລາວຂອງເຮົາມີປູຊະນີຍະສະຖານສຳຄັນຫຼາຍແຫ່ງຄື: ພະທາດຫຼວງວຽງຈັນ, ວັດຫໍພະແກ້ວ, ວັດສີສະເກດ, ວັດສີເມືອງ, ພະທາດສີໂຄດຕະບອງ, ພະທາດອິງຮັງ...

4. ປູຊະນີຍະວັດຖຸ

ປູຊະນີຍະວັດຖຸ ແມ່ນວັດຖຸ ຫຼື ສິ່ງຂອງທີ່ຄົນເຄົາລົບບູຊາ ສືບທອດກັນມາແຕ່ບູຮານນະການ ເຊິ່ງມີອາຍຸຮ້ອຍປີຂຶ້ນໄປ. ໃນປະເທດເຮົາມີປູຊະນີຍະວັດຖຸຫຼາຍຢ່າງເຊັ່ນ: ພະພຸດທະຮູບພະບາງ (ປາງຫ້າມຍາດ), ພະພຸດທະຮູບນາກປົກ, ພະພຸດທະຮູບອິງຕື້, ຮາວທຽນ, ສີລາຈາລຶກ (ຢູ່ວັດສີສະເກດ).

5. ປົກປັກຮັກສາມໍລະດົກ ວັດທະນະທຳຂອງຊາດ

ບູຮານສະຖານ, ບູຮານວັດຖຸ, ຊະນີຍະສະຖານ ແລະ ປູຊະນີຍະວັດຖຸ ເປັນມໍລະດົກອັນລ້ຳຄ່າ, ເປັນຊັບສົມບັດຂອງຊາດ, ເປັນຜົນງານທາງດ້ານສິນລະປະ, ເປັນສະຖາປັດຕະຍະກຳ ທີ່ມີຄຸນຄ່າທາງດ້ານປະຫວັດສາດ ແລະ ວັດທະນະທຳເຊິ່ງສະແດງເຖິງຄວາມສາມາດທາງດ້ານສະຕິປັນຍາຂອງບັນພະບູລຸດລາວ ທີ່ປະດິດ ແລະ ສ້າງຂຶ້ນ ທັງບົ່ງບອກເຖິງຄວາມຈະເລີນກ້າວໜ້າຂອງຊາດ ໃນແຕ່ລະຍຸກແຕ່ລະສະໄໝ.

ພວກເຮົາທຸກຄົນຕ້ອງປົກປັກຮັກສາ ບູຮານສະຖານ, ບູຮານວັດຖຸ, ຊະນີຍະສະຖານ ແລະ ປູຊະນີຍະວັດຖຸ ຂອງຊາດໃຫ້ຍືນຍົງຢູ່ຕໍ່ໄປດັ່ງນີ້:

- ບໍ່ມ້າງເພທຳລາຍ
- ຊ່ວຍກັນເບິ່ງແຍ່ງ, ຄຸ້ມຄອງໃຫ້ດີ
- ບໍ່ເອົາເປັນຊັບສົມບັດສ່ວນຕົວ
- ບໍ່ຊື້-ຂາຍ
- ເມື່ອມີການເປ້ເພຕ້ອງສ້ອມແປງ ໃຫ້ຢູ່ໃນຮູບຊົງເດີມ
- ປະກອບສ່ວນທຶນຮອນ, ເຫື່ອແຮງເຂົ້າໃນການປົກປັກຮັກສາ...

3)ດ້ານເວລາ

ນຳໃຊ້ເວລາເຂົ້າໃນການສອນ 2 ຊົ່ວໂມງ

ຂັ້ນນຳ 5 ນາທີ

ຂັ້ນສອນ 70 ນາທີ

ຂັ້ນສະຫຼຸບ 5 ນາທີ

ຂັ້ນວັດ ແລະ ປະເມີນ 20 ນາທີ

4)ສື່ດ້ານການຮຽນ-ການສອນ

- ສະຖານທີ່ຈິ່ງ
- ວັດຖຸຈິງ .
- ຮູບພາບກ່ຽວກັບບຸຮານສະຖານ

-ບູຮານວັດຖຸ ປູຊະນີຍະສະຖານ ແລະ ປູຊະຍະວັດຖຸ

- ເອກະສານທີ່ພົວພັນເຖິງບົດຮຽນ

5)ກິດຈະກຳການຮຽນ-ການສອນ

ກິດຈະກຳທີ 1. ລະດົມສະໝອງກ່ຽວກັບມໍລະດົກວັດທະນະທຳລາວ

ກິດຈະກຳທີ 2 ສົນທະນາຄົ້ນຄວ້າເປັນກຸ່ມກ່ຽວກັບບູຮານສະຖານ-ບູຮານວັດຖຸ ປູຊະນີບະສະຖານ ແລະປູຊະນີ້ຍະວັດຖຸ ແລະ ການປົກປັກຮັກສາມໍລະດົກວັດທະນະທຳຂອງຊາດ.

6)ການວັດ ແລະ ປະເມີນຜົນ

ຄູພິຈາລະນາຄວາມສາມາດຂອງນັກຮຽນຈາກ:

- ຄວາມຫ້າວຫັນໃນການຕອບຄຳຖາມ
- ການມີສ່ວນຮ່ວມໃນກິດຈະກຳກຸ່ມ
- ການຕັ້ງໃຈຟັງອະທິບາຍ.
- ເຮັດຂໍ້ທົດສອບພາຍຫຼັງການຮຽນ.

## 2.ດຳເນີນການສອນທົດລອງ

- ເລືອກຜູສອນ
- ດຳເນີນການສອນ
- ຖອດຖອນບົດຮຽນ

# ກິດຈະກຳທ້າຍບົດ

1. ນັກສຶກສາຈົ່ງເລືອເກອົາບົດຮຽນໃດໜຶ່ງໃນວິຊາໂລກອ້ອມຕົວ ໃນຊັ້ນ ປ 5 ຫຼື ປ4 ເພື່ອດາເນີນການວິເຄາະຫຼັກສູດ ແລະ ແຕ່ງບົດສອນ.

# ບົດທີ 5

# ການສອນກ່ຽວກັບການຈັດລະບົບການປົກຄອງໃນລາວ

## ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ❖ ບອກ,ອະທິບາຍ, ວິເຄາະ ແລະ ສັງລວມໄດ້ກ່ຽວກັບເນື້ອໃນ ວິຊາໂລກອ້ອມຕົວ ປ 5 ບົດທີ 44 ລະບົບການປົກຄອງຂອງລາວ
- ❖ ແຕ່ງບົດສອນກ່ຽວກັບ ວິຊາໂລກອ້ອມຕົວ ປ 5 ບົດທີ 44 ລະບົບການປົກຄອງຂອງລາວ
- ❖ ວິເຄາະບົດສອນກ່ຽວກັບ ວິຊາໂລກອ້ອມຕົວ ປ 5 ບົດທີ 44 ລະບົບການປົກຄອງຂອງລາວ
- ❖ ດຳເນີນການສອນໃນ ວິຊາໂລກອ້ອມຕົວ ປ 5 ບົດທີ 44 ລະບົບການປົກຄອງຂອງລາວ

## 1. ການສອນກ່ຽວກັບການຈັດລະບົບການປົກຄອງໃນລາວ

### 1.1. ແຕ່ງບົດສອນ

### 1.1.1. ວິເຄາະຫຼັກສູດ

ວິຊາໂລກອ້ອມຕົວຊັ້ນປະຖົມປີທີ 5 ບົດທີ 29 ແມ່ນ້ຳໃນປະເທດລາວ

- ▪ ວິເຄາະຈຸດປະສົງ

ຕາຕະລາງວິເຄາະຈຸດປະສົງ

| ຫົວຂໍ້ | ເວລາສອນ (ນາທີ) | ຈຸດປະສົງທາງພຶດຕິກຳ | | | | | | | | ລວມ % |
|---|---|---|---|---|---|---|---|---|---|---|
| | | ຄວາມຮູ້ | ເຂົ້າໃຈ | ນຳໄປໃຊ້ | ວິເຄາະ | ສັງເຄາະ | ປະເມີນຄ່າ | ທັກສະ | ຈິດພິສ | |
| ❖ ລະບົບການປົກຄອງໃນລາວ | 20 | 10 | 10 | | | | | | | 20 |
| ❖ ບົດບາດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າເມືອງ ແລະ ນາຍບ້ານ | 50 | 20 | 30 | | | | | | | 50 |
| ❖ ບຸກຄົນສຳຄັນໃນລະບົບການປົກຄອງຂອງລາວໃນໄລຍະຜ່ານມາ | 30 | 10 | 5 | 5 | | 10 | | | | 30 |

| ລວມ | 100 | 40 | 45 | 5 | | 10 | | | | 100 |
|---|---|---|---|---|---|---|---|---|---|---|

❑ **ຈຸດປະສົງ**

ເພື່ອໃຫ້ນັກຮຽນສາມາດ:

- ບອກລະບົບການປົກຄອງຂັ້ນຕ່າງໆຂອງລາວ
- ອະທິບາຍບົດບາດ ແລະ ຫນ້າທີ່ຂອງການປົກຄອງຄົ້ນຕ່າງໆ
- ບອກຊື່ຜູ້ນຳຂອງປະເທດ ແລະ ທ້ອງຖິ່ນຂອງຕົນ.

2) ວິເຄາະເນື້ອໃນ

❖ ລະບົບການປົກຄອງໃນລາວ

❖ ບົດບາດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າເມືອງ ແລະ ນາຍບ້ານ

❖ ບຸກຄົນສຳຄັນໃນລະບົບການປົກຄອງຂອງລາວໃນໄລຍະຜ່ານມາ

3) ວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

ຕາຕະລາງວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

| ເນື້ອໃນ | ຈຸດປະສົງ |
|---|---|
| ❖ ລະບົບການປົກຄອງໃນລາວ<br>❖ ບົດບາດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າເມືອງ ແລະ ນາຍບ້ານ<br>❖ ບຸກຄົນສຳຄັນໃນລະບົບການປົກຄອງຂອງລາວໃນໄລຍະຜ່ານມາ | ເພື່ອໃຫ້ນັກຮຽນສາມາດ:<br>▪ ບອກລະບົບການປົກຄອງຂັ້ນຕ່າງໆຂອງລາວ<br>▪ ອະທິບາຍບົດບາດ ແລະ ຫນ້າທີ່ຂອງການປົກຄອງຄົ້ນຕ່າງໆ<br>▪ ບອກຊື່ຜູ້ນຳຂອງປະເທດ ແລະ ທ້ອງຖິ່ນຂອງຕົນ. |

**1.1.2. ແຕ່ງບົດສອນ**

ວິຊາໂລກອ້ອມຕົວ ຊັ້ນປະຖົມປີທີ 5

ບົດທີ 44 ລະບົບການປົກຄອງຂອງລາວ ເວລາ 2 ຊົ່ວໂມງ

1. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ບອກລະບົບການປົກຄອງຂັ້ນຕ່າງໆຂອງລາວ
- ອະທິບາຍບົດບາດ ແລະ ຫນ້າທີ່ຂອງການປົກຄອງຄົ້ນຕ່າງໆ

- ບອກຊື່ຜູ້ນໍາຂອງປະເທດ ແລະ ທ້ອງຖິ່ນຂອງຕົນ.

2. ເນື້ອໃນຕົ້ນຕໍ

ລະບົບການປົກຄອງຂອງອາດປະກອບມີຊັ້ນສູນກາງ ແລະ ໃນທ້ອງຖິ່ນ, ຂັ້ນທ້ອງຖິ່ນທັງແບ່ງ ແກເປັນ ໑ ຄົ້ນ: ຂັ້ນແຂວງນະຄອນຫຼວງ. ພົ້ນເມືອງ ແລະ ຂັ້ນບ້ານ, ແຕ່ລະຄົ້ນກໍາລະບົດບາດ ແລະ ຫນ້າທີ່ຄວາມຮັບສິດຊອບຂອງຕົນ.

3. ສື່ການຮຽນ-ການສອນ
   1. ຮູບຜູ້ນໍາຕ່າງໆ:
      - ທ່ານ ໄກສອນ ພົມວິຫານ
      - ທ່ານ ສຸພານຸວົງ
      - ທ່ານ ທອງສິງ ທໍາມະວົງ
      - ທ່ານ ຈູມມະລີ ໄຊຍະສອນ
      - ທ່ານ ບຸນຍັງວໍລະຈິດ
      - ທ່ານ ທອງລຸນ ສີສຸລິດ
      - ທ່ານ ພັນຄໍາ ວິພາວັນ
      - ຮູບເຈົ້າແຂວງ ແລະ ເຈົ້າເມືອງທີ່ນັກຮຽນອາໄສຢູ່
   2. ເອກະສານ ທີ່ພົວພັນເຊິ່ງບົດຮຽນ
4. ກິດຈະກໍາການຮຽນ-ການສອນ

ຂັ້ນນໍາ ເວລາ 5 ນາທີ

- ກວດກາຈໍານວນພົນ
- ກວດກາຄວາມເປັນລະບຽບ
- ທວນຄືນບົດເກົ່າຄໍາຖາມ: ນັກຮຽນມີໜ້າທີ່ຫຍັງແນ່?
- ລ້ຽວເຂົ້າສູ່ບົດໃໝ່

ຂັ້ນສອນ ເວລາ  70 ນາທີ

ກິດຈະກໍາທີ 1. ສົນທະນາ ແລະ ຄົ້ນຄວ້າເປັນກຸ່ມກ່ຽວກັບລະບົບການປົກຄອງຂອງລາວ

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເຫມາະສົມ.
- ຢາຍຄໍາຖາມໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄ້ວາ 1 ຄໍາ

ຄໍາຖາມຄົ້ນຄວ້າ:

1. ລະບົບການປົກຄອງລາວມີຈັກຂັ້ນຄືຂັ້ນຄືໃດແດ່?
2. ແຕ່ລະຂັ້ນມີບົດບາດ ແລະ ຫນ້າທີ່ຄືແນວໃດ?

3. ບຸກຄົນສຳຄັນໃນລະບົບການປົກຄອງຂອງລາວ ແຕ່ປີ 1976 ເຖິງປັດຈຸບັນມີໃຜແດ່?ບຸກຄົນເຫຼົ່ານັ້ນມີຜົນງານຫຍັງແດ່ຕໍ່ປະເທດຊາດ?
4. ປັດຈຸບັນນີ້ໃຜເປັນປະທານປະເທດ, ປະທານພາແຫ່ງຊາດ ແລະ ນາຍົກລັດຖະມົນຕີຂອງປະເທດເຮົາ?
    - ຄູໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນສະເໜີ
    - ຄູແລະ ນັກຮຽນພ້ອມກັນທະບານບົດຮຽນ.

ກິດຈະກຳທີ 2 ແດງຄວາມຄິດເຫັນ:

- ຄູໃຫ້ນັກຮຽນຄົ້ນຄ້ວາຂໍ້ຄວາມດັ່ງລຸ່ມນີ້ກັບເພື່ອນທີ່ນັ່ງຢູ່ທາງຂ້າງ
- ຂໍ້ຄວາມໃດທີ່ສະແດງເຖິງການເປັນຜູ້ນຳທີ່ດີໂດຍຂີດໝາຍ ✓ ໃສ່ຫນ້າຂໍ້ຄວາມທີ່ເຫັນວ່າຖືກຕ້ອງ

    ກ. ມີຄວາມຮູ້ຄວາມສາມາດທີ່ໃນການເຮັດວຽກ.

    ຂ. ຮູ້ແກ້ບັນຫາ ແລະ ສັດຊື່ບໍລິສຸດ.

    ຄ. ໃຊ້ສິດອຳນາດຂອງຕົນເປັນໃຫຍ່.

    ງ. ມີຄວາມຮັບຜິດຊອບຕໍ່ຫນ້າທີ່ວຽກງານ.

    ຈ. ເປັນຜູ້ນຳບໍ່ຈຳເປັນຟັງຢ່າຄິດເຫັນແທງຄົນອື່ນ.

    ສ. ໃຈກ້ວາງຍອມຟັງຄຳຄິດເຫັນຂອງຄົນອື່ນ .

- ຄູໃຫ້ນັກຮຽນຈຳນວນຫນຶ່ງອອກມາສະເຫນີໃນຫ້ອງຮຽນ.
- ສ່ວນນັກຮຽນຮູ້ອື່ນໆປະກອບຄວາມເຫັນເພີ່ມເຕີມ.
- ຄູ ແລະ ນັກຮຽນພ້ອມກັນສະຫຼຸບ.

ກິດຈະກຳທີ 3. ສົນທະນາຖາມຕອບຫມົດຫ້ອງກ່ຽວກັບຜູ້ນຳຂັ້ນຕ່າງໆ

- ຄູໃຫ້ນັກຮຽນອອກມາບອກຊື່ຜູ້ນຳແຂວງ, ເມືອງ, ບ້ານທີ່ຕົນເອງສັງກັດຢູ່ບ່ອນທີ່ຕົນເອງ
- ຄູສະຫຼຸບ: ຜູ້ນຳມີຫຼາຍຂຶ້ນ, ນັບທັງຜູ້ນຳໃນຄອບຄົວ, ຜູ້ນຳໃນຊຸມຊົນ ເມືອງ, ບ້ານ ແລະຜູ້ນຳລະດັບຊາດ. ຜູ້ນຳຈະຕ້ອງເປັນຄົນມີຄວາມຮູ້, ຄວາມສາມາດ, ມີປະສົບການ, ມີຄວາມຮັບຜິດຊອບຕໍ່ຫນ້າທີ່ວຽກງານ, ນັ້ນຜູ້ໃດ ແບບທັນ. ສະຫຼຸບຄວາມວ່າ: ຈະຕ້ອງເປັນຄົນດີ ຊຶ່ງນຳພາປະເທດຊາດໃຫ້ກ້າວຫນ້າຈະເລີນໄດ້ .

ຂັ້ນສະຫຼຸບ ເວລາ 5 ນາທີ

- ຄູຖາມຂໍ້ຂ້ອງໃຈ ແລະ ແກ້ໄຂຂໍ້ຂ້ອງໃຈ(ຖ້າມີ)
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ
- ແນະນຳໃຫ້ນັກຮຽນຈົດບົດຮຽນ

ຂັ້ນວັດ ແລະ ປະເມີນຜົນ ເວລາ 20 ນາທີ

- ເຮັດບົດທົດສອບ
- ສຶກສາແນວຄິດ

- ມອບວຽກບ້ານ

5. ການວັດ ແລະ ປະເມີນຜົນ

ຄູພິຈາລະນາຄວາມສາມາດຂອງນັກສຽນຈາກ:

- ການຕອບຄຳຖາມຂອງນັກຮຽນ
- ການເຮັດວຽກເປັນກຸ່ມ
- ການສະແດງຄວາມຄິດເຫັນຂອງນັກຮຽນ.
- ການເຮັດບົດທົດສອບ

**1.2. ວິເຄາະບົດສອນ**

1. ດ້ານຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ບອກລະບົບການປົກຄອງຂັ້ນຕ່າງໆຂອງລາວ
- ອະທິບາຍບົດບາດ ແລະ ຫນ້າທີ່ຂອງການປົກຄອງຄົ້ນຕ່າງໆ
- ບອກຊື່ຜູ້ນຳຂອງປະເທດ ແລະ ທ້ອງຖິ່ນຂອງຕົນ.

2. ດ້ານເນື້ອໃນ

ບົດທີ 44 ລະບົບການປົກຄອງຂອງລາວ

1. ລະບົບການປົກຄອງຂັ້ນຕ່າງໆ

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນນັບແຕ່ປີ 1975 ເປັນຕົ້ນມາ ລະບົບການປົກຄອງຂອງລາວ ໄດ້ຮັບການສ້າງຕັ້ງເປັນເອກະພາບຂຶ້ນໃນຂອບເຂດທົ່ວປະເທດ ນັບແຕ່ຂັ້ນສູນກາງ ລົງຮອດທ້ອງຖິ່ນ. ໃນແຕ່ລະຂັ້ນມີຜູ້ຊີ້ນຳ, ນຳພາທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ປ້ອງກັນຊາດປ້ອງກັນຄວາມສະຫງົບເຊັ່ນ:

+ ຂັ້ນສູນກາງມີ ປະທານປະເທດເປັນປາມຸກລັດ, ນາຍົກລັດຖະມົນຕີເປັນຫົວໜ້າລັດຖະບານ ໃນນັ້ນ ມີບັນດາລັດຖະມົນຕີຂອງກະຊວງຕ່າງໆ ແລະ ອົງການທຽບເທົ່າຂັ້ນກະຊວງ. ປະທານສະພາແຫ່ງຊາດເປັນປະທານຂອງອົງການນິຕິບັນຍັດມີສິດຕົກລົງບັນດາບັນຫາພື້ນຖານຂອງປະເທດຊາດ, ທັງເປັນອົງການຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ ແລະ ຕຸລາການ.

+ ສ່ວນການປົກຄອງຂັ້ນທ້ອງຖິ່ນແບ່ງອອກເປັນ 3 ຂັ້ນຄື: ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ.

- ຂັ້ນແຂວງມີ ເຈົ້າແຂວງ, ຮອງເຈົ້າແຂວງ, ນະຄອນຫຼວງມີເຈົ້າຄອງນະຄອນຫຼວງ ແລະ ຮອງເຈົ້າຄອງນະຄອນຫຼວງ.
- ຂັ້ນເມືອງມີ ເຈົ້າເມືອງ ແລະ ຮອງເຈົ້າເມືອງ.
- ຂັ້ນບ້ານມີ ນາຍບ້ານ ແລະ ຮອງນາຍບ້ານ.

2. ບົດບາດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າເມືອງ ແລະ ນາຍບ້ານ

+ ບົດບາດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ເຈົ້າເມືອງ:

- ຮັບປະກັນການປະຕິບັດລັດຖະທຳມະນູນ, ກົດໝາຍ, ຈັດຕັ້ງປະຕິບັດທຸກມະຕິຄຳສັ່ງຂອງຂັ້ນເທິງວາງອອກ.
- ຊີ້ນຳ ແລະ ກວດກາການເຄື່ອນໄຫວຂອງທຸກຂັ້ນ ທີ່ຂຶ້ນກັບຂອບເຂດຄວາມຮັບຜິດຊອບຂອງຕົນ.
- ລົບລ້າງ ຫຼື ຍົກເລີກຂໍ້ຕົກລົງທີ່ຢູ່ຂັ້ນຂອງຕົນ ຫຼື ຂັ້ນລຸ່ມທີ່ຂັດກັບລະບຽບກົດໝາຍ.
- ຄຸ້ມຄອງພົນລະເມືອງ, ພິຈາລະນາ ແລະ ແກ້ໄຂຄຳຮ້ອງ ແລະ ຄຳສະເໜີຂອງປະຊາຊົນ.
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

+ ບົດບາດ ແລະ ໜ້າທີ່ຂອງນາຍບ້ານ

ນາຍບ້ານມີໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດລະບຽບກົດໝາຍ ແລະ ມະຕິຄຳສັ່ງຂອງລັດ, ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງບ້ານ ແລະ ພັດທະນາບ້ານໃຫ້ມີຄວາມຈະເລີນກ້າວໜ້າ.

3. ບຸກຄົນສຳຄັນໃນລະບົບການປົກຄອງຂອງລາວໃນໄລຍະຜ່ານມາ

ໃນກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ວັນທີ 1-2 ເດືອນ 12 ປີ 1975 ໄດ້ແຕ່ງຕັ້ງທ່ານ ສຸພາ ນຸວົງ ເປັນປະທານປະເທດ, ແຕ່ງຕັ້ງທ່ານ ໄກສອນ ພົມວິຫານ ເປັນນາຍົກລັດຖະມົນຕີ ໄດ້ນຳພາປະຊາຊົນລາວທັງຊາດ ບູລະນະ ແລະ ພັດທະນາປະເທດຊາດໄດ້ຮັບຜົນສຳເລັດ ອັນໃຫຍ່ຫຼວງໃນທຸກດ້ານ ແລະ ຕໍ່ມາກໍມີຜູ້ນຳຫຼາຍທ່ານ ໄດ້ສືບຕໍ່ນຳພາປະຊາຊົນລາວບັນດາເຜົ່າ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດເຊັ່ນ: ທ່ານ ໜູຮັກ ພູມສະຫວັນ, ທ່ານ ຄຳໄຕ ສີພັນດອນ, ທ່ານ ຈູມມະລີ ໄຊຍະສອນ...

3.ດ້ານເວລາ

- ຂັ້ນນຳ ເວລາ 5 ນາທີ
- ຂັ້ນສອນ ເວລາ 70 ນາທີ
- ຂັ້ນສະຫຼຸບ ເວລາ 5 ນາທີ
- ຂັ້ນວັດ ແລະ ປະເມີນ ເວລາ 20 ນາທີ

4. ສື່ການຮຽນ-ການສອນ

1) ຮູບຜູ້ນຳຕ່າງໆ:
   - ທ່ານ ໄກສອນ ພົມວິຫານ
   - ທ່ານ ສຸພານຸວົງ
   - ທ່ານ ທອງສິງ ທຳມະວົງ
   - ທ່ານ ຈູມມະລີ ໄຊຍະສອນ
   - ທ່ານ ບຸນຍັງວໍລະຈິດ
   - ທ່ານ ທອງລຸນ ສີສຸລິດ
   - ທ່ານ ພັນຄຳ ວິພາວັນ
   - ຮູບເຈົ້າແຂວງ ແລະ ເຈົ້າເມືອງທີ່ນັກຮຽນອາໄສຢູ່

2) ເອກະສານປະກອບການສອນ

5. ກິດຈະກຳການຮຽນ-ການສອນ

ກິດຈະກຳທີ 1. ສົນທະນາ ແລະ ຄົ້ນຄວ້າເປັນກຸ່ມກ່ຽວກັບລະບົບການປົກຄອງຂອງລາວ

ກິດຈະກຳທີ 2 ແດງຄວາມຄິດເຫັນ:

ກິດຈະກຳທີ 3. ສົນທະນາຖາມຕອບຫນົດຫ້ອງກ່ຽວກັບຜູ້ນຳຂັ້ນຕ່າງໆ

6. ການວັດ ແລະ ປະເມີນຜົນ

ຄູພິຈາລະນາຄວາມສາມາດຂອງນັກສຽນຈາກ:

- ການຕອບຄຳຖາມຂອງນັກຮຽນ
- ການເຮັດວຽກເປັນກຸ່ມ
- ການສະແດງຄວາມຄິດເຫັນຂອງນັກຮຽນ.
- ການເຮັດບົດທົດສອນ

## 2.ດຳເນີນການສອນທົດລອງ

1. ຄັດເລືອກຜູ້ສອນ
2. ດຳເນີນການສອນ
3. ຖອດຖອນບົດຮຽນ

## ກິດຈະກຳທ້າຍບົດ

1) ນັກສຶກສາຈົ່ງດຳເນີນການວິເຄາະຫຼັກສູດ ແລະ ແຕ່ງບົດສອນໃນວິຊາໂລກອ້ອມຕົວປ4 ຫຼື ປ5( ບໍ່ໃຫ້ເລືອກເອົາຫົວຂໍ້ເກົ່າ)

# ບົດທີ 6

# ການສອນກ່ຽວກັບສິດ ແລະ ພັນທະຂອງພົນລະເມືອງ

## ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

1. ບອກ,ອະທິບາຍ, ວິເຄາະ ແລະ ສັງລວມໄດ້ກ່ຽວກັບເນື້ອໃນ
   ວິຊາໂລກອ້ອມຕົວ ປ 5 ບົດທີ 43 ສິດ ແລະ ພັນທະຂອງພົນລະເມືອງລາວ
2. ແຕ່ງບົດສອນກ່ຽວກັບ
   ວິຊາໂລກອ້ອມຕົວ ປ 5 ບົດທີ 43 ສິດ ແລະ ພັນທະຂອງພົນລະເມືອງລາວ
3. ວິເຄາະບົດສອນກ່ຽວກັບ
   ວິຊາໂລກອ້ອມຕົວ ປ 5 ບົດທີ 43 ສິດ ແລະ ພັນທະຂອງພົນລະເມືອງລາວ
4. ດຳເນີນການສອນໃນ
   ວິຊາໂລກອ້ອມຕົວ ປ 5 ບົດທີ 43 ສິດ ແລະ ພັນທະຂອງພົນລະເມືອງລາວ

## 1.ການສອນກ່ຽວກັບສິດ ແລະ ພັນທະຂອງພົນລະເມືອງ

### 1.1. ແຕ່ງບົດສອນ

### 1.1.1. ວິເຄາະຫຼັກສູດ

ວິຊາໂລກອ້ອມຕົວຊັ້ນປະຖົມປີທີ 5 ບົດທີ43 ສິດ ແລະ ໜ້າທີ່ຂອງພົນລະເມືອງລ

1)ວິເຄາະຈຸດປະສົງ

ຕາຕະລາງວິເຄາະຈຸດປະສົງ

| ຫົວຂໍ້ | ເວລາສອນ (ນາທີ) | ຈຸດປະສົງທາງພຶດຕິກຳ | | | | | | | | ລວມ % |
|---|---|---|---|---|---|---|---|---|---|---|
| | | ຄວາມຮູ້ | ເຂົ້າໃຈ | ນຳໄປໃຊ້ | ວິເຄາະ | ສັງເຄາະ | ປະເມີນຄ່າ | ທັກສະ | ຈັນພິສ | |
| 1. ສິດແມ່ນຫຍັງ | 20 | 5 | 15 | | | | | | | 20 |
| 2. ສິດ ແລະ ໜ້າທີ່ຂອງພົນລະເມືອງລາວ | 40 | 10 | 20 | 10 | | | | | | 40 |
| 3. ໜ້າທີ່ຄວາມຮັບຜິດຊອບຂອງນັກຮຽນ | 40 | 10 | 20 | 10 | | | | | | 40 |
| ລວມ | 100 | 25 | 55 | 20 | | | | | | 100 |

- ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

ບອກສິດ ແລະ ຫນ້າທີ່ຂອງພົນລະເມືອງລາວ

ອະທິບາຍສິດ ແລະ ຫນ້າທີ່ຂອງພົນລະເມືອງລາວ

ປະຕິບັດຕົນໃຫ້ເປັນພົນລະເມືອງດີຂອງຊາດ.

2)ວິເຄາະເນື້ອໃນ

1.ສິດແມ່ນຫຍັງ

2.ໜ້າທີ່ຂອງພົນລະເມືອງລາວ

3.ໜ້າທີ່ຄວາມຮັບຜິດຊອບຂອງນັກຮຽນ

3)ວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

ຕາຕະລາງວິເຄາະຄວາມສຳພັນລະຫວ່າງຈຸດປະສົງ ແລະ ເນື້ອໃນ

| ເນື້ອໃນ | ຈຸດປະສົງ |
|---|---|
| ❖ ສິດແມ່ນຫຍັງ<br>❖ ໜ້າທີ່ຂອງພົນລະເມືອງລາວ<br>❖ ໜ້າທີ່ຄວາມຮັບຜິດຊອບຂອງນັກຮຽນ | ເພື່ອໃຫ້ນັກຮຽນສາມາດ:<br>▪ ບອກສິດ ແລະ ຫນ້າທີ່ຂອງພົນລະເມືອງລາວ<br>▪ ອະທິບາຍສິດ ແລະ ຫນ້າທີ່ຂອງພົນລະເມືອງລາວ<br>▪ ປະຕິບັດຕົນໃຫ້ເປັນພົນລະເມືອງດີຂອງຊາດ. |

**1.1.2. ແຕ່ງບົດສອນ**

ວິຊາໂລກອ້ອມຕົວ ຊັ້ນປະຖົມປີທີ 5

ບົດທີ 43 ສິດ ແລະ ໜ້າທີ່ຂອງພົນລະເມືອງລາວ ເວລາ 2 ຊົ່ວໂມງ

1 ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ບອກສິດ ແລະ ຫນ້າທີ່ຂອງພົນລະເມືອງລາວ
- ອະທິບາຍສິດ ແລະ ຫນ້າທີ່ຂອງພົນລະເມືອງລາວ
- ປະຕິບັດຕົນໃຫ້ເປັນພົນລະເມືອງດີຂອງຊາດ.

2.ເນື້ອໃນຕົ້ນຕໍ

ແມ່ນອຳນາດອັນຊອບທຳເຊິ່ງມາຈາກການເຄົາລົບນັບຖື ໃຫ້ກຽດຊຶ່ງກັນ ແລະ ເນດນເມືອງລາວ ບຸກຄົນຕ້ອງໄດ້ຮັບປະກັນໂດຍກົດຫມາຍ ແລະ ມາດຕະການເທົ່າທຽມກັນ. ຄົນລາວ ທຸກຄົນທີ່ເປັນ

ພົນລະເມືອງຂອງຊາດຈະຕ້ອງໄດ້ປະຕິບັດຫນ້າທີ່ ຕາມຄວາມຮັບຜິດຊອບຂອງໃຜມັນທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນເຊັ່ນ: ເສຍພາສີອາກອນໃຫ້ລັດ: ພາສີການຄ້າ, ທີ່ດິນ, ການຜະລິດ, ພາສີລາຍໄດ້. ນອກນັ້ນຄົນລາວທຸກຄົນຈະຕ້ອງມີຫນ້າທີ່ຮັບຜິດຊອບ, ມີຄວາມສາມັກຄີ, ຫນ້າທີ່ປ້ອງກັນ ຊາດປ້ອງກັນຄວາມສະຫງົບ, ຮັກສາຊັບສິນບັດຂອງສ່ວນລວມຂອງບຸກຄົນ ແລະ ອື່ນໆ.

3. ດ້ານສື່ການຮຽນ-ການສອນ

- ເອກະສານທີ່ກ່ຽວຂ້ອງກັບບົດຮຽນ.
- ຮູບພາບກ່ຽວກັບການເກນທະຫານພັນທະ, ການເສຍພາສີປະເພດຕ່າງໆ

4. ກິດຈະກຳການຮຽນ-ການສອນ

ຂັ້ນນຳ ເວລາ 5 ນາທີ

- ກວດກາຈຳນວນພົນ
- ກວດກາຄວາມເປັນລະບຽບ
- ທວນຄືນບົດເກົ່າ: ກົດມາຍແມ່ນຫຍັງ, ມີຈັກປະເພດ?
- ລ້ຽວເຂົ້າສູ່ບົດຮຽນ: ເວລາຢູ່ເຮືອນພວກນ້ອງມີໜ້າທີ່ເຮັດຫຍັງແນ່?

ຂັ້ນນຳ ເວລາ 70 ນາທີ

ກິດຈະກຳທີ 1 ສົນທະນາຖາມຕອບ

ຄູຕັ້ງຄຳຖາມໃຫ້ນັກຮຽນຕອບ

ຄຳຖາມ:

1) ສິດແມ່ນຫຍັງ?
2) ທຸກຄົນມີສິດເທົ່າທຽມກັນບໍ່? ເພາະເຫດໃດ?

- ຄູໃຫ້ນັກຮຽນຕອບ 2-3 ຄົນ ຫຼື ຫຼາຍກ່ວານັ້ນ
- ຄູ ແລະ ນັກຮຽນພ້ອມກັນສະຫຼຸບສັງລວມ

ກິດຈະກຳທີ 2 ສົນທະນາກ່ຽວກັບຫນ້າທີ່ຂອງພົນລະເມືອງລາວ

- ແບ່ງນັກຮຽນອອກເປັນກຸ່ມຕາມຄວາມເຫມາະສົມ
- ຄູໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄ້ວາຕາມຄຳຖາມ
- ຢາຍຄຳຖາມໃຫ້ແຕ່ລະກຸ່ມ 1 ຄຳຖາມ

1. ຫນ້າທີ່ຂອງພົນລະເມືອງລາວມີຫຍັງແດ່ (ອະທິບາຍ) ?
2. ຫນ້າທີ່ຮັບຜິດຊອບຂອງນັກຮຽນຢູ່ໃນສັງຄົມລາດມີຫຍັງແດ່? (ອະທິບາຍ)
3. ເມື່ອຮູ້ຫນ້າທີ່ຂອງຕົນແລ້ວນັກຂຽນຄວນປະຕິບັດແນວໃດ?

- ຄູໃຫ້ຕາງຫນ້າແຕ່ລະກຸ່ມຂຶ້ນສະເຫນີ
- ນັກຮຽນຫມົດຫ້ອງປະກອບຄຳເຫັນເພີ່ມເຕີມ.

- ຄູ ແລະ ນັກຮຽນສະຫຼຸບ ແລະ ສັງລວມໃນບົດຮຽນ

ຂັ້ນສະຫຼຸບ ເວລາ 10 ນາທີ

- ຄູຖາມຂໍ້ຂ້ອງໃຈ
- ຄູສະຫຼຸບບົດຮຽນໂດຍໃຊ້ແຜນວາດຊ່ວຍຈື່







- ຄູແນະນຳໃຫ້ນັກຮຽນຈົດບົດຮຽນ

ຂັ້ນວັດ ແລະ ປະເມີນ ເວລາ 15 ນາທີ

- ປະເມີນນັກຮຽນດ້ວຍການ: ເຮັດບົດທົດສອບ
    1. ໜ້າທີ່ຂອງພົນລະເມືອງລາວມີໜ້າທີ່ຫຍັງແນ່?
    2. ນັກຮຽນມີໜ້າທີ່ຫຍັງແດ່?
- ສຶກສາແນວຄິດ
- ມອບວຽກບ້ານ: ໃຫ້ນັກຮຽນໄປຊອກຊື່ປະທານປະເທດລາວ, ນາຍົກລັດຖະມົນຕີລາວແຕ່ອາດີດມາເຖິງປັດຈຸບັນ.

5.ການວັດ ແລະ ການປະເມີນຜົນ

ຄູພິຈະລະນາຄວາມສາມາດຂອງນັກຮຽນຈາກ:

- ການຕອບຄຳຖາມຂອງນັກຮຽນ
- ການເຮັດວຽກເປັນກຸ່ມ ການແທແດງຄວາມຄິດເຫັນຂອງນັກຮຽນ. - ແອກຂໍ້ໃດແດ່ຜບພາຍຫຼັງການຮຽນ.

**1.2.ວິເຄາະບົດສອນ (ວິເຄະຫຼັກສູດ)**

1. ດ້ານຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

1. ບອກສິດ ແລະ ຫນ້າທີ່ຂອງພົນລະເມືອງລາວ
2. ອະທິບາຍສິດ ແລະ ຫນ້າທີ່ຂອງພົນລະເມືອງລາວ
3. ປະຕິບັດຕົນໃຫ້ເປັນພົນລະເມືອງດີຂອງຊາດ.

2. ດ້ານເນື້ອໃນ

ບົດທີ 43 ສິດ ແລະ ໜ້າທີ່ຂອງພົນລະເມືອງລາວ

1. ສິດແມ່ນຫຍັງ

ສິໝາຍເຖິງອຳນາດອັນຊອບທຳເຊິ່ງມາຈາກການເຄົາລົບນັບຖືເຊິ່ງກັນ ແລະ ກັນ ເຊັ່ນ: ເຄົາລົບນັບຖືສິດທິຂັ້ນພື້ນຖານ, ຄວາມຈຳເປັນຂອງຊີວິດຄົນ, ກຽດສັກສີ ແລະ ເສລີພາບ, ທຸກຄົນມີສິດເທົ່າທຽມກັນ, ບໍ່ມີໃຜກົດຂີ່ຂົ່ມເຫັງກັນໄດ້ ແລະ ບຸກຄົນມີໜ້າທີ່ຮັບຜິດຊອບ ໃນຖານະເປັນພົນລະເມືອງໃນສັງຄົມຄືກັນ, ທຸກຄົນຕ້ອງໄດ້ຮັບປະກັນໂດຍກົດໝາຍ ແລະ ມີມາດຕະການຮັບປະກັນ ເພື່ອຄຸ້ມຄອງປະຊາຊົນໃຫ້ມີຄວາມເທົ່າທຽມກັນ, ມີຄວາມຍຸດຕິທຳ ແລະ ຢູ່ຮ່ວມກັນຢ່າງມີຄວາມສະຫງົບ.

2. ໜ້າທີ່ຂອງພົນລະເມືອງລາວ

ໃນຖານະເປັນພົນລະເມືອງລາວຕ້ອງໄດ້ປະຕິບັດໜ້າທີ່ຕາມຄວາມຮັບຜິດຊອບ ທີ່ກຳນົດໄວ້ໃນລັດຖະທຳມະນູນຂອງ ສປປ ລາວ.

1) ໜ້າທີ່ເສຍພາສີອາກອນໃຫ້ລັດ.

ພາສີ

ພາສີແມ່ນພັນທະເປັນເງິນທີ່ມອບໃຫ້ລັດໂດຍບຸກຄົນ, ການຈັດຕັ້ງ, ນິຕິບຸກຄົນທີ່ດຳເນີນການສົ່ງອອກ-ນຳເຂົ້າ, ການຜ່ານແດນ ແລະ ການຈໍລະຈອນສິນຄ້າ, ເຄື່ອງຂອງຜ່ານດ່ານພາສີຊາຍແດນຕາມອັດຕາທີ່ໄດ້ກຳນົດໄວ້ ໃນປຶ້ມສາລະບານອັດຕາພາສີ.

ສວຍສາອາກອນ

ສວຍສາອາກອນ ແມ່ນພັນທະຂອງບຸກຄົນ ທີ່ດຳເນີນກິດຈະການ ຫຼື ທຳມາຫາກິນ ຢູ່ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ຕ້ອງໄດ້ປະກອບສ່ວນເຂົ້າໃນພາລະກິດ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ການເສຍພາສີ, ອາກອນໃຫ້ລັດ ເປັນການປະກອບສ່ວນສ້າງສາພັດທະນາປະເທດໃຫ້ຈະເລີນກ້າວໜ້າ.

2) ໜ້າທີ່ໃນການເຕົ້າໂຮງຄວາມສາມັກຄີ

ຄວາມສາມັກຄີແມ່ນກ້ອນກຳລັງແຮງອັນມະຫາສານ ຖ້າມີຄວາມສາມັກຄີແລ້ວ ຈະເຮັດວຽກງານໃດກໍມີຄວາມສຳເລັດ ແລະ ໄດ້ຮັບຜົນດີ ພ້ອມນັ້ນປະເທດຊາດກໍມີຄວາມຈະເລີນເຂັ້ມແຂງດັ່ງຄຳສຸພາສິດທີ່ວ່າ:

"ໄມ້ລຳດຽວອ້ອມຮົ້ວບໍ່ໄຂ່ວ ໄພ່ບໍ່ພ້ອມແປງບ້ານບໍ່ເຮື່ອງ" ດັ່ງນັ້ນ ໜ້າທີ່ອັນສຳຄັນຂອງພົນລະເມືອງລາວ ທຸກຄົນຕ້ອງເຕົ້າໂຮມຄວາມສາມັກຄີທັງພາຍໃນ ແລະ ພາຍນອກ.

3) ໜ້າທີ່ປ້ອງກັນຄວາມສະຫງົບສຸກ

ພົນລະເມືອງລາວທຸກຄົນມີໜ້າທີ່ ແລະ ພັນທະປົກປັກຮັກສາປະເທດຊາດ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດໄວ້ໃຫ້ໝັ້ນຄົງ ແລະ ປົກປ້ອງຄວາມສະຫງົບສຸກຂອງປະຊາຊົນ. ຜູ້ຊາຍທຸກຄົນເມື່ອເຖິງອາຍຸກະສຽນ ຕ້ອງມີໜ້າທີ່ເປັນທະຫານພັນທະ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

4) ໜ້າທີ່ປົກປັກຮັກສາມໍລະດົກ

ຊາດລາວເປັນຊາດໜຶ່ງທີ່ເກົ່າແກ່ ມີວັດທະນະທຳທີ່ເປັນເອກະລັກປະຈຳຊາດມາແຕ່ດົນນານຄື: ມີພາສາ, ຕົວໜັງສື, ສິລະປະວັດທະນະທຳ ແລະ ຮີດຄອງປະເພນີເປັນຂອງຕົນເອງ. ໃນປັດຈຸບັນການຕິດຕໍ່ພົວພັນມີຄວາມສະດວກສະບາຍ ຈຶ່ງພາໃຫ້ວັດທະນະທຳຕ່າງຊາດເຂົ້າມາແຊກຊຶມ ເຊິ່ງເຮັດໃຫ້ວັດທະນະທຳສ່ວນໜຶ່ງ ບໍ່ໄດ້ຮັບການເອົາໃຈໃສ່ ແລະ ປ່ອຍປະລະເລີຍ.

ດັ່ງນັ້ນ ສິ່ງສຳຄັນພົນລະເມືອງລາວທຸກຄົນຈຶ່ງພ້ອມກັນ ປົກປັກຮັກສາວັດທະນະທຳຂອງຊາດໄວ້ໃຫ້ໝັ້ນຄົງ ແລະ ຄວນເລືອກເຟັ້ນນຳໃຊ້ວັດທະນະທຳຕ່າງປະເທດ ທີ່ມີລັກສະນະດີເດັ່ນ, ສວຍງາມເໝາະກັບສະພາບຕົວຈິງຂອງປະເທດເຮົາ.

3. ໜ້າທີ່ຮັບຜິດຊອບຂອງນັກຮຽນໃນສັງຄົມລາວ

ໜ້າທີ່ຮັບຜິດຊອບຂອງນັກຮຽນໃນຖານະເປັນພົນລະເມືອງດີຂອງຊາດປະກອບມີ 3 ໜ້າທີ່ດັ່ງນີ້:

1) ໜ້າທີ່ປະຕິບັດຢູ່ໃນຄອບຄົວ

ນັກຮຽນທຸກຄົນມີໜ້າທີ່ຕ້ອງປະຕິບັດດັ່ງນີ້:

- ເຄົາລົບນັບຖື ແລະ ເຊື່ອຟັງພໍ່ແມ່ ແລະ ຜູ້ໃຫຍ່.

- ຊ່ວຍວຽກຄອບຄົວຕາມຄວາມສາມາຂອງຕົນ.
  - ຮັກສາຊັບສົມບັດຂອງຄອບຄົວໃຫ້ໝັ້ນຄົງ:
  - ຮັກສາກຽດສັກສີ, ຊື່ສຽງຂອງຄອບຄົວ.
  - ຮັກສາລະບຽບວິໄນຂອງຄອບຄົວ.
  - ຮັກສາຄວາມສາມັກຄີ.
  - ມີມາລະຍາດຕໍ່ທຸກຄົນໃນຄອບຄົວ.

2) ໜ້າທີ່ປະຕິບັດຢູ່ໃນໂຮງຮຽນ

ນັກຮຽນທຸກຄົນມີໜ້າທີ່ຕ້ອງປະຕິບັດດັ່ງນີ້:

- ຕັ້ງໃຈຮຽນໜັງສື, ຮັກສາຊັບສົມບັດຂອງໂຮງຮຽນ, ເຄົາລົບ ແລະ ນັບຖືເຊື່ອຟັງຄຳສັ່ງສອນຂອງຄູ.
- ນຸ່ງເຄື່ອງເປັນລະບຽບຕາມໂຮງຮຽນໄດ້ກຳນົດໃຫ້.
- ປະຕິບັດກົດລະບຽບວິໄນຂອງໂຮງຮຽນ.
- ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ຄົບ 5 ມາດຖານຂອງການສຶກສາ: ຄຸນສົມບັດສຶກສາ, ປັນຍາສຶກສາ, ສິລະປະສຶກສາ, ພາລະສຶກສາ ແລະ ແຮງງານສຶກສາ.

3) ໜ້າທີ່ຂອງນັກຮຽນໃນສັງຄົມ

ນັກຮຽນທຸກຄົນຕ້ອງປະພຶດປະຕິບັດຕົນເປັນພົນລະເມືອງດີຢູ່ໃນສັງຄົມເຊັ່ນ: ມີຄຸນສົມບັດດີ, ເຄົາລົບນັບຖື, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ມີຄວາມເມດຕາເອື້ອເຟື້ອເພື່ອແຜ່, ປະຕິບັດລະບຽບກົດໝາຍຂອງບ້ານເມືອງຢ່າງເຂັ້ມງວດ, ມີລະບຽບແບບແຜນໃນການດຳລົງຊີວິດປອດໃສ, ນັບຖືຮີດຄອງປະເພນີອັນດີງາມຂອງຊາດ ແລະ ປົກປັກຮັກສາຊັບສົມບັດຂອງສ່ວນລວມ ແລະ ຮັກສາສະພາບແວດລ້ອມໃຫ້ມີຄວາມສະອາດສວຍງາມ.

3. ດ້ານເວລາ

ຂັ້ນນຳ ເວລາ 5 ນາທີ

ຂັ້ນສອນ ເວລາ 70 ນາທີ

ຂັ້ນສະຫຼຸບ ເວລາ 10 ນາທີ

ຂັ້ນວັດ ແລະ ປະເມີນ ເວລາ 15 ນາທີ

4. ດ້ານສື່ການຮຽນ-ການສອນ

- ເອກະສານທີ່ກ່ຽວຂ້ອງກັບບົດຮຽນ.
- ຮູບພາບກ່ຽວກັບການເກນທະຫານພັນທະ, ການເສຍພາສີປະເພດຕ່າງໆ, ກິດຈະກຳຂອງນັກຮຽນໃນເຮືອນ, ກິດຈະກຳທີ່ນັກຮຽນເຮັດໃນໂຮງຮຽນ.

5. ກິດຈະກຳການຮຽນ-ການສອນ

ກິດຈະກຳທີ 1 ສົນທະນາຖາມຕອບ

ກິດຈະກຳທີ 2 ສົນທະນາກ່ຽວກັບຫນ້າທີ່ຂອງພົນລະເມືອງລາວ

## 2.ດຳເນີນການສອນທົດລອງ

1. ຄັດເລືອກຜູ້ສອນ
2. ດຳເນີນການສອນ
3. ຖອດຖອນບົດຮຽນ

# ກິດຈະກຳທ້າຍບົດ

1) ນັກສຶກສາຈົ່ງດຳເນີນການວິເຄາະຫຼັກສູດ ແລະ ແຕ່ງບົດສອນໃນວິຊາໂລກອ້ອມຕົວປ4 ຫຼື ປ5( ບໍ່ໃຫ້ເລືອກເອົາຫົວຂໍ້ເກົ່າ)

# ເອກະສານອ້າງອີງ


ຄຳປຸ່ນ ກຸນລະວົງ ແລະ ສິງທອງ ສີສະຫວັດ, ແບບຮຽນ ວິທີສອນໂລກອ້ອມຕົວ 1 ສຳລັບສາຍສ້າງຄູປະຖົມ ລະບົບ 3 ປີ ແລະ 2 ປີ, ປີທີ 1, 2008, ໂຮງພິມ Nhan dan printing HCMC.

ສະເຫຼີມສັກ ພາບຸດດີ ພາກວິຊາຫຼັກສູດ ແລະ ວິທີສອນ, 2011, ວິທີສອນປະຫວັດສາດ ສຳລັບນັກສຶກສາຄູປະຫວັດສາດ, ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ, ນະຄອນຫຼວງວຽງຈັນ.

ສີວິໄລ ແກ້ວພິລາວັນ ແລະ ຄຳສຸກ ທອງກ່ານ, 2009, ແບບຮຽນ ວິທີສອນໂລກອ້ອມຕົວ 2 ສຳລັບສາຍສ້າງຄູປະຖົມ ລະບົບ 3 ປີ ແລະ 2 ປີ, ປີທີ 2, ໂຮງພິມ Nhan dan printing HCMC.

ບຸນແຍງ ໄຊຍະວົງ ແລະ ແສງເງິນ ໄວຍະກອນ, ແບບຮຽນ ຄຸນສົມບັດສຶກສາ ແລະ ໂລກອ້ອມຕົວເຮົາ, ຊັ້ນປະຖົມສຶກສາ ປີທີ 4, 2011, ໂຮງພິມບໍລິສັດລັດວິສາຫະກິດໂຮງພິມສຶກສາ ນະຄອນຫຼວງວຽງຈັນ.

ບຸນແຍງ ໄຊຍະວົງ ແລະ ແສງເງິນ ໄວຍະກອນ, ແບບຮຽນ ຄຸນສົມບັດສຶກສາ ແລະ ໂລກອ້ອມຕົວເຮົາ, ຊັ້ນປະຖົມສຶກສາ ປີທີ 5, 2015, ໂຮງພິມບໍລິສັດລັດວິສາຫະກິດໂຮງພິມສຶກສາ ນະຄອນຫຼວງວຽງຈັນ.

ທອງແກ້ວ ອາສາ ແລະ ພອນຈັນ ຄຳບຸນພັນ ພ້ອມຄະນະ, 2009 ຄູ່ມື ໂລກອ້ອມຕົວເຮົາ ຊັ້ນປະຖົມປີທີ5, ໂຮງພິມ Nhan dan printing HCMC.

ຫຼູ່ ໄຊສິງຄາມ ແລະ ອຳພອນ ທຳມະວົງ, 2009, ແບບຮຽນ ວິທີສອນວິທະຍາສາດສັງຄົມ 3 ສຳລັບສາຍສ້າງຄູມັດທະຍົມລະບົບ 3 ປີ ແລະ ລະບົບ 2ປີ ໂຮງພິມ Nhan dan printing HCMC

ຈັນດາ ເທພາລັດະາກວິຊາພູມສາດ,2008, ເອກະສານປະກອບການສອນວິຊາ ວິທີສອນພູມສາດ ສຳລັບນັກສຶກສາປະລິນຍາຕີພູມສາດ ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ, ນະຄອນຫຼວງວຽງຈັນ.

| ໂຄງຮ່າງຫຼັກສູດລາຍວິຊາ<br>ຊື່ວິຊາ: ການສອນວິທະຍາສາດ ແລະ ສິ່ງແວດລ້ອມ 2<br>ຫຼັກສູດສ້າງຄູປະຖົມລະບົບ 12+4<br>ລະຫັດວິຊາ: 0208502 | |
|---|---|
| ລະບົບ-ພາກຮຽນ | ລະບົບ 4 ປີ ພາກຮຽນທີ 5 ປີທີ 3 |
| ຊົ່ວໂມງ | 48 ຊົ່ວໂມງ |
| ຈໍານວນໜ່ວຍກິດ | 2(1-2-2) |
| ອະທິບາຍໜ່ວຍກິດ | ວິຊານີ້ມີ 2 ໜ່ວຍກິດ, ຮຽນທິດສະດີ 1 ຊົ່ວໂມງ, ພາກປະຕິບັດຕົວຈິງ 2 ຊົ່ວໂມງ ແລະ ວຽກບ້ານ 2 ຊົ່ວໂມງ, ໃນນັ້ນ 3 ຊົ່ວໂມງຕໍ່ອາທິດ, ຮຽນທັງໝົດ 16 ອາທິດ້ທີ່ເທົ່າກັບ 48 ຊົ່ວໂມງ |
| ຈຸດປະສົງ | ເພື່ອໃຫ້ນັກສຶກສາຄູສາມາດ<br>- ອະທິບາຍກ່ຽວກັບການຈັດກິດຈະກໍາການຮຽນ-ການສອນວິຊາໂລກອ້ອມຕົວໄດ້<br>- ແຕ່ງບົດສອນ, ວິເຄາະບົດສອນ, ສອນທົດລອງ ແລະ ຖອດຖອນບົດຮຽນວິຊາໂລກອ້ອມຕົວໃນຊັ້ນປະຖົມໄດ້.<br>- ມີຄວາມສະຫງວນມັກຕໍ່ກັບວິຊາໂລກອ້ອມຕົວ ແລະ ນໍາໃຊ້ເຂົ້າໃນການສອນຕົວຈິງຢ່າງມີປະສິດທິຜົນ. |
| ເນື້ອໃນ | |
| ການດໍາເນີນການສອນ | ວິທີດໍາເນີນການຮຽ-ການສອນຢູ່ໃນພາກຮຽນທີ 5 ປີທີ 3 ມີ 3 ຊົ່ວໂມງຕໍ່ອາທິດ ລວມ 48 ຊົ່ວໂມງ. ວິທີການສອນທີ່ໃຊ້ແມ່ນ: ການອະທິບາຍ, ການລະດົມສະໝອງ, ສົນທະນາ, ສາທິດ, ລາຍງານເປັນກຸ່ມ, ລາຍງານບຸກຄົນ, ແຕ່ງບົດສອນ, ວິເຄາະບົດສອນ, ເຝິກສອນ ແລະ ສອນທົດລອງ |
| ອາທິດທີ 1 | ບົດທີ 1 ການສອນວິຊາໂລກອ້ອມຕົວສັງຄົມຊັ້ນປະຖົມສຶກສາ<br>1. ຄວາມໝາຍຂອງການສອນໂລກອ້ອມຕົວສັງຄົມ.<br>2. ຫຼັກການສອນໂລກອ້ອມຕົວສັງຄົມ<br>3. ການນໍາໃຊ້ວິທີສອນເຂົ້າໃນການສອນໂລກອ້ອມຕົວສັງຄົມ |
| ອາທິດທີ 2 | ບົດທີ 1 ຕໍ່ ການສອນວິຊາໂລກອ້ອມຕົວສັງຄົມຊັ້ນປະຖົມສຶກສາ<br>4. ສື່ການສອນໂລກອ້ອມຕົວສັງຄົມ<br>5. ກິດຈະກໍາ-ການຮຽນການສອນໂລກອ້ອມຕົວສັງຄົມ<br>6. ການວັດ ແລະ ປະເມີນຜົນວິຊາໂລກອ້ອມຕົວສັງຄົມ |
| ອາທິດທີ 3 | ບົດທີ 2 ການສອນພູມສາດ<br>1. ການສອນກ່ຽວກັບແຜນທີ່ປະເທດລາວ ປ4<br>2. ການສອນກ່ຽວກັບພູມສັນຖານປະເທດລາວ ປ 5<br>3. ການສອນກ່ຽວກັບແມ່ນໍ້າລໍາເຊ ປ5<br>ແຕ່ງບົດສອນ |

| | |
|---|---|
| | ວິເຄາະບົດສອນ<br>4. ສອນທົດລອງ ແລະ ຖອດຖອນບົດຮຽນ |
| ອາທິດທີ 4 | ບົດທີ 2 ຕໍ່ ການສອນພູມສາດ<br>❑ ສອນທົດລອງ ແແລະ ຖອດຖອນບົດຮຽນ |
| ອາທິທີ 5 | ບົດທີ 2 ຕໍ່ ການສອນພູມສາດ<br>5. ການສອນກ່ຽວກັບການອະນຸລັກປ່າໄມ້ ແລະ ສັດປ່າ ປ 4<br>6. ການສອນກ່ຽວກັບການຄ້າ ແລະ ການບໍລິການ ປ 4<br>- ແຕ່ງບົດສອນ<br>- ວິເຄາະບົດສອນ |
| ອາທິດທີ 6 | ບົດທີ 2 ຕໍ່ ການສອນພູມສາດ<br>7. ສອນທົດລອງ ແແລະ ຖອດຖອນບົດຮຽນ |
| ອາທິດທີ 7 | ບົດທີ 3 ການສອນກ່ຽວກັບປະເທດລາວ<br>1. ການສອນກ່ຽວກັບວັດທະນະທຳ ແລະ ຮີດຄອງປະເພນີ ປ 4<br>2. ການສອນກ່ຽວກັບການຄ້າ ແລະ ການບໍລິການ<br>- ແຕ່ງບົດສອນ<br>- ວິເຄາະບົດສອນ |
| ອາທິດທີ 8 | ບົດທີ 3 ຕໍ່ ການສອນກ່ຽວກັບປະເທດລາວ<br>3.ສອນທົດລອງ ແລະ ຖອດຖອນບົດຮຽນ |
| ອາທິດທີ 9 | ບົດທີ 3 ຕໍ່ ການສອນກ່ຽວກັບປະເທດລາວ<br>4.ການສອນກ່ຽວກັບການທ້ອນໂຮມແຜ່ນດິນຂອງເຈົ້າຟ້າງຸ່ມ<br>• ແຕ່ງບົດສອນ<br>• ວິເຄາະບົດສອນ |
| ອາທິດທີ 10 | ບົດທີ 3 ຕໍ່ ການສອນກ່ຽວກັບປະເທດລາວ<br>5.ສອນທົດລອງ ແລະ ຖອດຖອນບົດຮຽນ |
| ອາທິດທີ 10 | ບົດທີ 4 ການສອນກ່ຽວກັບມໍລະດົກ ແລະວັດທະນະທຳຂອງຊາດ<br>2. ການສອນກ່ຽວກັບມໍລະດົກ ແລະວັດທະນະທຳຂອງຊາດ ປ 5<br>- ແຕ່ງບົດສອນ<br>- ວິເຄາະບົດສອນ |
| ອາທິດທີ 12 | ບົດທີ 4 ຕໍ່ ການສອນກ່ຽວກັບມໍລະດົກ ແລະວັດທະນະທຳຂອງຊາດ<br>2. ສອນທົດລອງ ແລະ ຖອດຖອນບົດຮຽນ |
| ອາທິດທີ 13 | ບົດທີ 5 ການສອນກ່ຽວກັບລະບົບການປົກຄອງຂອງລາວ<br>1. ການສອນກ່ຽວກັບລະບົບການປົກຄອງຂອງລາວ ປ5<br>ການແຕ່ງບົດສອນ<br>ການວິເຄາະບົດສອນ |
| ອາທິດທີ 14 | ບົດທີ 5 ການສອນກ່ຽວກັບລະບົບການປົກຄອງຂອງລາວ<br>2. ສອນທົດລອງ ແລະ ຖອດຖອນບົດຮຽນ |

| | |
|---|---|
| ອາທິດທີ 15 | ບົດທີ 6 ການສອນກ່ຽວກັບສິດ ແລະ ພັນທະຂອງພົນລະເມືອງລາວ<br>1. ການສອນກ່ຽວກັບສິດ ແລະ ພັນທະຂອງພົນລະເມືອງລາວ ປ 5<br>ແຕ່ງບົດສອນ<br>ວິເຄາະບົດສອນ |
| ອາທິດທີ 16 | ບົດທີ 6 ຕໍ່ ການສອນກ່ຽວກັບສິດ ແລະ ພັນທະພົນລະເມືອງລາວ<br>2. ສອນທົດລອງ ແລະ ຖອດຖອນບົດຮຽນ |
| ການປະເມີນຜົນ | ▪ ຮ່ວມຮຽນ 10%<br>▪ ກິດຈະກໍາກຸ່ມ 10%<br>▪ ບຸກຄົນ 20%<br>▪ ສອບເສັງກາງພາກ 20%<br>▪ ສອບເສັງທ້າຍພາກ 40% |
| ເອກະສານອ້າງອີງ | ▪ ວິທີສອນໂລກອ້ອມຕົວ 1 ລະບົບ 3ປີ ແລະ 2 ປີ<br>▪ ປື້ມຫຼັກສູດ ແລະ ການສອນວິຊາໂລກອ້ອມຕົວເຮົາສໍາລັບການສ້າງຄູປະຖົມ ລະບົບ 11+1 ກະຊວງສຶກສາທິການ, ສູຮພັດທະນາຄູ, ປີ 1998<br>▪ ປື້ມຫຼັກສູດ ແລະ ການສອນວິຊາໂລກອ້ອມຕົວເຮົາສໍາລັບການສ້າງຄູປະຖົມ ລະບົບ 11+1 ກະຊວງສຶກສາທິການ, ສູຮພັດທະນາຄູ, ປີ 2004<br>▪ ແບບຮຽນວິຊາໂລກອ້ອມຕົວແຕ່ ປ 1-5<br>▪ ຄູມື76ວິຊາໂລກອ້ອມຕົວແຕ່ ປ 1-5<br>▪ ເອກະສານການເຝິກອົບຮົມ ແລະ ນິເທດ |